# ຄູ່ມືແນະນຳ
## ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແບບມີສ່ວນຮ່ວມ




**ກະກຽມໂດຍ:**

**ກົມປ່າໄມ້ ແລະ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ,**

**ກະຊວງກະສິກຳ ແລະ ສິ່ງແວດລ້ອມ**



**ນະຄອນຫຼວງວຽງຈັນ, ພະຈິກ 2025**

# ຄູ່ມືແນະນຳ
## ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແບບມີສ່ວນຮ່ວມ

**ກະກຽມໂດຍ:**

**ຄະນະຊີ້ນຳ ແລະ ທີມງານວິຊາການຈາກ**
**ກົມປ່າໄມ້ ແລະ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ,**
**ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

**ສະໜັບສະໜູນໂດຍ:**

THE WORLD BANK
IBRD • IDA | WORLD BANK GROUP

Funded by:

Implemented by:

Supported by:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 2192 /ກສ
ນະຄອນຫຼວງວຽງຈັນ, ລົງວັນທີ 12 NOV 2025

# ຂໍ້ຕົກລົງ
## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້
## ຄູ່ມືແນະນຳ ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແບບມີສ່ວນຮ່ວມ

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 19 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການພິຈາລະນາຮັບຮອງ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 57/ຄປຈ, ລົງວັນທີ 30 ພຶດສະພາ 2024;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 1045/ກປມ, ລົງວັນທີ 28 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 3030/ຫກ, ລົງວັນທີ 10 ພະຈິກ 2025.

### ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ **"ຄູ່ມືແນະນຳ ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ແບບມີສ່ວນຮ່ວມ"**.

**ມາດຕາ 2** ມອບໃຫ້ ກົມປ່າໄມ້ ປະສານສົມທົບກັບ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການຈັດຕັ້ງປະຕິບັດ ຄູ່ມືແນະນຳສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3** ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ຂຶ້ນກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຄູ່ມືແນະນຳ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ

## ຄະນະຊີ້ນຳ

ທ່ານ ດຣ. ປອ ສົມຫວັງ ພິມມະວົງ ຫົວໜ້າ ກົມປ່າໄມ້;
ທ່ານ ວິລະນະ ສອນນະສິນ ຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ປອ. ນິວົງ ສີປະເສີດ ຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
ທ່ານ ປອ. ອຸປະກອນ ອາລຸນສະຫວັດ ຮອງຫົວໜ້າ ກົມປ່າໄມ້;
ທ່ານ ປອ. ທັດເທວາ ສະພັງທອງ ຮອງຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ບຸນລັດ ວໍລະຈິດ ຮອງຫົວໜ້າຫ້ອງການກະຊວງກະສິກຳ ແລະ ສິ່ງແວດລ້ອມ;
ທ່ານ ອິດທິພົນ ຈັນທະມາລີ ຮອງຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ປອ. ລີວາເມັງ ລີບົວປາວ ຮອງຫົວໜ້າ ກົມຄຸ້ມຄອງ ແລະພັດທະນາທີ່ດິນ;
ທ່ານ ດຣ. ປອ ທຸມທອນ ວົງວິສຸກ ຮອງຫົວໜ້າ ກົມປ່າໄມ້;
ທ່ານ ອໍລະຫັນ ບຸນຍະພາລົມ ຮອງຫົວໜ້າ ກົມປ່າໄມ້.

## ຄະນະວິຊາການ

ທ່ານ ພາວະນາ ສົມບານເພັງ ຫົວໜ້າ ພະແນກຄຸ້ມຄອງປ່າໄມ້ບ້ານ, ກົມປ່າໄມ້;
ທ່ານ ສຸລະພອນ ອິນທະວົງ ຫົວໜ້າ ພະແນກຄຸ້ມຄອງທຸລະກິດໄມ້ ແລະ ເຄື່ອງປ່າຂອງດົງ, ກົມປ່າໄມ້;
ທ່ານ ຈັນທະສອນ ຄຳໄຊຄ້າຍ ຫົວໜ້າ ພະແນກຄຸ້ມຄອງທີ່ດິນກະສິກຳ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
ທ່ານ ເກື້ອນແກ້ວ ຈັນທະລາ ຫົວໜ້າ ພະແນກສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ຄຳພັນ ປຣະວົງວຽງຄຳ ຫົວໜ້າພະແນກຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ນາງ ແພງດີ ວິໄລວົງ ຫົວໜ້າພະແນກຂົນຂວາຍຊົນເຜົ່າ, ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ;
ທ່ານ ພູຊົງ ວັນນະລາດ ຮອງຫົວໜ້າ ພະແນກຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ໄຕຄຳ ສີສຸກລາດ ຮອງຫົວໜ້າ ພະແນກ ຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ; ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ສູນທອນ ທອງບົວສີ ຮອງຫົວໜ້າພະແນກສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ກົມຄຸ້ມຄອງ ແລະພັດທະນາທີ່ດິນ;
ທ່ານ ພອນປະດິດ ສີວົງສາ ຮອງຫົວໜ້າ ພະແນກຄຸ້ມຄອງທີ່ດິນກະສິກຳ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
ທ່ານ ນາງ ດວງໃຈ ຄູນໄຊດີດາ ຮອງຫົວໜ້າພະແນກ, ກົມຈັດຕັ້ງ-ພະນັກງານ, ສູນກາງສະຫະພັນແມ່ຍິງລາວ;
ທ່ານ ພອນພັນ ຫຼວງອາໄພ ວິຊາການ ພະແນກຄຸ້ມຄອງປ່າໄມ້ບ້ານ, ກົມປ່າໄມ້;
ທ່ານ ພອນສັກດາ ສົມສີທາ ວິຊາການ ພະແນກຄຸ້ມຄອງປ່າໄມ້ບ້ານ, ກົມປ່າໄມ;
ທ່ານ ນາງ ບຸນສົງ ທຳມະວົງ ວິຊາການ ພະແນກນິຕິກຳ, ຫ້ອງການກະຊວງກະສິກຳ ແລະ ສິ່ງແວດລ້ອມ;
ທ່ານ ອາດ ຈັນດາວົງ ວິຊາການ ພະແນກສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ບຸນທັກ ເລສຸລາ ວິຊາການ ພະແນກສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ເປເລ່ ຈັນທະລາສຸກ ວິຊາການ ພະແນກສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ສຸວັນນະສານ ອະຄະມາເຂດ ວິຊາການ ພະແນກສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ນາງ ສຸລິພອນ ບົວພັນ ວິຊາການ ພະແນກຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ;
ທ່ານ ນາງ ສີສຸວຽງ ຈັນທະວິທອງ ວິຊາການ, ກົມຈັດຕັ້ງ-ພະນັກງານ, ສູນກາງສະຫະພັນແມ່ຍິງລາວ.

## ຄູ່ຮ່ວມພັດທະນາ

ທ່ານ ປອ. ໄມກາ ອິງເກີ ຫົວໜ້າໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈໍາພາກພື້ນແມ່ນໍ້າຂອງ (MRLG);
ທ່ານ ນາງ ມະນີໄລ ຜູ້ອໍານວຍຄວາມສະດວກ ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈໍາພາກພື້ນແມ່ນໍ້າຂອງ (MRLG);
ທ່ານ ທົງທອງ ສີຣິວັດ ຫົວໜ້າອົງການບ້ານຈຸດສຸມສາກົນ (VFI);
ທ່ານ ອະນຸສອນ ອິນທະວົງ ອົງການບ້ານຈຸດສຸມສາກົນ (VFI);
ທ່ານ ສີບອນ ລາຊາຣັກ ອົງການບ້ານຈຸດສຸມສາກົນ (VFI);
ທ່ານ ໃຈເພັດ ພິມມະຈັນ ຫົວໜ້າຮ່ວມ ອົງການລີຄອບ RECOFTC;
ທ່ານ ນາງ ຈິນດາ ມີໄລວົງ ອົງການລີຄອບ RECOFTC;
ທ່ານ ນາງ ສຸພາລິນ ສຸລິຍະວົງ ອົງການລີຄອບ RECOFTC.

## ພາກສ່ວນທີ່ມີສ່ວນຮ່ວມ

ມີຫຼາຍອົງການຈັດຕັ້ງທີ່ກ່ຽວຂ້ອງຈາກພາກລັດ, ບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ໄດ້ປະກອບ ສ່ວນຄໍາຄິດເຫັນທາງດ້ານວິຊາການ ແລະ ໃຫ້ການສະໜັບສະໜູນ ທີ່ມີຄຸນຄ່າ ໃນການພັດທະນາຄູ່ມືແນະນໍາສະບັບນີ້.

# ສາລະບານ


**ພາກທີ I ສະພາບລວມ...... 1**

1.1 ຄວາມເປັນມາ...... 1

1.2 ຈຸດປະສົງ ...... 3

1.3 ຫຼັກການ...... 3

1.4 ການຮ່ວມມືສາກົນ ...... 4

**ພາກທີ II ເງື່ອນໄຂການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້...... 4**

2.1 ເງື່ອນໄຂການສຳຫຼວດ ແລະ ຈັດສັນການຮັບຮູ້ສິດນຳໃຊ້ທີ່ດິນ ຢູ່ໃນເຂດທີ່ດິນປ່າໄມ້...... 4

2.2 ເງື່ອນໄຂການຂຶ້ນທະບຽນອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ສັນຍາ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ...... 6

**ພາກທີ III ຂະບວນການ, ບາດກ້າວ ແລະ ຂັ້ນຕອນການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້...... 8**

3.1 ຂະບວນການຈັດຕັ້ງປະຕິບັດ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ...... 8

3.2 ບາດກ້າວ ແລະ ຂັ້ນຕອນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ...... 10

**ບາດກ້າວ 1 ການກະກຽມ ...... 12**

**ຂັ້ນຕອນ 1 ການກະກຽມຢູ່ຫ້ອງການ ...... 12**

1.1 ກຳນົດບ້ານເປົ້າໝາຍ ...... 12

1.2 ລວບລວມຂໍ້ມູນຂອງບ້ານເປົ້າໝາຍ...... 12

1.3 ປະເມີນຄວາມເປັນໄປໄດ້ໃນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້...... 13

1.4 ທົບທວນຄືນແຜນຈັດສັນຄຸ້ມຄອງປ່າໄມ້ ສາມປະເພດປ່າ...... 13

1.5 ທົບທວນຄືນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ທີ່ໄດ້ດຳເນີນຜ່ານມາ...... 13

1.6 ກະກຽມເຄື່ອງມື ແລະ ອຸປະກອນພາກສະໜາມ...... 16

1.7 ກະກຽມແຜນກິດຈະກຳ, ງົບປະມານ ແລະ ຕາຕະລາງເວລາ ...... 16

**ຂັ້ນຕອນ 2 ແຕ່ງຕັ້ງ ຄະນະຊີ້ນຳຂັ້ນເມືອງ ແລະ ທີມງານວິຊາການ ...... 18**

**ຂັ້ນຕອນ 3 ຈັດຝຶກອົບຮົມໃຫ້ທີມງານວິຊາການ ...... 21**

**ຂັ້ນຕອນ 4 ການປະສານງານ ແລະ ນັດບ້ານເປົ້າໝາຍ...... 22**

**ຂັ້ນຕອນ 5 ດຳເນີນວຽກງານເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ (FPIC) ແລະຄວາມສະເໝີພາບຍິງຊາຍໃນວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ...22**

**ບາດກ້າວ 2 ກອງປະຊຸມບ້ານ ແລະ ການເກັບກຳຂໍ້ມູນ...... 23**

**ຂັ້ນຕອນ 1 ຈັດກອງປະຊຸມ ເພື່ອສະເໜີຈຸດປະສົງ, ປະຊາສຳພັນ ແລະ ວຽກງານ ປະຊາສຳພັນຂັ້ນບ້ານ ...... 23**

**ຂັ້ນຕອນ 2 ແຕ່ງຕັ້ງ ຈຸງານກະສິກຳ ແລະ ປ່າໄມ້ບ້ານ...... 24**

**ຂັ້ນຕອນ 3 ການແກ້ໄຂບັນຫາກ່ຽວກັບ ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ...... 25**

**ຂັ້ນຕອນ 4 ການເກັບກຳຂໍ້ມູນ ທາງດ້ານເສດຖະກິດ-ສັງຄົມ, ທີ່ດິນ ແລະ ປ່າໄມ້...... 25**

**ຂັ້ນຕອນ 5 ສັງລວມຂໍ້ມູນ...... 27**

**ບາດກ້າວ 3 ການທົບທວນ ຫຼື ການກຳນົດເຂດຄຸ້ມຄອງຂອງບ້ານ ...... 27**

**ຂັ້ນຕອນ 1 ຈັດກອງປະຊຸມ ທົບທວນ ຫຼື ກຳນົດເຂດຄຸ້ມຄອງແບບມີສ່ວນຮ່ວມກັບ ບ້ານເປົ້າໝາຍ ແລະ ບ້ານອ້ອມຂ້າງ ...... 27**

**ຂັ້ນຕອນ 2 ການສຳຫຼວດພື້ນທີ່ເຂດຄຸ້ມຄອງຂອງບ້ານ...... 28**

ຂັ້ນຕອນ 3 ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ........ 28
ຂັ້ນຕອນ 4 ຮັບຮອງເຂດຄຸ້ມຄອງຂອງບ້ານຮ່ວມກັບບ້ານອ້ອມຂ້າງ ........ 29
**ບາດກ້າວ 4 ການສຳຫຼວດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ... 29**
ຂັ້ນຕອນ 1 ກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມກັບບ້ານ ກ່ຽວກັບເຂດ ແລະ ປະເພດການ ນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ ........ 29
ຂັ້ນຕອນ 2 ສຳຫຼວດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ ........ 29
ຂັ້ນຕອນ 3 ທົບທວນ ຫຼື ສ້າງແຜນຈັດສັນຄຸ້ມຄອງປ່າໄມ້ ຂອງສາມປະເພດປ່າ ........ 30
ຂັ້ນຕອນ 4 ສ້າງແຜນທີ່ດິຈິຕອນເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ ........ 31
ຂັ້ນຕອນ 5 ກວດກາສະພາບພື້ນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຢູ່ໃນຂອບເຂດບ້ານ ກ່ອນ ແລະ ຫຼັງການປະກາດສ້າງຕັ້ງເຂດປ່າໄມ້ ........ 31
**ບາດກ້າວ 5 ການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ........ 31**
ຂັ້ນຕອນ 1 ວິເຄາະຂໍ້ມູນ ທາງດ້ານທີ່ດິນ, ກະສິກຳ - ປ່າໄມ້ ແລະ ດ້ານເສດຖະກິດ-ສັງຄົມ ........ 32
ຂັ້ນຕອນ 2 ກະກຽມເງື່ອນໄຂສຳລັບການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ໃນອະນາຄົດ ........ 33
ຂັ້ນຕອນ 3 ກອງປະຊຸມປຶກສາຫາລືເພື່ອກຳນົດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ແລ້ວ ສ້າງແຜທີ່ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃນອະນາຄົດ ........ 34
ຂັ້ນຕອນ 4 ທົບທວນ ຫຼື ສ້າງລະບຽບກ່ຽວກັບການຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ ........ 36
ຂັ້ນຕອນ 5 ຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ........ 36
ຂັ້ນຕອນ 6 ຈັດກອງປະຊຸມຂັ້ນບ້ານເພື່ອຜ່ານແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ........ 37
ຂັ້ນຕອນ 7 ການຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ........ 37
**ບາດກ້າວ 6 ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້. ........ 38**
ຂັ້ນຕອນ 1 ຈັດປະຊາສຳພັນຍ່ອຍ ........ 38
ຂັ້ນຕອນ 2 ດຳເນີນການສອບຖາມສິດ ແລະ ເກັບກຳຂໍ້ມູນການໄດ້ມາສິດນຳໃຊ້ທີ່ດິນ ........ 38
ຂັ້ນຕອນ 3 ການສຳຫຼວດວັດແທກທີ່ດິນ ແລະ ການສ້າງແຜນທີ່ດິນສະເພາະຕອນ ........ 39
ຂັ້ນຕອນ 4 ຈັດປະເພດສິດນຳໃຊ້ທີ່ດິນ ເພື່ອພິຈາລະນາ ຂຶ້ນທະບຽນອອກໃບຕາດິນ ຫຼື ອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ຫຼື ເຮັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ບ້ານ ແລະ ສັນຍາວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ສ່ວນບຸກຄົນ ........ 39
ຂັ້ນຕອນ 5 ການອອກແຈ້ງການຫາຜູ້ຄັດຄ້ານ ........ 41
ຂັ້ນຕອນ 6 ການພິຈາລະນາ ຂຶ້ນທະບຽນອອກໃບຕາດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ........ 41
ຂັ້ນຕອນ 7 ສ້າງສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ........ 41
ຂັ້ນຕອນ 8 ກອງປະຊຸມສະຫຼຸບວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ........ 44
**ບາດກ້າວ 7 ການເກັບຮັກສາຂໍ້ມູນ ການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ........ 44**
ຂັ້ນຕອນ 1 ການເກັບຮັກສາຂໍ້ມູນ ຂັ້ນບ້ານ ແລະ ຕາແສງ ........ 44
ຂັ້ນຕອນ 2 ການເກັບຮັກສາຂໍ້ມູນ ຂັ້ນເມືອງ ........ 45
ຂັ້ນຕອນ 3 ການເກັບຮັກສາຂໍ້ມູນຂັ້ນແຂວງ ........ 45
ຂັ້ນຕອນ 4 ການເກັບຮັກສາຂໍ້ມູນເອກະສານ ແລະ ອີເລັກໂຕຣນິກ ຢູ່ຂັ້ນສູນກາງ ........ 45
**ບາດກ້າວ 8 ການຈັດຕັ້ງປະຕິບັດແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ........ 45**
**ບາດກ້າວ 9 ການຕິດຕາມ ກວດກາ ແລະ ປະເມີນຜົນ ........ 47**
ຂັ້ນຕອນ 1 ການຕິດຕາມກວດກາ ແຜນຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ຕາມການແບ່ງຂັ້ນຄຸ້ມຄອງ ........ 47

ຂັ້ນຕອນ 2 ການປະເມີນຜົນ ........................................................................................................ 49
ຂັ້ນຕອນ 3 ການຖອນສິດນຳໃຊ້ທີ່ດິນ, ການເສຍສິດນຳໃຊ້ທີ່ດິນ, ການໂຈະຊົ່ວຄາວ ແລະ ການຍົກເລີກສັນຍາ………………………………………………………... 49
ພາກທີ IV ການຈັດຕັ້ງປະຕິບັດ ........................................................................................ 51
ແບບພິມຕ່າງໆ.................................................................................................................. 52

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມປ່າໄມ້

ເລກທີ 0999 /ກປມ
ນະຄອນຫຼວງວຽງຈັນ, ວັນທີ 26 AUG 2025

# ຄູ່ມືແນະນຳ
# ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແບບມີສ່ວນຮ່ວມ

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 19 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການພິຈາລະນາຮັບຮອງ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 57/ຄປຈ, ລົງວັນທີ 30 ພຶດສະພາ 2024;
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມປ່າໄມ້ ສະບັບເລກທີ 1248/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ຄຳສັ່ງ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 1821/ກປ, ລົງວັນທີ 26 ພະຈິກ 2025.

## ພາກທີ I
## ສະພາບລວມ

### 1.1 ຄວາມເປັນມາ

ສປປ ລາວ ໄດ້ກຳນົດ ໃຫ້ມີເນື້ອທີ່ດິນປ່າໄມ້ປົກຫຸ້ມ ບໍ່ໃຫ້ຫຼຸດ 70% (ເຈັດສິບສ່ວນຮ້ອຍ) ຂອງເນື້ອທີ່ດິນໃນຂອບເຂດທົ່ວປະເທດ ຕາມທີ່ໄດ້ກຳນົດໄວ້ ໃນແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ໃນນັ້ນ ບ້ານທີ່ນອນຢູ່ໃນເຂດທີ່ດິນປ່າໄມ້ສາມປະເພດປ່າ (ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ) ຈຳນວນ 3167ບ້ານ ຊຶ່ງໃນໄລຍະທີ່ຜ່ານມາ ບັນດາບ້ານເຫຼົ່ານັ້ນ ຍັງບໍ່ທັນໄດ້ຖືກຮັບຮູ້ສິດນຳໃຊ້ທີ່ດິນ ແລະ ບໍ່ທັນໄດ້ອອກເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ ໃຫ້ແກ່ປະຊາຊົນ. ໂດຍອີງຕາມກົດໝາຍ ວ່າດ້ວຍປ່າໄມ້ ສະບັບປັບປຸງ ປີ 2019 ແລະ ມາດຕາ 44 ຂອງ ກົດໝາຍ ວ່າດ້ວຍທີ່ດິນ ສະບັບປັບປຸງ ປີ 2019 ໄດ້ກຳນົດໃຫ້ຮັບຮູ້ສິດນຳໃຊ້ທີ່ດິນ ຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ກ່ອນການກຳນົດເຂດດັ່ງກ່າວ ເປັນທີ່ດິນປ່າໄມ້ ໂດຍມອບໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສົມທົບກັບກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ແລະ ດຳເນີນການຈັດສັນຄືນໃໝ່ ໃນເຂດທີ່ດິນປ່າໄມ້ແລ້ວອອກໃບຢັ້ງຢືນການນຳໃຊ້ທີ່ດິນຕາມກົດໝາຍ ພ້ອມທັງໃຫ້ປະຊາຊົນໃນເຂດດັ່ງກ່າວ ມີສ່ວນຮ່ວມໃນການປົກປັກ ຮັກສາປ່າໄມ້ ຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍ ວ່າດ້ວຍປ່າໄມ້ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ. ແຕ່ເຖິງຢ່າງໃດກໍ່ຕາມ ຖ້າອີງໃສ່ກົດໝາຍ ວ່າດ້ວຍທີ່ດິນ ແລະ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບປັບປຸງ ປີ 2019 ແລ້ວ ການຮັບຮູ້ສິດນຳໃຊ້ທີ່ດິນ ແກ່ປະຊາຊົນແມ່ນສາມາດ ອອກໄດ້ແຕ່ໃບຢັ້ງຢືນການນຳໃຊ້ທີ່ດິນເທົ່ານັ້ນ (ບໍ່ສາມາດອອກໃບຕາດິນໄດ້) ຊຶ່ງເຮັດໃຫ້ປະຊາຊົນ ທີ່ໄດ້ດຳລົງຊີວິດ ແລະ ທຳການຜະລິດ ຢູ່ໃນເຂດດັ່ງກ່າວ ບໍ່ໄດ້ຮັບສິດນຳໃຊ້ທີ່ດິນເທື່ອ. ສະນັ້ນ, ລັດຖະບານ ຈຶ່ງໄດ້

ນໍາບັນຫາດັ່ງກ່າວ ສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດ ເພື່ອພິຈາລະນາ ກ່ຽວກັບການຮັບຮູ້ສິດນໍາໃຊ້ທີ່ດິນຂອງປະຊາຊົນ ດ້ວຍການຂຶ້ນທະບຽນອອກໃບຕາດິນ ຫຼື ໃບຢັ້ງຢືນການນໍາໃຊ້ທີ່ດິນ, ຈາກນັ້ນ ຄະນະປະຈໍາສະພາແຫ່ງຊາດ ໄດ້ອອກມະຕິ ວ່າດ້ວຍພິຈາລະນາຮັບຮອງ ການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ຕາມການສະເໜີຂອງລັດຖະບານ. ຈາກນັ້ນ ນາຍົກລັດຖະມົນຕີ ໄດ້ອອກຄໍາສັ່ງ ວ່າດ້ວຍການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024. ໂດຍອີງຕາມຄໍາສັ່ງດັ່ງກ່າວ ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໄດ້ອອກແຈ້ງການກ່ຽວກັບການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 4187/ກຊສ, ລົງວັນທີ 15 ພະຈິກ 2024 ແລະ ທ່ານລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ໄດ້ອອກຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດຄໍາສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ສະບັບເລກທີ 1821/ກປ, ລົງວັນທີ 26 ພຶດສະພາ 2025.

ເພື່ອເປັນການຈັດຕັ້ງປະຕິບັດມາດຕາ 44 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ປີ 2019 ນັບແຕ່ທ້າຍປີ 2020 ເປັນຕົ້ນມາ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກໍາ ແລະ ປ່າໄມ້ ໄດ້ສົມທົບກັບອົງການປົກຄອງແຂວງຄໍາມ່ວນ, ຫົວພັນ ແລະ ໄຊຍະບູລີ ພາຍໃຕ້ການສະໜັບສະໜູນທາງດ້ານງົບປະມານ ແລະ ເຕັກນິກ ຈາກໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈໍາພາກພື້ນແມ່ນໍ້າຂອງ (MRLG) ແລະ ໂຄງການ GIZ ຈຶ່ງໄດ້ດໍາເນີນໂຄງການທົດລອງຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຢູ່ບັນດາເມືອງເປົ້າໝາຍຂອງສາມແຂວງດັ່ງກ່າວ ເພື່ອກໍານົດຂັ້ນຕອນ, ເຕັກນິກ, ເຄື່ອງມືສໍາຫຼວດວັດແທກ, ອຸປະກອນຕ່າງໆ ຊຶ່ງຜ່ານການຈັດຕັ້ງປະຕິບັດໂຄງການທົດລອງ ມາຮອດປັດຈຸບັນ ເກືອບ 5 ປີ ຈຶ່ງໄດ້ສະຫຼຸບຖອດຖອນບົດຮຽນ ແລະ ສັງລວມເປັນຄູ່ມືແນະນໍາສະບັບນີ້ ເພື່ອນໍາໃຊ້ໃຫ້ມີຄວາມເປັນເອກະພາບຂອງຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ ໃນຂອບເຂດທົ່ວປະເທດ ຊຶ່ງເປັນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍທີ່ດິນ, ມະຕິຂອງຄະນະປະຈໍາສະພາແຫ່ງຊາດ, ຄໍາສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຂອງປະຊາຊົນທີ່ໄດ້ອາໄສ ແລະ ທໍາການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ດ້ວຍການຂຶ້ນທະບຽນອອກໃບຕາດິນ ຫຼື ອອກໃບຢັ້ງຢືນການນໍາໃຊ້ທີ່ດິນ ຫຼື ເຮັດສັນຍາ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ແນໃສ່ຮັບປະກັນ ໃຫ້ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ໂດຍສະເພາະແມ່ນການຍົກລະດັບອັດຕາຄວາມປົກຫຸ້ມປ່າໄມ້ ແລະ ປົກປັກຮັກສາທີ່ດິນປ່າໄມ້ ໃຫ້ບັນລຸ 70% (ເຈັດສິບສ່ວນຮ້ອຍ) ຂອງເນື້ອທີ່ທົ່ວປະເທດ ຕາມມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນໃນໄລຍະໃໝ່ ສະບັບເລກທີ 026/ຄບສພ, ລົງວັນທີ 03 ສິງຫາ 2017 ກໍຄືມະຕິຂອງສະພາແຫ່ງຊາດວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ສະບັບເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2019 ແນໃສ່ປະກອບສ່ວນເຂົ້າ ໃນການພັດທະນາຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດຕາມ ທິດສີຂຽວ ແລະ ຍືນຍົງ.

ການຈັດຕັ້ງປະຕິບັດວຽກງານການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໄດ້ມີສ່ວນຮ່ວມ ຈາກຫຼາຍພາກສ່ວນ, ໃນນັ້ນ, ອົງການແນວລາວສ້າງຊາດ ກໍແມ່ນຄູ່ຮ່ວມງານໜຶ່ງ ທີ່ມີພາລະບົດບາດໃນການເຕົ້າໂຮມຄວາມສາມັກຄີ ຂອງປະຊາຊົນລາວບັນດາເຜົ່າ, ຜັນຂະຫຍາຍ ແນວທາງນະໂຍບາຍ, ລັດຖະທໍາມະນູນ ແລະ ກົດໝາຍ; ໂຄສະນາ ສຶກສາອົບຮົມ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ນອກຈາກອົງການແນວລາວສ້າງຊາດແລ້ວ ສະຫະພັນແມ່ຍິງລາວ ກໍມີພາລະບົດບາດໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງແມ່ຍິງລາວ, ເສີມຂະ ຫຍາຍສິດເປັນເຈົ້າຂອງແມ່ຍິງລາວບັນດາເຜົ່າ ແລະ ສົ່ງເສີມຄວາມກ້າວໜ້າ, ຄວາມສະເໝີພາບ ຍິງ-ຊາຍ, ປຸກລະດົມ ແມ່ຍິງລາວ ເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ໂດຍສະເພາະການສົ່ງເສີມໃຫ້ແມ່ຍິງໄດ້ມີສ່ວນຮ່ວມ ແລະ ໃຊ້ສິດຂອງຕົນໃນແຕ່ລະຂັ້ນຕອນ ຂອງການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້. ດັ່ງນັ້ນ, ທັງສອງພາກສ່ວນໄດ້ມີບົດບາດ ໃນການດໍາເນີນວຽກງານເສີມຂະຫຍາຍສິດເປັນເຈົ້າ ຫຼື ການເຫັນດີ ເຫັນພ້ອມແບບສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ (FPIC), ຄວາມສະເໝີພາບ ຍິງ-ຊາຍ ແລະ ມີສ່ວນຮ່ວມ ໃນແຕ່ລະບາດກ້າວ ຂອງການຈັດຕັ້ງປະຕິບັດວຽກງານຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້.

### 1.2 ຈຸດປະສົງ

ຄູ່ມືແນະນຳສະບັບນີ້ ໄດ້ກຳນົດ ຫຼັກການ, ລະບຽບການ, ວິທີການ, ຂັ້ນຕອນ, ເງື່ອນໄຂ ແລະ ເຕັກນິກໃນການຈັດຕັ້ງປະຕິບັດວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ; ເປັນເຄື່ອງມືຝຶກອົບຮົມ ແລະ ຈັດຕັ້ງປະຕິບັດຕົວຈິງ ໃຫ້ ຂັ້ນສູນກາງ ແລະ ທ້ອງຖິ່ນ (ແຂວງ, ເມືອງ), ຄູ່ຮ່ວມພັດທະນາ ແລະ ໂຄງການຕ່າງໆ.

### 1.3 ຫຼັກການ

1) ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ, ຄຳສັ່ງຂອງນາຍົກລັດຖະມົນຕີ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຈັດສັນຄຸ້ມຄອງປ່າໄມ້ສາມປະເພດປ່າ, ແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ, ແຜນຍຸດທະສາດ, ແຜນນຳໃຊ້ທີ່ດິນ ລວມທັງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍສະເພາະ ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ແຜນການນຳໃຊ້ທີ່ດິນ ຂອງຂະແໜງການ, ຈຸດພິເສດ, ເງື່ອນໄຂ, ທ່າແຮງ, ທີ່ຕັ້ງທາງດ້ານພູມສັນຖານ ແລະ ຊັບພະຍາກອນທຳມະຊາດ;
2) ຄຸ້ມຄອງການນຳໃຊ້ທີ່ດິນຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ພ້ອມທັງຮັບປະກັນບໍ່ໃຫ້ທີ່ດິນ ຂອງລັດສູນເສຍ;
3) ຮັບປະກັນການຮັກສາເນື້ອທີ່ດິນກະສິກຳ ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ, ເນື້ອທີ່ດິນທີ່ຈະນຳໃຊ້ ແລະ ພັດທະນາ ສາມສິບສ່ວນຮ້ອຍ ແລະ ເນື້ອທີ່ດິນປ່າໄມ້ປົກຫຸ້ມບໍ່ໃຫ້ຫຼຸດ ເຈັດສິບສ່ວນຮ້ອຍ ຂອງເນື້ອທີ່ດິນທົ່ວປະເທດ;
4) ຮັບປະກັນ ການປະສານສົມທົບ ລະຫວ່າງຂະແໜງການ ແລະ ອົງການປົກຄອງຂັ້ນເມືອງ ໃນການດຳເນີນການຈັດຕັ້ງປະຕິບັດບົນພື້ນຖານຫຼັກການແບບມີສ່ວນຮ່ວມ ຈາກທຸກພາກສ່ວນ;
5) ຮັບປະກັນ ການມີສ່ວນຮ່ວມ ຂອງປະຊາຊົນລາວບັນດາເຜົ່າ, ແມ່ຍິງ, ຜູ້ດ້ອຍໂອກາດ ແລະ ຄົນພິການ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້, ພ້ອມທັງ ອະນຸລັກຊີວະນາໆພັນ ໄປຄຽງຄູ່ກັບການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນໃຫ້ດີຂຶ້ນ;
6) ຮັບປະກັນການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ມີຄວາມລະອຽດຊັດເຈນ ແລະ ຍືນຍົງເປັນຂໍ້ມູນພື້ນຖານໃຫ້ແກ່ການພັດທະເສດຖະກິດ-ສັງຄົມຂອງຊາດ ແລະ ຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ໃຫ້ເຂົ້າສູ່ລວງເລິກ.

### 1.4 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບ ວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນ ຂອງປະຊາຊົນທີ່ອາໄສ ແລະ ທຳການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ກ່ອນການກຳນົດເປັນທີ່ດິນປ່າໄມ້ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ເງື່ອນໄຂການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

### 2.1 ເງື່ອນໄຂການສຳຫຼວດ ແລະ ຈັດສັນການຮັບຮູ້ສິດນຳໃຊ້ທີ່ດິນ ຢູ່ໃນເຂດທີ່ດິນປ່າໄມ້

ການສຳຫຼວດ ແລະ ຈັດສັນ ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ໃຫ້ປະຕິບັດຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ຄຳສັ່ງ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024, ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ວ່າ

ດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ສະບັບເລກທີ 1821/ກປ, ລົງວັນທີ 26 ພຶດສະພາ 2025, ດຳລັດປະກາດ ສ້າງຕັ້ງແຕ່ລະແຫ່ງ, ມະຕິຕົກລົງ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນມີນາ 2012 ສະບັບເລກທີ 04/ລບ, ລົງວັນທີ 05 ເມສາ 2012 ແລະ ຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ທີ່ກ່ຽວຂ້ອງ ຕາມຈຸດພິເສດ ຂອງແຕ່ລະປະເພດປ່າ ດັ່ງນີ້:

1) **ການສຳຫຼວດ, ເກັບກຳຂໍ້ມູນ ຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ໃນເຂດທີ່ດິນປ່າສະຫງວນແຫ່ງຊາດ, ປ່າສະຫງວນລະດັບແຂວງ ແລະ ປ່າສະຫງວນລະດັບເມືອງ ໃຫ້ປະຕິບັດ ດັ່ງນີ້:**
   - ການນຳໃຊ້ເນື້ອທີ່ດິນ ຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ເຂດທີ່ດິນປ່າສະຫງວນແຫ່ງຊາດ ກ່ອນການສ້າງຕັ້ງ ຕາມດຳລັດ ວ່າດ້ວຍການສ້າງຕັ້ງປ່າສະຫງວນແຫ່ງຊາດແຕ່ລະແຫ່ງ ແລະ ຢູ່ເຂດທີ່ດິນປ່າສະຫງວນລະດັບແຂວງ ແລະ ປ່າສະຫງວນລະດັບເມືອງ ກ່ອນຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ຮັບຮອງແຕ່ລະແຫ່ງ ໃຫ້ຕັດເນື້ອທີ່ດິນປຸກສ້າງ ແລະ ດິນກະສິກຳຖາວອນ (ດິນນາ) ອອກຈາກເນື້ອທີ່ດິນປ່າໄມ້ດັ່ງກ່າວແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຂຶ້ນທະບຽນອອກໃບຕາດິນ;
   - ການນຳໃຊ້ເນື້ອທີ່ດິນຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ເຂດທີ່ດິນປ່າສະຫງວນແຫ່ງຊາດ ຫຼັງການສ້າງຕັ້ງ ຕາມດຳລັດ ວ່າດ້ວຍການສ້າງຕັ້ງປ່າສະຫງວນແຕ່ລະແຫ່ງ ແລະ ຢູ່ເຂດທີ່ດິນປ່າສະຫງວນລະດັບແຂວງ ແລະ ປ່າສະຫງວນລະດັບເມືອງ ຫຼັງຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າ ແຂວງ ຮັບຮອງແຕ່ລະແຫ່ງ ຫາ ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໃຫ້ດຳເນີນການຂຶ້ນທະບຽນອອກໃບຢັ້ງຢືນການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນທຳການຜະລິດ (ທີ່ດິນນາ, ທີ່ດິນສວນປູກພືດກະສິກຳ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ) ໃນເນື້ອທີ່ບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ໃນກຳນົດເວລາ ຫ້າສິບປີ ແລະ ມີການກຳນົດເງື່ອນໄຂການນຳໃຊ້ທີ່ດິນໃສ່ໃບຢັ້ງຢືນດັ່ງກ່າວ. ສຳລັບທີ່ດິນທຳການຜະລິດ ອະນຸຍາດໃຫ້ດຳເນີນກິດຈະການ ປູກໄມ້, ປູກເຄື່ອງປ່າຂອງດົງ, ປູກພືດກະສິກຳ ແລະ ກະສິກຳ-ປ່າໄມ້ແບບປະສົມປະສານ, ແຕ່ຕ້ອງໄດ້ປະຕິບັດພັນທະໃນການປູກໄມ້ ແລະ ປົກປັກຮັກສາປ່າໄມ້ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວ ສ່ວນຮ້ອຍຂຶ້ນໄປ ໃສ່ຕອນດິນດັ່ງກ່າວ ຊຶ່ງທີ່ດິນຕອນດັ່ງກ່າວ ຍັງແມ່ນທີ່ດິນປ່າໄມ້, ຖ້າເນື້ອທີ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ຕ້ອງເຮັດສັນຍາເຊົ່າ, ສຳປະທານ ຫຼື ສົ່ງຄືນລັດ;
   - ການນຳໃຊ້ເນື້ອທີ່ດິນ ຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ເຂດທີ່ດິນປ່າສະຫງວນແຫ່ງຊາດ, ປ່າສະຫງວນລະດັບແຂວງ ແລະ ປ່າສະຫງວນລະດັບເມືອງ ຕັ້ງແຕ່ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ຫາ ການປະກາດໃຊ້ ຄຳສັ່ງ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ໃຫ້ດຳເນີນການສ້າງສັນຍາວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ ( ທີ່ດິນປຸກສ້າງ ແລະ ທີ່ດິນນາ ) ຕາມແບບພິມ ສ-ປມ3. ສຳລັບທີ່ດິນສວນປູກພືດກະສິກຳ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ ໃຫ້ດຳເນີນການສ້າງສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແບບພິມ ສ-ປມ2 ໂດຍມອບໃຫ້ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ສ້າງສັນຍາດັ່ງກ່າວ ໃນເນື້ອທີ່ບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ໃນກຳນົດເວລາ ຫ້າສິບ ປີ ແລະ ມີການກຳນົດເງື່ອນໄຂການນຳໃຊ້ທີ່ດິນໃສ່ສັນຍາດັ່ງກ່າວ. ສຳລັບທີ່ດິນທຳການຜະລິດ ອະນຸຍາດໃຫ້ດຳເນີນກິດຈະການປູກໄມ້, ປູກເຄື່ອງປ່າຂອງດົງ, ປູກພືດກະສິກຳ ແລະ ກະສິກຳ-ປ່າໄມ້ແບບປະສົມປະສານ, ແຕ່ຕ້ອງໄດ້ປະຕິບັດພັນທະໃນການປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວ ສ່ວນຮ້ອຍຂຶ້ນໄປໃສ່ຕອນດິນດັ່ງກ່າວ ຊຶ່ງທີ່ດິນຕອນດັ່ງກ່າວ ຍັງແມ່ນທີ່ດິນປ່າໄມ້, ຖ້າເນື້ອທີ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ຕ້ອງເຮັດສັນຍາເຊົ່າ, ສຳປະທານ ຫຼື ສົ່ງຄືນລັດ.
2) ການສຳຫຼວດ, ເກັບກຳຂໍ້ມູນຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າຜະລິດ ຕາມດຳລັດ ປະກາດສ້າງຕັ້ງ ໃຫ້ປະຕິບັດ ດັ່ງນີ້:

- ການນຳໃຊ້ເນື້ອທີ່ດິນຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ເຂດທີ່ດິນປ່າຜະລິດ ກ່ອນການສ້າງຕັ້ງ ຕາມດຳລັດ ວ່າດ້ວຍການກຳນົດເຂດປ່າຜະລິດແຫ່ງຊາດແຕ່ລະແຫ່ງ ໃຫ້ຕັດເນື້ອທີ່ດິນປຸກສ້າງ ແລະ ດິນກະສິກຳຖາວອນ (ດິນນາ) ອອກຈາກເນື້ອທີ່ດິນປ່າໄມ້ດັ່ງກ່າວແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຂຶ້ນທະບຽນອອກໃບຕາດິນ;
- ການນຳໃຊ້ເນື້ອທີ່ດິນຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ເຂດທີ່ດິນປ່າຜະລິດ ຫຼັງການສ້າງຕັ້ງ ຕາມດຳລັດ ວ່າດ້ວຍການກຳນົດເຂດປ່າຜະລິດແຫ່ງຊາດແຕ່ລະແຫ່ງ ຫາ ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໃຫ້ດຳເນີນການຂຶ້ນທະບຽນອອກໃບຢັ້ງຢືນການນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ຕໍ່ກັບທີ່ດິນປຸກສ້າງ ແລະ ທີ່ດິນທຳການຜະລິດ (ທີ່ດິນນາ, ທີ່ດິນສວນປູກພືດກະສິກຳ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ) ໃນເນື້ອທີ່ບໍ່ເກີນ ຊາວເຮັກ ຕາຕໍ່ຄອບຄົວ ໃນກຳນົດເວລາ ຫ້າສິບ ປີ ແລະ ມີການກຳນົດເງື່ອນໄຂການນຳໃຊ້ທີ່ດິນໃສ່ໃບຢັ້ງຢືນດັ່ງກ່າວ. ສຳລັບທີ່ດິນທຳການຜະລິດ ອະນຸຍາດໃຫ້ດຳເນີນກິດຈະການປູກໄມ້, ປູກເຄື່ອງປ່າຂອງດົງ, ປູກພືດກະສິກຳ ແລະ ກະສິກຳ-ປ່າໄມ້ແບບປະສົມປະສານ, ແຕ່ຕ້ອງໄດ້ປະຕິບັດພັນທະໃນການປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວ ສ່ວນຮ້ອຍຂຶ້ນໄປ ໃສ່ຕອນດິນດັ່ງກ່າວ ຊຶ່ງທີ່ດິນຕອນດັ່ງກ່າວ ຍັງແມ່ນທີ່ດິນປ່າໄມ້, ຖ້າເນື້ອທີ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ຕ້ອງເຮັດສັນຍາເຊົ່າ, ສຳປະທານ ຫຼື ສິ່ງຄືນລັດ;
- ການນຳໃຊ້ເນື້ອທີ່ດິນຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ເຂດທີ່ດິນປ່າຜະລິດ ຕັ້ງແຕ່ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ຫາ ການປະກາດໃຊ້ ຄຳສັ່ງ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ໃຫ້ດຳເນີນການສ້າງສັນຍາວ່າດ້ວຍການ ການນຳໃຊ້ ທີ່ດິນປ່າໄມ້ (ທີ່ດິນປຸກສ້າງ ແລະ ທີ່ດິນນາ) ຕາມແບບພິມ ສ-ປມ3. ສຳລັບທີ່ດິນສວນປູກພືດກະສິກຳ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ ໃຫ້ດຳເນີນການສ້າງສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແບບພິມ ສ-ປມ2 ໂດຍມອບໃຫ້ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ສ້າງສັນຍາດັ່ງກ່າວ ໃນເນື້ອທີ່ບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ໃນກຳນົດເວລາ ຫ້າສິບ ປີ ແລະ ມີການກຳນົດເງື່ອນໄຂການນຳໃຊ້ທີ່ດິນໃສ່ສັນຍາດັ່ງກ່າວ. ສຳລັບທີ່ດິນທຳການຜະລິດ ອະນຸຍາດໃຫ້ ດຳເນີນກິດຈະການ ປູກໄມ້, ປູກເຄື່ອງປ່າຂອງດົງ, ປູກພືດກະສິກຳ ແລະ ກະສິກຳ-ປ່າໄມ້ແບບປະສົມປະສານ, ແຕ່ຕ້ອງໄດ້ປະຕິບັດພັນທະໃນການປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວ ສ່ວນຮ້ອຍຂຶ້ນໄປ ໃສ່ຕອນດິນດັ່ງກ່າວ ຊຶ່ງທີ່ດິນຕອນດັ່ງກ່າວຍັງແມ່ນທີ່ດິນປ່າໄມ້, ຖ້າເນື້ອທີ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ຕ້ອງເຮັດສັນຍາເຊົ່າ, ສຳປະທານ ຫຼື ສິ່ງຄືນລັດ.

**3)** ການສຳຫຼວດ, ເກັບກຳຂໍ້ມູນ ຂອງປະຊາຊົນ ທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນລະດັບແຂວງ ແລະ ປ່າປ້ອງກັນລະດັບເມືອງ ໃຫ້ປະຕິບັດ ດັ່ງນີ້:

- ການນຳໃຊ້ເນື້ອທີ່ດິນ ຂອງປະຊາຊົນທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ເຂດທີ່ດິນປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນລະດັບແຂວງ ແລະ ປ່າປ້ອງກັນລະດັບເມືອງ ກ່ອນການຮັບຮອງເຂດທີ່ດິນປ່າປ້ອງກັນ ແຕ່ລະແຫ່ງ ຕາມມະຕິຕົກລົງ ຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນ ມີນາ 2012 ໃຫ້ຕັດເນື້ອທີ່ດິນປຸກສ້າງ ແລະ ດິນກະສິກຳຖາວອນ (ດິນນາ) ອອກຈາກເນື້ອທີ່ດິນປ່າໄມ້ດັ່ງກ່າວ ແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຂຶ້ນທະບຽນອອກໃບຕາດິນ;
- ການນຳໃຊ້ເນື້ອທີ່ດິນຂອງປະຊາຊົນທີ່ໄດ້ອາໄສ ແລະ ທຳການຜະລິດ ຢູ່ເຂດທີ່ດິນປ່າປ້ອງກັນ ແຫ່ງຊາດ, ປ່າປ້ອງກັນລະດັບແຂວງ ແລະ ປ່າປ້ອງກັນລະດັບເມືອງ ຫຼັງການຮັບຮອງເຂດທີ່ດິນປ່າປ້ອງກັນແຕ່ລະແຫ່ງ ຕາມມະຕິຕົກລົງ ຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນມີນາ 2012 ຫາ ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໃຫ້ດຳເນີນການຂຶ້ນທະ

ບຽນອອກໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕໍ່ກັບທີ່ດິນປຸກສ້າງ ແລະ ທີ່ດິນທໍາການຜະລິດ (ທີ່ດິນນາ, ທີ່ດິນສວນປູກພືດກະສິກໍາ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ) ໃນເນື້ອທີ່ບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ໃນກໍານົດເວລາ ຫ້າສິບ ປີ ແລະ ມີການກໍານົດເງື່ອນໄຂການນໍາໃຊ້ທີ່ດິນໃສ່ໃບຢັ້ງຢືນດັ່ງກ່າວ. ສໍາລັບທີ່ດິນທໍາການຜະລິດ ອະນຸຍາດໃຫ້ດໍາເນີນກິດຈະການປູກໄມ້, ປູກເຄື່ອງປ່າຂອງດົງ, ປູກພືດກະສິກໍາ ແລະ ກະສິກໍາ-ປ່າໄມ້ແບບປະສົມປະສານ, ແຕ່ຕ້ອງໄດ້ປະຕິບັດພັນທະໃນການປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວ ສ່ວນຮ້ອຍຂຶ້ນໄປໃສ່ຕອນດິນດັ່ງກ່າວ ຊຶ່ງທີ່ດິນຕອນດັ່ງກ່າວ ຍັງແມ່ນທີ່ດິນປ່າໄມ້, ຖ້າເນື້ອທີ່ເກີນ ຊາວ ເຮັກຕາຕໍ່ຄອບຄົວຕ້ອງເຮັດສັນຍາເຊົ່າ, ສໍາປະທານ ຫຼື ສົ່ງຄືນລັດ;

- ການນໍາໃຊ້ເນື້ອທີ່ດິນຂອງປະຊາຊົນທີ່ໄດ້ອາໄສ ແລະ ທໍາການຜະລິດ ຢູ່ເຂດທີ່ດິນປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນລະດັບແຂວງ ແລະ ປ່າປ້ອງກັນລະດັບເມືອງ ຕັ້ງແຕ່ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ໃຫ້ດໍາເນີນການສ້າງສັນຍາວ່າດ້ວຍການນໍາໃຊ້ ທີ່ດິນປ່າໄມ້ (ທີ່ດິນປຸກສ້າງ ແລະ ທີ່ດິນນາ) ຕາມແບບພິມ ສ-ປມ3. ສໍາລັບທີ່ດິນສວນປູກພືດກະສິກໍາ, ທີ່ດິນລ້ຽງສັດ, ທີ່ດິນສວນປູກໄມ້ ແລະ ທີ່ດິນໜອງປາ ໃຫ້ດໍາເນີນການສ້າງສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແບບພິມ ສ-ປມ2 ໂດຍມອບໃຫ້ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ສ້າງສັນຍາດັ່ງກ່າວ ໃນເນື້ອທີ່ບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ໃນກໍານົດເວລາ ຫ້າສິບ ປີ ແລະ ມີການກໍານົດເງື່ອນໄຂການນໍາໃຊ້ທີ່ດິນໃສ່ສັນຍາດັ່ງກ່າວ. ສໍາລັບທີ່ດິນທໍາການຜະລິດ ອະນຸຍາດໃຫ້ດໍາເນີນກິດຈະການ ປູກໄມ້, ປູກເຄື່ອງປ່າຂອງດົງ, ປູກພືດກະສິກໍາ ແລະ ກະສິກໍາ-ປ່າໄມ້ແບບປະສົມປະສານ, ແຕ່ຕ້ອງໄດ້ປະຕິບັດພັນທະໃນການປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວ ສ່ວນຮ້ອຍຂຶ້ນໄປ ໃສ່ຕອນດິນດັ່ງກ່າວ ຊຶ່ງທີ່ດິນຕອນດັ່ງກ່າວ ຍັງແມ່ນທີ່ດິນປ່າໄມ້, ຖ້າເນື້ອທີ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ຕ້ອງເຮັດສັນຍາເຊົ່າ, ສໍາປະທານ ຫຼື ສົ່ງຄືນລັດ.

**2.2 ເງື່ອນໄຂການຂຶ້ນທະບຽນອອກໃບຕາດິນ, ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້**

ກ່ອນການຂຶ້ນທະບຽນອອກ ໃບຕາດິນ, ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຄອບຄົວໃດໜຶ່ງ, ບ້ານດັ່ງກ່າວ ຕ້ອງໄດ້ຮັບການສ້າງ ແລະ ທົບທວນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ສໍາເລັດກ່ອນ ແລ້ວສະເໜີຕໍ່ ຄະນະກໍາມະການປົກຄອງຂັ້ນແຂວງ ພິຈາລະນາເພື່ອນໍາສະເໜີສະພາປະຊາຊົນຂັ້ນແຂວງ ຮັບຮອງ ຈຶ່ງມີການດໍາເນີນການສອບຖາມສິດ ແລະ ເກັບກໍາຂໍ້ມູນການໄດ້ສິດຄອບຄອງ ແລະ ນໍາໃຊ້ທີ່ດິນ ໂດຍນໍາໃຊ້ເຄື່ອງມືທີ່ທັນສະໄໝ, ພາບຖ່າຍທາງອາກາດ ແລະ ອື່ນໆ ເພື່ອໃຫ້ມີຄວາມໂປ່ງໃສ, ສາມາດກວດສອບໄດ້ ພ້ອມທັງສອດຄ່ອງກັບ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ຄໍາສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ແລະ ນິຕິກໍາທີ່ກ່ຽວຂ້ອງ.

ນອກຈາກເງື່ອນໄຂລວມແລ້ວ, ຍັງຕ້ອງປະຕິບັດຕາມເງື່ອນໄຂສະເພາະຂອງການຂຶ້ນທະບຽນອອກໃບຕາດິນ ແລະ ໃບຢັ້ງຢືນການນໍາໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ສັນຍາການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ດັ່ງນີ້:

**1) ເງື່ອນໄຂການຂຶ້ນທະບຽນອອກໃບຕາດິນ**

- ບຸກຄົນ ຫຼື ຄອບຄົວ ທີ່ຕັ້ງພູມລໍາເນົາ, ອາໄສ ແລະ ທໍາການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ທີ່ມີສໍາມະໂນຄົວຢູ່ບ້ານບ່ອນທີ່ດິນຕັ້ງຢູ່;
- ຖ້າບຸກຄົນ ຫຼື ຄອບຄົວ ທີ່ມີສໍາມະໂນຄົວຢູ່ບ້ານອື່ນ ແຕ່ໄດ້ອາໄສ ແລະ ທໍາການຜະລິດ ຢູ່ໃນເຂດທີ່ດິນປ່າ

ໄມ້ ຕ້ອງໄດ້ມີເອກະສານຢັ້ງຢືນ ກ່ຽວກັບການໄດ້ມາຂອງສິດນຳໃຊ້ທີ່ດິນຢ່າງຄົບຖ້ວນ ແລະ ຕໍ່ເນື່ອງ ຂອງຕອນດິນດັ່ງກ່າວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ;

- ເປັນບ້ານ ທີ່ໄດ້ສຳເລັດການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ເປັນຕອນດິນທີ່ນຳໃຊ້ແບບຖາວອນ ເຊັ່ນ: ດິນປຸກສ້າງທີ່ຢູ່ອາໄສ ແລະ ດິນທຳການຜະລິດ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານໄດ້ກຳນົດໄວ້;
- ມີເອກະສານຢັ້ງຢືນ ຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບ ການເຂົ້າຄອບຄອງ ແລະ ນຳໃຊ້ຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍ່ໄດ້ຮັບການແກ້ໄຂແລ້ວ;
- ໄດ້ເສຍພາສີ ຫຼື ອາກອນທີ່ດິນ ປະຈຳປີ ເປັນປົກກະຕິ.

**2) ເງື່ອນໄຂການອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້**

- ບຸກຄົນ ຫຼື ຄອບຄົວ ທີ່ຕັ້ງພູມລຳເນົາ, ອາໄສ ແລະ ທຳການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ທີ່ມີສຳມະໂນຄົວຢູ່ບ້ານບ່ອນທີ່ດິນຕັ້ງຢູ່;
- ຖ້າບຸກຄົນ ຫຼື ຄອບຄົວ ທີ່ມີສຳມະໂນຄົວຢູ່ບ້ານອື່ນ ແຕ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ຕ້ອງໄດ້ມີເອກະສານຢັ້ງຢືນ ກ່ຽວກັບການໄດ້ມາຂອງສິດນຳໃຊ້ທີ່ດິນ ຢ່າງຄົບຖ້ວນ ແລະ ຕໍ່ເນື່ອງຂອງຕອນດິນດັ່ງກ່າວ ຖືກຕ້ອງຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງກຳນົດ;
- ເປັນບ້ານ ທີ່ໄດ້ສຳເລັດການວາງແຜນຄຸ້ມຄອງປ່າໄມ້ບ້ານ;
- ເປັນຕອນດິນທີ່ນອນໃນເຂດທີ່ດິນປ່າໄມ້ ແຕ່ລັດໄດ້ອະນຸຍາດໃຫ້ປະຊາຊົນນຳໃຊ້ ເພື່ອທີ່ຢູ່ອາໄສ ແລະ ທຳການຜະລິດ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານກຳນົດ;
- ມີເອກະສານຢັ້ງຢືນ ຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບ ການເຂົ້າຄອບຄອງ ແລະ ນຳໃຊ້ຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍ່ໄດ້ຮັບການແກ້ໄຂແລ້ວ;
- ໄດ້ເສຍພາສີ ຫຼື ອາກອນທີ່ດິນ ປະຈຳປີ ເປັນປົກກະຕິ;
- ປະຕິບັດເງື່ອນໄຂ ທີ່ກຳນົດໄວ້ໃນໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ເປັນຕົ້ນ ເງື່ອນໄຂການນຳໃຊ້ທີ່ດິນ, ເງື່ອນໄຂດ້ານເນື້ອທີ່ບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ (ຖ້າເກີນ ຊາວ ເຮັກຕາ ຕ້ອງເຮັດສັນຍາເຊົ່າ, ສຳປະທານ ນຳລັດ) ແລະ ອາຍຸໃບຢັ້ງຢືນ ຫ້າສິບ ປີ, ແຕ່ໃນໄລຍະເວລາດັ່ງກ່າວ ຫາກບໍ່ປະຕິບັດຕາມເງື່ອນໄຂ ທີ່ກຳນົດໄວ້ໃນໃບຢັ້ງຢືນ ຈະຖືກຖອນສິດໃບຢັ້ງຢືນການນຳໃຊ້ ເພື່ອຈັດສັນທີ່ດິນຕອນດັ່ງກ່າວຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 144 ແລະ 145 ຂອງກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ລະບຽບການກ່ຽວຂ້ອງ.

**3) ເງື່ອນໄຂເຮັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້**

- ບຸກຄົນ ຫຼື ຄອບຄົວ ທີ່ຕັ້ງພູມລຳເນົາ, ອາໄສ ແລະ ທຳການຜະລິດ ຢູ່ໃນເຂດທີ່ດິນປ່າໄມ້ ທີ່ມີສຳມະໂນຄົວຢູ່ບ້ານບ່ອນດິນຕັ້ງຢູ່;
- ຖ້າ ບຸກຄົນ ຫຼື ຄອບຄົວ ທີ່ມີສຳມະໂນຄົວຢູ່ບ້ານອື່ນ ແຕ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດທີ່ດິນປ່າໄມ້ ຕ້ອງໄດ້ມີເອກະສານຢັ້ງຢືນ ກ່ຽວກັບການໄດ້ມາຂອງສິດນຳໃຊ້ທີ່ດິນ ຢ່າງຄົບຖ້ວນ ແລະ ຕໍ່ເນື່ອງຂອງຕອນດິນດັ່ງກ່າວ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ;
- ເປັນບ້ານທີ່ໄດ້ສຳເລັດການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ເປັນຕອນດິນ ທີ່ນອນໃນເຂດທີ່ດິນປ່າໄມ້ ແຕ່ລັດໄດ້ອະນຸຍາດໃຫ້ປະຊາຊົນນຳໃຊ້ ເພື່ອທີ່ຢູ່ອາໄສ ແລະ ທຳການຜະລິດ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານກຳນົດ;
- ມີເອກະສານຢັ້ງຢືນ ຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບ ການເຂົ້າຄອບຄອງ ແລະ ນຳໃຊ້ຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍ່ໄດ້ຮັບການແກ້ໄຂແລ້ວ;
- ໄດ້ເສຍພາສີ ຫຼື ອາກອນທີ່ດິນ ປະຈຳປີເປັນປົກກະຕິ;
- ປະຕິບັດເງື່ອນໄຂ ທີ່ກຳນົດໄວ້ໃນສັນຍາ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນຕົ້ນ ເງື່ອນໄຂການນຳໃຊ້ທີ່ດິນ, ເງື່ອນໄຂດ້ານເນື້ອທີ່ບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ (ຖ້າເກີນ ຊາວ ເຮັກຕາ ຕ້ອງເຮັດສັນຍາເຊົ່າ, ສຳປະທານ ນຳລັດ) ແລະ ອາຍຸສັນຍາ ຫ້າສິບ ປີ, ແຕ່ໃນໄລຍະເວລາດັ່ງກ່າວ ຫາກບໍ່ປະ

ຕິບັດຕາມເງື່ອນໄຂ ທີ່ກຳນົດໄວ້ໃນສັນຍາ ຈະຖືກຍົກເລີກສັນຍາການນຳໃຊ້ ເພື່ອຈັດສັນທີ່ດິນຕອນດັ່ງກ່າວຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 144 ແລະ 145 ຂອງກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ລະບຽບການກ່ຽວຂ້ອງ.

4) **ເງື່ອນໄຂ ຂອງຕອນດິນ ທີ່ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ນຳໃຊ້ທີ່ດິນປ່າ ໄມ້ເພື່ອດຳເນີນການ ເຮັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້**

ສຳລັບປ່າໄມ້ ແລະ ທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ລັດຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້, ພາຍຫຼັງທີ່ໄດ້ຈັດສັນ, ແບ່ງປະເພດ ແລະ ກຳນົດຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້ແລ້ວ ລັດມອບໃຫ້ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງເປັນຜູ້ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 114, 116 ແລະ 120 ຂອງກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ໂດຍມີເງື່ອນໄຂ ດັ່ງນີ້:

- ເຮັດສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແບບພິມ ສປມ-2 ຮ່ວມກັບບຸກຄົນ ຫຼື ຄອບຄົວ ຕາມຄວາມສະໝັກໃຈ ໃນເນື້ອທີ່ບໍ່ເກີນ ສິບ ເຮັກຕາຕໍ່ບຸກຄົນ ແຕ່ສູງສຸດບໍ່ເກີນ ຊາວ ເຮັກຕາຕໍ່ຄອບຄົວ ໃນກຳນົດເວລາຫ້າສິບ ປີ ແລະ ມີການກຳນົດເງື່ອນໄຂການນຳໃຊ້ທີ່ດິນໃສ່ໃນສັນຍາດັ່ງກ່າວ;
- ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແບບພິມ ສປມ-1 ຮ່ວມກັບອົງການປົກຄອງບ້ານ ຫຼື ລວມໝູ່ພາຍໃນບ້ານ ຕາມຄວາມສະໝັກໃຈ ແລະ ເຂດເນື້ອທີ່ປ່າໄມ້ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃນກຳນົດເວລາ ຫ້າສິບ ປີ ແລະ ມີການກຳນົດເງື່ອນໄຂການນຳໃຊ້ທີ່ດິນໃສ່ສັນຍາດັ່ງກ່າວ;
- ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແບບພິມ ສປມ-1 ຮ່ວມກັບໜ່ວຍຄຸ້ມຄອງປ່າໄມ້ ປະຈຳພາກສະໜາມ, ໜ່ວຍກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຖາບັນການສຶກສາ, ສູນຄົ້ນຄວ້າ ແລະ ຫົວໜ່ວຍວິສາຫະກິດເສດຖະກິດ ຕາມຄວາມສະໝັກໃຈ ແລະ ເນື້ອທີ່ປ່າໄມ້ ຕາມແຜນຈັດສັນປ່າໄມ້ ໃນກຳນົດເວລາ ຫ້າສິບ ປີ ແລະ ມີການກຳນົດເງື່ອນໄຂການນຳໃຊ້ທີ່ດິນໃສ່ສັນຍາດັ່ງກ່າວ.

# ພາກທີ III
# ຂະບວນການ, ບາດກ້າວ ແລະ ຂັ້ນຕອນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

## 3.1 ຂະບວນການຈັດຕັ້ງປະຕິບັດ ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

ຂະບວນການຈັດຕັ້ງປະຕິບັດການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແມ່ນການທົບທວນ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ສຳເລັດແລ້ວ ໂດຍດຳເນີນການປະເມີນຄືນ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ໄດ້ດຳເນີນໃນໄລຍະທີ່ຜ່ານມາ. ຖ້າຫາກວ່າ ບ້ານໃດ ເຫັນວ່າ ບໍ່ມີເງື່ອນໄຂຄົບຖ້ວນ ແລະ ສະພາບການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ມີການປ່ຽນແປງຫຼາຍ ຈະຕ້ອງໄດ້ມີການປັບປຸງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານຄືນໃໝ່. ຖ້າບ້ານໃດ ຍັງບໍ່ທັນໄດ້ເຮັດແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃນໄລຍະຜ່ານມາ ກໍ່ຕ້ອງໄດ້ດຳເນີນການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານກ່ອນ. ພາຍຫຼັງທີ່ໄດ້ສຳເລັດແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ໄດ້ຮັບຮອງຈາກສະພາປະຊາຊົນຂັ້ນແຂວງແລ້ວ ສາມາດດຳເນີນຕາມຂັ້ນຕອນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ດ້ວຍການ (1) ຂຶ້ນທະບຽນອອກໃບຕາດິນ ຫຼື (2) ອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື (3) ສ້າງສັນຍາວ່າດ້ວຍ ການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້, ສັນຍາວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ ສະເພາະ ທີ່ດິນປຸກສ້າງ ແລະ ທີ່ດິນນາ ໂດຍມີໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ຄັດຕິດສັນຍາດັ່ງກ່າວ.

ຂະບວນການຈັດຕັ້ງປະຕິບັດ ວຽກການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະແດງໃຫ້ເຫັນຕາມແຜນວາດ ຂ້າງລຸ່ມນີ້:

## ຂະບວນການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

**ກອງປະຊຸມປຶກສາຫາລືຂັ້ນເມືອງ**

↓

**ດຳເນີນການເສີມຂະຫຍາຍສິດເປັນເຈົ້າ**

↓

**ກອງປະຊຸມ ແລະ ປະຊາສຳພັນ ຂັ້ນບ້ານ**

↓

**ມີແຜນຈັດສັນທີ່ດິນຂັ້ນບ້ານຄົບຕາມເງື່ອນໄຂປະເມີນຂັ້ນຕ່ຳແລ້ວ**

**ບໍ່ມີແຜນຈັດສັນ ຫຼື ມີບໍ່ຄົບຕາມເງື່ອນໄຂຂັ້ນຕ່ຳ ຫຼື ມີການປ່ຽນແປງການນຳໃຊ້ທີ່ດິນປ່າໄມ້ຫຼາຍກວ່າ 30%**

↓

ເກັບກຳຂໍ້ມູນເສດຖະກິດ- ສັງຄົມ, ການນຳໃຊ້ທີ່ດິນ ແລະ ປ່າໄມ້ ບ້ານ

↓

ທົບທວນ/ ກຳນົດຂອບເຂດຄຸ້ມຄອງຂອງບ້ານ

↓

ທົບທວນ/ ສຳຫຼວດເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ເພື່ອສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານປະຈຸບັນ

↓

ທົບທວນ/ ກຳນົດເຂດ ແລະ ປະເພດນຳໃຊ້ທີ່ດິນ ແລະ ສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານໃນອະນາຄົດ

↓

ຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ

↓

ຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໂດຍບ້ານ, ຄະນະກຳມະການປົກຄອງຂັ້ນເມືອງ ແລະ ສະພາປະຊາຊົນຂັ້ນແຂວງ

↓

**ກົມປ່າໄມ້, ຂະແໜງ ຫຼື ໜ່ວຍງານສາຍຕັ້ງຂອງຕົນ**

- ສ້າງ ສັນຍາ ວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ (ດິນປຸກສ້າງ ແລະ ດິນນາ);
- ສ້າງ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ກັບການຈັດຕັ້ງບ້ານ/ອົງການຈັດຕັ້ງ;
- ສ້າງ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ກັບບຸກຄົນ ແລະ ນິຕິບຸກຄົນ.

**ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ຂະແໜງ ຫຼື ໜ່ວຍງານສາຍຕັ້ງຂອງຕົນ**

- ສຳຫຼວດວັດແທກ, ສອບຖາມສິດ, ຈັດປະເພດການນຳໃຊ້ທີ່ດິນ;
- ຂຶ້ນທະບຽນ ອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ;
- ອອກ ໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ;
- ອອກ ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ.

## 3.2. ບາດກ້າວ ແລະ ຂັ້ນຕອນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ມີ ບາດກ້າວ ແລະ ຂັ້ນຕອນ ສະແດງໃນຕາຕະລາງ ລຸ່ມນີ້:

| ບາດກ້າວ | ຂັ້ນຕອນ | ຜູ້ເຂົ້າຮ່ວມ | ຜູ້ຮັບຜິດຊອບ |
|---|---|---|---|
| **ບາດກ້າວ 1** ການກະກຽມ | ຂັ້ນຕອນ 1 ການກະກຽມຢູ່ຫ້ອງການ<br>1.1. ກຳນົດບ້ານເປົ້າໝາຍ<br>1.2. ກະກຽມຂໍ້ມູນ<br>1.3. ປະເມີນຄວາມເປັນໄປໄດ້ໃນການຮັບຮູ້ສິດນຳ ໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ຂອງບ້ານ<br>1.4. ທົບທວນຂໍ້ມູນແຜນຈັດສັນຄຸ້ມຄອງປ່າໄມ້ ສາມປະເພດປ່າ<br>1.5. ທົບທວນຂໍ້ມູນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານທີ່ໄດ້ດຳເນີນຜ່ານມາ<br>1.6. ກະກຽມເຄື່ອງມື ແລະ ອຸປະກອນ<br>1.7 ກະກຽມແຜນກິດຈະກຳ ແລະ ແຜນງົບປະມານ<br>ຂັ້ນຕອນ 2 ແຕ່ງຕັ້ງ ຄະນະຊີ້ນຳຂັ້ນເມືອງ ແລະ ທີມງານວິຊາການ<br>ຂັ້ນຕອນ 3 ຈັດຝຶກອົບຮົມໃຫ້ທີມງານວິຊາການ<br>ຂັ້ນຕອນ 4 ການປະສານງານ ແລະ ນັດບ້ານເປົ້າໝາຍ<br>ຂັ້ນຕອນ 5 ດຳເນີນວຽກງານເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ (FPIC) ແລະ ຄວາມສະເໝີພາບຍິງຊາຍໃນວຽກການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ | ທີມງານວິຊາການ ສູນກາງ, ແຂວງ ແລະ ເມືອງ | ກຄພດ<br>ກປມ<br>ພກສ<br>ຫກສ<br>ສພຍ<br>ນລຊ |
| **ບາດກ້າວ 2** ການຈັດກອງປະຊຸມ ບ້ານ ແລະ ການ ເກັບກຳຂໍ້ມູນ | ຂັ້ນຕອນ 1 ຈັດກອງປະຊຸມ ເພື່ອສະເໜີຈຸດປະສົງ, ປະຊາສຳພັນ ແລະ ແຕ່ງຕັ້ງ ຈຸງານກະສິກຳ ແລະ ປ່າໄມ້ ບ້ານ<br>ຂັ້ນຕອນ 2 ແຕ່ງຕັ້ງຈຸງານກະສິກຳ ແລະ ປ່າໄມ້ບ້ານ<br>ຂັ້ນຕອນ 3 ການແກ້ໄຂບັນຫາກ່ຽວກັບການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້<br>ຂັ້ນຕອນ 4 ເກັບກຳຂໍ້ມູນ ເສດຖະກິດ-ສັງຄົມ, ທີ່ດິນ ແລະ ປ່າໄມ້ຂອງບ້ານ<br>ຂັ້ນຕອນ 5 ສັງລວມຂໍ້ມູນ | ການຈັດຕັ້ງບ້ານ, ຈຸງານກະສິກຳ ແລະ ປ່າໄມ້ບ້ານ ແລະ ຊາວບ້ານແຕ່ລະຄອບຄົວ | ກຄພດ<br>ກປມ<br>ພກສ<br>ຫກສ<br>ສພຍ<br>ນລຊ |
| **ບາດກ້າວ 3** ການທົບທວນ ຫຼື ກຳນົດ ຂອບເຂດຄຸ້ມຄອງບ້ານ | ຂັ້ນຕອນ 1 ຈັດກອງປະຊຸມປຶກສາຫາລືເຂດຄຸ້ມຄອງບ້ານ ຮ່ວມກັບບ້ານອ້ອມຂ້າງ<br>ຂັ້ນຕອນ 2 ລົງສຳຫຼວດພື້ນທີ່ເຂດຄຸ້ມຄອງບ້ານ<br>ຂັ້ນຕອນ 3 ສ້າງແຜນທີ່ຂອບເຂດຄຸ້ມຄອງບ້ານ<br>ຂັ້ນຕອນ 4 ຮັບຮອງເຂດຄຸ້ມຄອງບ້ານກັບບ້ານອ້ອມຂ້າງ | ການຈັດຕັ້ງບ້ານ ແລະ ຈຸງານກະສິກຳ ແລະ ປ່າໄມ້ບ້ານ | ກຄພດ<br>ກປມ<br>ພກສ<br>ຫກສ<br>ສພຍ<br>ນລຊ |
| **ບາດກ້າວ 4** ສຳຫຼວດ ເຂດ ແລະ ປະເພດ ການນຳໃຊ້ທີ່ດິນ ແລະ ປ່າໄມ້ປັດຈຸບັນ | ຂັ້ນຕອນ 1 ຈັດກອງປະຊຸມປຶກສາຫາລືກັບບ້ານ ກ່ຽວກັບເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປັດຈຸບັນ<br>ຂັ້ນຕອນ 2 ລົງສຳຫຼວດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ພາຍໃນບ້ານ<br>ຂັ້ນຕອນ 3 ທົບທວນຂໍ້ມູນ ແຜນຈັດສັນຄຸ້ມຄອງປ່າໄມ້ ຂອງ ສາມປະເພດປ່າ<br>ຂັ້ນຕອນ 4 ສ້າງແຜນທີ່ດິຈິຕອນເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປັດຈຸບັນ<br>ຂັ້ນຕອນ 5 ກວດກາສະພາບພື້ນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຢູ່ໃນຂອບເຂດບ້ານ ກ່ອນ ແລະ ຫຼັງການປະກາດສ້າງຕັ້ງເປັນເຂດທີ່ດິນປ່າໄມ້ | ການຈັດຕັ້ງບ້ານ ແລະ ຈຸງານກະສິກຳ ແລະ ປ່າໄມ້ບ້ານ | ກຄພດ<br>ກປມ<br>ພກສ<br>ຫກສ<br>ສພຍ<br>ນລຊ |

| | | | |
|---|---|---|---|
| **ບາດກ້າວ 5** ການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ | ຂັ້ນຕອນ 1 ວິເຄາະຂໍ້ມູນ ທາງດ້ານທີ່ດິນ, ກະສິກຳ-ປ່າໄມ້ ແລະ ເສດຖະກິດ-ສັງຄົມ, ບັນຫາ ແລະ ທ່າແຮງໃນການນຳໃຊ້ທີ່ດິນ ແລະ ປ່າ ໄມ້ຂອງບ້ານ<br>ຂັ້ນຕອນ 2 ກະກຽມເງື່ອນໄຂສຳລັບການສ້າງແຜນຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ຂັ້ນບ້ານໃນອະນາຄົດ<br>ຂັ້ນຕອນ 3 ຈັດກອງປະຊຸມປຶກສາຫາລືເພື່ອກຳນົດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ແລ້ວສ້າງແຜນທີ່ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານໃນອະນາຄົດ<br>ຂັ້ນຕອນ 4 ທົບທວນ ຫຼື ສ້າງລະບຽບກ່ຽວກັບການຄຸ້ມຄອງທີ່ດິນ ແລະ ປ່າໄມ້<br>ຂັ້ນຕອນ 5 ຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ<br>ຂັ້ນຕອນ 6 ຈັດກອງປະຊຸມຜ່ານແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ<br>ຂັ້ນຕອນ 7 ຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ | ການຈັດຕັ້ງບ້ານ, ຈຸງານກະສິກຳ ແລະ ປ່າໄມ້ບ້ານ ແລະ ຊາວບ້ານແຕ່ລະຄອບຄົວ | ກຄພດ<br>ກປມ<br>ພກສ<br>ຫກສ<br>ສພຍ<br>ນລຊ |
| **ບາດກ້າວ 6** ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ | ຂັ້ນຕອນ 1 ຈັດປະຊາສຳພັນຍ່ອຍ<br>ຂັ້ນຕອນ 2 ດຳເນີນການສອບຖາມສິດ ແລະ ເກັບກຳຂໍ້ມູນການໄດ້ມາສິດຄອບຄອງ ແລະ ສິດນຳໃຊ້ທີ່ດິນ<br>ຂັ້ນຕອນ 3 ສຳຫຼວດວັດແທກທີ່ດິນ ແລະ ການສ້າງແຜນທີ່ດິນສະເພາະຕອນ<br>ຂັ້ນຕອນ 4 ຈັດປະເພດສິດນຳໃຊ້ດິນ ເພື່ອພິຈາລະນາ ຂຶ້ນທະບຽນ ອອກໃບຕາດິນ ຫຼື ອອກໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ຫຼື ສ້າງ ສ້າງສັນຍາ ວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ (ດິນປຸກສ້າງ ແລະ ດິນນາ), ສ້າງສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້<br>ຂັ້ນຕອນ 5 ອອກແຈ້ງການຫາຜູ້ຄັດຄ້ານ<br>ຂັ້ນຕອນ 6 ພິຈາລະນາການຂຶ້ນທະບຽນອອກໃບຕາດິນ ແລະ ໃບ ຢັ້ງຢືນການນຳໃຊ້ທີ່ດິນ<br>ຂັ້ນຕອນ 7 ສ້າງ ສັນຍາ ວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້, ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້<br>ຂັ້ນຕອນ 8 ກອງປະຊຸມສະຫຼຸບວຽກງານການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ | ການຈັດຕັ້ງບ້ານ, ຈຸງານກະສິກຳ ແລະ ປ່າໄມ້ບ້ານ ແລະ ເຈົ້າຂອງຕອນດິນ | ກຄພດ<br>ກປມ<br>ພກສ<br>ຫກສ<br>ສພຍ<br>ນລຊ |
| **ບາດກ້າວ 7** ການເກັບຮັກສາຂໍ້ມູນການວາງແຜນຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ | ຂັ້ນຕອນ 1 ເກັບຮັກສາຂໍ້ມູນ ຂັ້ນບ້ານ ແລະ ຕາແສງ<br>ຂັ້ນຕອນ 2 ເກັບຮັກສາຂໍ້ມູນ ຂັ້ນເມືອງ<br>ຂັ້ນຕອນ 3 ເກັບຮັກສາຂໍ້ມູນ ຂັ້ນແຂວງ<br>ຂັ້ນຕອນ 4 ເກັບຮັກສາຂໍ້ມູນເອກະສານ ແລະ ອີເລັກໂຕຣນິກ ຢູ່ຂັ້ນສູນກາງ | ການຈັດຕັ້ງບ້ານ ແລະ ຈຸງານກະສິກຳ ແລະ ປ່າໄມ້ບ້ານ | ກຄພດ<br>ກປມ<br>ພກສ<br>ຫກສ |
| **ບາດກ້າວ 8** ການຈັດຕັ້ງປະຕິບັດແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ | | ການຈັດຕັ້ງບ້ານ ແລະ ຈຸງານກະສິກຳ ແລະ ປ່າໄມ້ບ້ານ | ກຄພດ<br>ກປມ<br>ພກສ<br>ຫກສ |
| **ບາດກ້າວ 9** ການຕິດຕາມກວດກາ ແລະ ປະເມີນຜົນ | ຂັ້ນຕອນ 1 ການຕິດຕາມກວດກາ ແຜນຄຸ້ມ ຄອງປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ຕາມການແບ່ງຂັ້ນຄຸ້ມຄອງ<br>ຂັ້ນຕອນ 2 ການປະເມີນຜົນ<br>ຂັ້ນຕອນ 3 ການຖອນສິດນຳໃຊ້ທີ່ດິນ, ການເສຍສິດນຳໃຊ້ທີ່ດິນ, ການໂຈະຊົ່ວຄາວ ແລະ ການຍົກເລີກສັນຍາ | ຈຸງານກະສິກຳ ແລະ ປ່າໄມ້ບ້ານ | ກຄພດ, ກປມ, ພກສ, ຫກສ, ສພຍ, ນລຊ |

**ເນື້ອໃນລະອຽດ ຂອງແຕ່ລະ ບາດກ້າວ ແລະ ຂັ້ນຕອນ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໃຫ້ປະຕິບັດ ດັ່ງນີ້:**

## ບາດກ້າວ 1 ການກະກຽມ

ການກະກຽມ ແມ່ນ ການກຽມຄວາມພ້ອມດ້ານຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ເພື່ອເປັນບ່ອນອີງໃຫ້ແກ່ການຮັບຮູ້ສິດນຳໃຊ້ທີ່ດິນຢູ່ໃນເຂດທີ່ດິນປ່າໄມ້ ຊຶ່ງຈະຕ້ອງມີການປະເມີນຄືນແຜນຈັດສັນຄຸ້ມຄອງປ່າໄມ້ ສາມ ປະເພດປ່າ ແລະ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ ໄດ້ດຳເນີນ ໃນໄລຍະທີ່ຜ່ານມາ ປະກອບມີ 5 ຂັ້ນຕອນ ດັ່ງນີ້:

### ຂັ້ນຕອນທີ 1 ການກະກຽມຢູ່ຫ້ອງການ ຊຶ່ງປະກອບມີ 7 ກິດຈະກຳຍ່ອຍ ດັ່ງນີ້:

#### 1.1 ກຳນົດບ້ານເປົ້າໝາຍ

ການກຳນົດບ້ານເປົ້າໝາຍ ໃນການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ເພື່ອເປັນບ່ອນອີງໃນການດຳເນີນຂະບວນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ແມ່ນຈະດຳເນີນໃນທຸກບ້ານທີ່ນອນໃນເຂດທີ່ດິນປ່າໄມ້ ຈຳນວນ 3,167 ບ້ານ. ແຕ່ຈະໄດ້ມີການຈັດລຽງບຸລິມະສິດວ່າ ບ້ານໃດຄວນເຮັດກ່ອນ ຫຼື ຕາມຫຼັງ ໂດຍອີງໃສ່ແຫຼ່ງງົບປະມານ (ລັດ, ໂຄງການກູ້ຢືມ, ໂຄງການຊ່ວຍເຫຼືອລ້າ) ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ກ່ຽວກັບການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ຮອດປີ 2030 ໃຫ້ສຳເລັດ.

ການຄັດເລືອກບ້ານເປົ້າໝາຍ ແມ່ນ ປະຕິບັດຕາມມີເງື່ອນໄຂ ຕາມທີ່ລະບຸໃນແຜນດຳເນີນງານແຫ່ງຊາດ ດັ່ງລຸ່ມນີ້:

- ບ້ານ ໃນເຂດທີ່ດິນປ່າໄມ້ ທີ່ມີເປີເຊັນຂອງຈຳນວນຄົວເຮືອນທຸກຍາກສູງ;
- ບ້ານ ທີ່ຢູ່ໃນເຂດທີ່ດິນປ່າໄມ້ທັງໝົດ ຫຼື ມີເນື້ອທີ່ສ່ວນໃດສ່ວນໜຶ່ງ ຢູ່ໃນເຂດທີ່ດິນປ່າໄມ້ ເປັນບຸລິມະສິດ;
- ບ້ານ ທີ່ມີການເຊົ່າ ແລະ ສຳປະທານທີ່ດິນຫຼາຍ;
- ບ້ານ ທີ່ມີການບຸກລຸກທີ່ດິນ ໃນເຂດທີ່ດິນປ່າໄມ້ ແລະ ມີການລັກລອບຕັດໄມ້;

ວິທີການ ຄັດເລືອກບ້ານເປົ້າໝາຍ ທີ່ນອນໃນເຂດທີ່ດິນປ່າໄມ້ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງຕໍ່ໄປນີ້:

1) ເກັບຂໍ້ມູນກ່ຽວກັບປ່າໄມ້ ເພື່ອນຳມາວິເຄາະ ເຖິງລະດັບຄວາມທຸກຍາກ, ປະລິມານການຂໍສຳປະທານ ທີ່ດິນໃນພື້ນທີ່, ກໍລະນີ ມີການບຸກລຸກພື້ນທີ່ປ່າ ທີ່ເກີດຂຶ້ນຜ່ານມາ ແລະ ຈຳນວນການພົບເຫັນ ການລັກລອບຕັດໄມ້ໃນພື້ນທີ່. ຈາກຜົນການເກັບຂໍ້ມູນ ແລະ ການວິເຄາະຂໍ້ມູນ ສາມາດ ກຳນົດບ້ານ ເປົ້າໝາຍ ທີ່ເປັນ ບຸລິມະສິດໃນເບື້ອງຕົ້ນ;
2) ຈັດກອງປະຊຸມຮ່ວມກັບຄະນະກຳມະການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອປຶກສາຫາລື ກ່ຽວກັບການຄັດເລືອກບ້ານເປົ້າໝາຍທີ່ເປັນບຸລິມະສິດ;
3) ຄະນະກຳມະການປົກຄອງຂັ້ນເມືອງ ອອກຂໍ້ຕົກລົງ ຮັບຮອງເອົາບ້ານເປົ້າໝາຍທີ່ເປັນບຸລິມະສິດ ເພື່ອຈັດຕັ້ງປະ ຕິບັດວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ພ້ອມທັງແຕ່ງຕັ້ງຄະນະຊີ້ນຳ.

#### 1.2 ລວບລວມຂໍ້ມູນຂອງບ້ານເປົ້າໝາຍ

ກ່ອນລົງເຮັດວຽກພາກສະໜາມ ທີມງານວິຊາການ ຕ້ອງໄດ້ລວບລວມຂໍ້ມູນຂອງບ້ານເປົ້າໝາຍ ດັ່ງນີ້:

- ແຜນຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມ ແບບຮອບດ້ານຂອງແຂວງ, ແຜນຈັດສັນທີ່ດິນຂັ້ນເມືອງ;
- ແຜນຈັດສັນຄຸ້ມຄອງ 3 ປະເພດປ່າ, ຂໍ້ມູນເຂດທີ່ຢູ່ອາໄສຂອງສັດປ່າ ແລະ ອື່ນໆ;
- ແຜນທີ່ຄວາມຄ້ອຍຊັນ, ແຜນທີ່ສະແດງໄລຍະຫ່າງ (ແຜນທີ່ເສັ້ນລະດັບ);
- ຂໍ້ມູນການມອບດິນ-ມອບປ່າ ໄລຍະຜ່ານມາ, ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຂອງບ້ານທີ່ໄດ້ດຳເນີນຜ່ານມາ (ຖ້າໄດ້ດຳເນີນມາແລ້ວ);
- ແຜນການນຳໃຊ້ທີ່ດິນ ແລະ ແຜນການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ແຜນທີ່ຕາດິນ ແລະ ການຄອບຄອງນຳໃຊ້ທີ່ດິນ;

- ຂໍ້ມູນພາບຖ່າຍດາວທຽມ ແລະ ຂໍ້ມູນໂຄງການເຊົ່າ-ສຳປະທານທີ່ດິນຂອງລັດ;
- ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ເມືອງ ແລະ ບ້ານ;
- ບັນດານິຕິກຳທີ່ກ່ຽວຂ້ອງເຊັ່ນ: ກົດໝາຍ ວ່າດ້ວຍປ່າໄມ້, ກົດໝາຍ ວ່າດ້ວຍທີ່ດິນ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024, ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 20/ນຍ, ລົງວັນທີ 5 ພະຈິກ 2024, ຄຳສັ່ງ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023, ແຈ້ງການຂອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກ່ຽວກັບການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ເລກທີ 4187/ກຊສ, ລົງວັນທີ 15 ພະຈິກ 2024, ຄຳແນະນຳຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ສະບັບເລກທີ 1821/ກປ, ລົງວັນທີ 26 ພຶດສະພາ 2025;
- ຄູ່ມືກ່ຽວຂ້ອງກັບວຽກງານວາງແຜນ ແລະ ຮັບຮູ້ສິດນຳໃຊ້ທີ່ດິນ ທີ່ໄດ້ດຳເນີນຜ່ານມາ.

### 1.3 ປະເມີນຄວາມເປັນໄປໄດ້ໃນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

ພາຍຫຼັງຄັດເລືອກບ້ານເປົ້າໝາຍແລ້ວ ກ່ອນຈະເລີ່ມຕົ້ນວຽກພາກສະໜາມ ຕ້ອງດຳເນີນການປະເມີນຄວາມເປັນໄປໄດ້ໃນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໂດຍອີງຕາມເງື່ອນໄຂທີ່ວ່າ: ບ້ານດັ່ງກ່າວ ສ້າງຕັ້ງ ກ່ອນ ຫຼື ພາຍຫຼັງປະກາດເປັນເຂດທີ່ດິນປ່າໄມ້. ການປະເມີນຄວາມເປັນໄປໄດ້ດັ່ງກ່າວສາມາດດຳເນີນ ແບບປະສົມປະສານກັນ ຕາມຂໍ້ມູນທີ່ມີ ເປັນຕົ້ນ:

1) ດຳລັດ, ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ 3 ປະເພດປ່າ ຈາກກົມປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ;
2) ສຶກສາຜ່ານພາບຖ່າຍດາວທຽມ ແລະ ພາບຖ່າຍທາງອາກາດ ເພື່ອກຳນົດເວລາຂອງການສ້າງຕັ້ງບ້ານດັ່ງກ່າວ ໂດຍທຽບໃສ່ວັນເດືອນປີ ທີ່ລະບຸໃນດຳລັດ, ຂໍ້ຕົກລົງສ້າງຕັ້ງປ່າ;
3) ການຢັ້ງຢືນ ຈາກຄະນະກຳມະການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງ;
4) ປະສານສົມທົບກັບ ການຈັດຕັ້ງຊຸມຊົນບ້ານ ແລະ ເຖົ້າແກ່ແນວໂຮມ ຜູ້ທີ່ມາຢູ່ໃນບ້ານກ່ອນໝູ່ ເພື່ອເປັນຂໍ້ມູນໃນການປະເມີນຄວາມເປັນໄປໄດ້;
5) ສະຫຼຸບສັງລວມຂໍ້ມູນ, ວິເຄາະປະເມີນ ແລະ ພິຈາລະນາ ຄວາມເປັນໄປໄດ້ ໃນການ ຮັບຮູ້ສິດ.

### 1.4 ທົບທວນຂໍ້ມູນແຜນຈັດສັນຄຸ້ມຄອງປ່າໄມ້ ສາມປະເພດປ່າ

ທີມງານວິຊາການ ຕ້ອງໄດ້ທົບທວນແຜນຈັດສັນຄຸ້ມຄອງ ສາມປະເພດປ່າ ບ່ອນບ້ານ ຕັ້ງຢູ່ ໂດຍການເກັບກຳ ແລະ ທົບທວນຂໍ້ມູນແຜນຈັດສັນຄຸ້ມຄອງປ່າໄມ້ ແລະ ເອກະສານທີ່ກ່ຽວຂ້ອງອື່ນໆ, ຖ້າແຜນດັ່ງກ່າວ ຄົບຖ້ວນ ກໍຈະເປັນຂໍ້ມູນທີ່ດີ ຊ່ວຍຮັບປະກັນໃຫ້ການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນ ທີ່ຈະເລີ່ມດຳເນີນໃຫ້ສອດຄ່ອງກັບແຜນຈັດສັນຄຸ້ມຄອງປ່າໄມ້ດັ່ງກ່າວ ພ້ອມທັງຫຼຸດຜ່ອນເວລາ ແລະ ງົບປະມານ.

### 1.5 ທົບທວນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ໄດ້ດຳເນີນຜ່ານມາ

ບ້ານເປົ້າໝາຍ ທີ່ໄດ້ດຳເນີນການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຜ່ານມາແລ້ວ ຕ້ອງໄດ້ທົບທວນຄືນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ດັ່ງກ່າວກ່ອນ, ຖ້າເຫັນວ່າຄົບຖ້ວນຕາມເງື່ອນໄຂຕ່າງໆ ກໍບໍ່ຈຳເປັນຕ້ອງດຳເນີນຄືນອີກ ແລະ ສາມາດກ້າວໄປສູ່ວຽກງານສຳຫຼວດວັດແທກ, ສອບຖາມສິດນຳໃຊ້ທີ່ດິນ ເພື່ອພິຈາລະນາ (1) ຂຶ້ນທະບຽນອອກໃບຕາດິນ ຫຼື (2) ອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື (3) ເຮັດສັນຍາວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ໄດ້ເລີຍ (ຕາມບາດກ້າວ 6).

ແຕ່ຖ້າແຜນດັ່ງກ່າວ ມີເງື່ອນໄຂບໍ່ຄົບຖ້ວນ ແມ່ນຕ້ອງໄດ້ເຮັດຄືນໃໝ່ ຫຼື ປັບປຸງບາງສ່ວນ. ໃນການທົບທວນຄືນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ກຳນົດບັນຊີລາຍການກວດກາວ່າ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ທີ່ມີຢູ່ນັ້ນ ໄດ້ຖືກຈັດຕັ້ງປະຕິບັດປີໃດ?, ມີເອກະສານຫຍັງແດ່? ຖືກຕ້ອງ ແລະ ຄົບຖ້ວນແລ້ວບໍ?, ຄຸນນະພາບເປັນແນວໃດ ແລະ ມີຫຍັງແດ່ ທີ່ຈະຕ້ອງໄດ້ຮັບການປັບປຸງຕື່ມ.

ການທົບທວນຄືນ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃນໄລຍະຜ່ານມາ ຕ້ອງແມ່ນທີມງານວິຊາການຂັ້ນເມືອງ ຜູ້ທີ່ໄດ້ຖືກແຕ່ງຕັ້ງ ເປັນຜູ້ດຳເນີນ (ທີມງານ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ) ໂດຍການຊຸກຍູ້ດ້ານວິຊາການ ຈາກພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ທີມງານຂັ້ນສູນກາງ. ທີມງານວິຊາການ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ສັງລວມຂໍ້ມູນທັງໝົດ ກ່ຽວກັບແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ດຳເນີນຜ່ານມາ ເຊັ່ນ: ບັນດາເອກະສານຂໍ້ຕົກລົງຮັບຮອງແຜນຄຸ້ມຄອງທີ່ດິນ ເປັນຕົ້ນແຜນທີ່, ຂໍ້ມູນ GIS ເພື່ອນຳມາທົບທວນຄືນ ຕາມເງື່ອນໄຂໃນຕາຕະລາງ ລຸ່ມນີ້:

| ເງື່ອນໄຂ | ຄວາມຕ້ອງການ | ມີ | ບໍ່ມີ | ຄຳແນະນຳ |
|---|---|---|---|---|
| ໄລຍະຂອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ບ້ານ | ໄລຍະເວລາ ນັບແຕ່ ວັນທີ່ແຜນໄດ້ຖືກຮັບຮອງ | | | ຖ້າແຜນດັ່ງກ່າວມີໄລຍະເກີນ 5 ປີ ຕ້ອງໄດ້ປັບປຸງຄືນ |
| ຜູ້ອະນຸມັດຂໍ້ຕົກລົງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ | ຈຸງານກະສິກຳ ແລະ ປ່າໄມ້ບ້ານ | | | |
| | ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອຮັບປະກັນຄວາມຖືກຕ້ອງຕາມ ມາດຕະຖານ | | | |
| | ຄະນະກຳມະການປົກຄອງຂັ້ນເມືອງ | | | |
| | ສະພາປະຊາຊົນຂັ້ນແຂວງ | | | |
| ເອກະສານ ກ່ຽວກັບແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ | ຄຳອະທິບາຍ ຫຼື ບົດບອກເລົ່າກ່ຽວກັບຂອບເຂດ ແລະ ປະເພດການນຳໃຊ້ທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນນ້ຳ | | | |
| | ຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາຂອບເຂດຄຸ້ມຄອງຂອງບ້ານ ໂດຍມີການຮັບຮອງຂອງບ້ານອ້ອມຂ້າງ, ຕາແສງ ພ້ອມທັງ ມີຄຳບອກເລົ່າກ່ຽວກັບ ຂອບເຂດຄຸ້ມຄອງຂອງບ້ານ | | | |
| | ບົດບັນທຶກເຂດຄຸ້ມຄອງລະຫວ່າງບ້ານ ຕໍ່ ບ້ານ | | | |
| | ຂໍ້ຕົກລົງການແຕ່ງຕັ້ງຈຸງານກະສິກຳ ແລະ ປ່າໄມ້ບ້ານ ພ້ອມ ທັງມີ ພາລະບົດ ແລະ ໜ້າທີ່ຮັບຜິດຊອບ | | | |
| | ບົດບັນທຶກ ແລະ ໃບລົງທະບຽນ ກອງປະຊຸມບ້ານ | | | |
| | ບົດວິເຄາະຂໍ້ມູນດ້ານເສດຖະກິດ-ສັງຄົມຂອງບ້ານ | | | |
| ຂໍ້ມູນດ້ານເສດຖະກິດ-ສັງຄົມຂອງບ້ານ | ປະຫວັດຄວາມເປັນມາບ້ານ | | | |
| | ແຫຼ່ງລາຍຮັບຫຼັກຂອງຄົວເຮືອນ | | | |
| | ຈຳນວນຄົວເຮືອນ ແລະ ຄອບຄົວ, ອີງປະກອບຂອງບ້ານ (ຈຳນວນແມ່ຍິງ, ຜູ້ຊາຍ, ຊາວໜຸ່ມ, ຜູ້ເຖົ້າ ແລະ ເດັກນ້ອຍ, ຊົນເຜົ່າ) | | | ຖ້າປະຊາກອນເພີ່ມຂຶ້ນຫຼາຍກວ່າ 10% ນັບແຕ່ອະນຸມັດແຜນດັ່ງກ່າວຈະຕ້ອງໄດ້ປັບປຸງຄືນ |
| | ກຳລັງແຮງງານ (ແຮງງານຖາວອນໃນບ້ານ ແລະ ຊົ່ວຄາວ) | | | |
| | ທີ່ດິນທີ່ປະຊາຊົນຄອບຄອງນຳໃຊ້ ພ້ອມທັງການໄດ້ມາ (ຈຳນວນ ຕອນດິນ, ຈຸດທີ່ຕັ້ງຂອງ ຕອນດິນ) | | | |
| | ສັດລ້ຽງທີ່ຄົວເຮືອນ ແລະ ຄອບຄົວ ມີໃນ ຄອບຄອງ | | | |

| | | | | |
|---|---|---|---|---|
| | ການເກັບເຄື່ອງປ່າຂອງດົງ (ພື້ນທີ່, ການນຳໃຊ້ ແລະ ກົດລະບຽບ) | | | |
| | ຊັບສິນທີ່ແຕ່ລະຄອບຄົວເປັນເຈົ້າຂອງ | | | |
| | ປະລິມານເຂົ້າທີ່ມີກິນ (ຈຳນວນເດືອນທີ່ມີເຂົ້າກຸ້ມກິນຕໍ່ປີ) | | | |
| | ບັນຫາຂອງບ້ານ/ ການຈັດລະດັບບັນຫາ | | | |
| ປະເພດແຜນທີ່ | ແຜນທີ່ຂອບເຂດຄຸ້ມຄອງ ຂອງບ້ານ (ຕ້ອງມີ) | | | |
| | ແຜນທີ່ການນຳໃຊ້ທີ່ດິນ ໃນປັດຈຸບັນ (ຕ້ອງມີ) | | | |
| | ແຜນທີ່ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານໃນອະນາຄົດ (ຕ້ອງມີ), ແຜນທີ່ອື່ນໆ | | | |
| ເຂດການນຳໃຊ້ທີ່ດິນປະເພດຕ່າງໆ | ການຈັດແບ່ງທີ່ດິນ "ທີ່ດິນແຮຂອງບ້ານ" (ສຳລັບນຳໃຊ້ເພື່ອການຜະລິດ ກະສິກຳຂອງບ້ານ) ແທດເໝາະກັບການປ່ຽນແປງຈຳນວນ ປະຊາກອນທີ່ຄາດຄະເນໄວ້ | | | |
| | ຈຸດທີ່ຕັ້ງຂອງທົ່ງຫຍ້າລ້ຽງສັດ | | | |
| | ຈຸດທີ່ຕັ້ງຂອງປ່າຊົມໃຊ້, ປ່າສະຫງວນ, ປ່າປ້ອງກັນ, ປ່າຊ້າ/ ປ່າມະເຫສັກ, ເນື້ອທີ່ປ່າປູກ ແລະ ເຂດເຄື່ອງປ່າຂອງດົງ | | | |
| | ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ແລະ ເຂດກັນຊົນຂອງສາມປະເພດປ່າ ທີ່ນອນຢູ່ໃນເຂດຄຸ້ມຄອງຂອງບ້ານ ໄດ້ຈັດແລວເຂດແດນ ຢ່າງຊັດເຈນ | | | |
| | ຈຸດທີ່ຕັ້ງຂອງເຂດກະສິກຳແບບໝູນວຽນໃນເຂດເນີນສູງ | | | |
| ຄຳອະທິບາຍແຜນທີ່ | ມີມາດຕາສ່ວນຂອງແຜນທີ່ 10,000 - 15,000 (ຂຶ້ນກັບຂະໜາດຂອງບ້ານ) | | | |
| | ຊື່ຂອງແຜນທີ່ | | | |
| | ລະບຸວັນເດືອນປີ ທີ່ສ້າງແຜນທີ່ | | | |
| | ມີເຄື່ອງໝາຍລູກສອນບອກທິດ ໄປທາງທິດເໜືອ | | | |
| | ກຳນົດເຄື່ອງໝາຍທັງໝົດເທິງແຜນທີ່ | | | |
| | ຫ້ອງການທີ່ຮັບຜິດຊອບແຜນທີ່ | | | |
| | ເຄື່ອງໝາຍ (ໂລໂກ້) ຂອງຜູ້ໃຫ້ທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ | | | |
| | ລະບຸຈຸດພິກັດທີ່ພົ້ນເດັ່ນຕາມບົດບອກເລົ່າໃສ່ເຂດ ຄຸ້ມຄອງຂອງບ້ານ ແລະ ຂອບເຂດປະເພດ ການນຳໃຊ້ດິນ | | | |
| | ຂະໜາດທີ່ພິມ A3 | | | |
| | ບອກພາບຖ່າຍອ້າງອີງ: ພາບຖ່າຍຈາກດາວທຽມ, ພາບຖ່າຍ ທາງອາກາດ ທີ່ມີຄວາມ ຊັດເຈນສູງ. | | | |

### 1.6 ກະກຽມເຄື່ອງມື ແລະ ອຸປະກອນ

ກະກຽມເຄື່ອງມື ແລະ ອຸປະກອນຮັບໃຊ້ ສໍາລັບສໍາຫຼວດພາກສະໜາມ ປະກອບມີ ດັ່ງນີ້:

- ແຜນທີ່ພູມມີສາດ (Topo) ລະຫວ່າງ 1:10,000 ຫາ 1:15,000 ຂຶ້ນກັບຂະໜາດ ແລະ ຮູບຮ່າງພື້ນທີ່ຂອງບ້ານ;
- ພາບຖ່າຍດາວທຽມ ຫຼື ພາບຖ່າຍທາງອາກາດ ທີ່ມີຄວາມລະອຽດ, ຊັດເຈນ ແລະ ສາມາດພິສູດໄດ້ ການອາໄສ ແລະ ທໍາການຜະລິດ ຂອງປະຊາຊົນ ໃນ 3 ໄລຍະຄື:
  - ກ່ອນປະກາດສ້າງຕັ້ງເປັນເຂດທີ່ດິນປ່າໄມ້ (ອີງຕາມ ຄໍາແນະນໍາ ສະບັບເລກທີ 1821/ກປ, ລົງວັນທີ 26 ພຶດສະພາ 2025);
  - ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019 ແລະ ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
  - ການປະກາດໃຊ້ ຄໍາສັ່ງ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024.
- ອຸປະກອນຮັບໃຊ້ຕ່າງໆ ເຊັ່ນ: GNSS RTK, IBASS, Dron RTK, GPS, ຄອມພິວເຕີ Laptop, ເຄື່ອງສາຍ LCD, ເຄື່ອງພິມ, ເຄື່ອງສຽງ ແລະ ອື່ນໆ;
- ໃນບາງກໍລະນີ ພື້ນທີ່ບໍ່ສາມາດຮັບສັນຍານອິນເຕີເນັດທີ່ເຊື່ອມກັບຈຸດອ້າງອີງ ສະຖານີສໍາຫຼວດວັດແທກແບບຕໍ່ເນື່ອງ (CORS) ແມ່ນນໍາໃຊ້ Base ແລະ Rover ຊຶ່ງເຮັດໜ້າທີ່ຄ້າຍກັບ ສະຖານີສໍາຫຼວດວັດແທກແບບຕໍ່ເນື່ອງ (CORS) ທີ່ສາມາດເຊື່ອມກັບ GNSS RTK;
- ແຜນທີ່ຈັດສັນຄຸ້ມຄອງປ່າໄມ້ ສາມປະເພດປ່າ, ແຜນທີ່ຄວາມຄ້ອຍຊັນ, ແຜນທີ່ສະແດງໄລຍະຫ່າງ;
- ອຸປະກອນຂີດຂຽນ: ເຈ້ຍແຜ່ນໃຫຍ່, ເຟີດຂຽນ, ສະກອດຕິດເຈ້ຍ, ເຈ້ຍ A4 ແລະ ອື່ນໆ;
- ແບບຟອມເກັບກໍາຂໍ້ມູນ ຮ່າງຂໍ້ຕົກລົງຕ່າງໆ;
- ອຸປະກອນຮັບໃຊ້ສໍາຫຼວດພາກສະໜາມ: ເຕັ້ນ-ຖົງນອນ, ພ້າ, ໄຟສາຍ, ເກີບຍ່າງປ່າ, ຊຸດຍ່າງປ່າ ແລະອື່ນໆ.

### 1.7 ກະກຽມແຜນກິດຈະກໍາ, ແຜນງົບປະມານ ແລະ ຕາຕະລາງເວລາ

ທີມງານ ຕ້ອງໄດ້ກະກຽມແຜນກິດຈະກໍາ, ແຜນງົບປະມານ ແລະ ຕາຕະລາງເວລາ ຢ່າງລະອຽດ ແລະ ສອດຄ່ອງກັບ ຈຸດປະສົງ ແລະ ຄາດໝາຍທີ່ກໍານົດໄວ້. ການກະກຽມແຜນກິດຈະກໍາພາກສະໜາມ ຄວນປຶກສາຫາລືກັບພາກສ່ວນທີ່ມີສ່ວນຮ່ວມ ແລະ ເປັນເອກະພາບກັບປະຊາຊົນຢູ່ບ້ານເປົ້າໝາຍ.

ສ່ວນແຜນງົບປະມານ ຕ້ອງໄດ້ກະກຽມໂດຍອີງໃສ່ແຜນກິດຈະກໍາພາກສະໜາມ ທີ່ເປັນເອກະພາບກັນ. ແຜນດັ່ງກ່າວທີ່ຈະດໍາເນີນໃນແຕ່ລະບ້ານ ອາດຈະແຕກຕ່າງກັນ ຂຶ້ນກັບຂະໜາດຂອງພື້ນທີ່ຂອງບ້ານ, ຄວາມຄ້ອຍຊັນ, ຄວາມໜາແໜ້ນຂອງປ່າໄມ້, ຈໍານວນຄອບຄົວ ແລະ ປະຊາກອນ, ຄວາມສະດວກໃນການເດີນທາງ, ຄວາມຫຼາກຫຼາຍຂອງເຜົ່າ (ບາງກໍລະນີ ຕ້ອງມີນາຍແປພາສາ ຊຶ່ງຕ້ອງໄດ້ພິຈາລະນາງົບປະມານໃນການວ່າຈ້າງນາຍແປພາສາຕື່ມ), ລະດູການໃນການເຮັດວຽກ ແລະ ອື່ນໆ ດັ່ງທີ່ສະແດງໃນຕົວຢ່າງ ແຜນການທົບທວນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ລຸ່ມນີ້:

**ຕາຕະລາງ 3** ຕົວຢ່າງແຜນການທົບທວນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ (ບ້ານໂຄກສະຫວ່າງ, ເມືອງໄຊບົວທອງ, ແຂວງຄໍາມ່ວນ)

| ວັນ/ເວລາ | ກິດຈະກໍາ/ໜ້າວຽກ | ວິທີການ ແລະ ເຄື່ອງມື | ຜູ້ເຂົ້າຮ່ວມ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| ມື້ທີ 1 ພາກເຊົ້າ | ເປີດກອງປະຊຸມບ້ານ:<br>- ນໍາສະເໜີ ຄວາມເປັນມາ, ຈຸດປະສົງເປົ້າໝາຍ, ຂັ້ນຕອນການ ຮັບຮູ້ສິດ, ຕາຕະລາງແຜນການເຮັດວຽກ ແລະ ຜົນຄາດວ່າຈະໄດ້ຮັບ<br>- ທົບທວນ/ຈັດຕັ້ງຈຸງານກະສິກໍາ ແລະ ປ່າໄມ້ບ້ານ<br>- ນໍາສະເໜີແຜນເກັບກໍາຂໍ້ມູນຂອງບ້ານ | - ວາລະກອງປະຊຸມ<br>- ຮ່າງຂໍ້ຕົກລົງຈຸງານກະສິກໍາ ແລະ ປ່າໄມ້ບ້ານ<br>- ບົດນໍາສະເໜີ | - ການຈັດຕັ້ງບ້ານ ແລະປະຊາຊົນໝົດບ້ານ ທັງຍິງ ແລະ ຊາຍ, ຜູ້ດ້ອຍໂອກາດ, ຜູ້ເສຍອົງຄະ<br>- ຄະນະກໍາມະການປົກຄອງຕາແສງ | - ກົມຄຸ້ມຄອງແລະ ພັດທະນາທີ່ດິນ<br>- ກົມປ່າໄມ້<br>- ພະແນກ ກະສິກໍາ ແລະ ສິ່ງແວດລ້ອມແຂວງ (ຂະແໜງປ່າໄມ້, ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ) |

| | | | | |
|---|---|---|---|---|
| | - ທົບທວນຄືນແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານ<br>- ປຶກສາຫາລືທົບທວນ ຂອບເຂດຄຸ້ມຄອງບ້ານ | - ຕາຕະລາງກວດຄືນການທົບທວນ<br>- ແຜນທີ່ຂອບເຂດການຈັດຕັ້ງບ້ານ | - ການຈັດຕັ້ງບ້ານ ທີ່ມີເຂດຄຸ້ມຄອງຕິດຈອດກັນ | - ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ |
| ພາກບ່າຍ | - ດຳເນີນການເກັບກຳຂໍ້ມູນລວມບ້ານ ແລະ ຂໍ້ມູນຄອບຄົວ<br>- ທົບທວນຂອບເຂດຄຸ້ມຄອງບ້ານ<br>- ທົບທວນຂອບເຂດ ແລະ ປະເພດການ ນຳໃຊ້ທີ່ດິນ ແລະ ວາງແຜນລົງສຳຫຼວດ | -ແບບພິມ ເກັບກຳຂໍ້ມູນ<br>-ແຜນທີ່ຂອບເຂດ<br>-ນຳໃຊ້ແຜນທີ່ດາວທຽມ | -ປະຊາຊົນພາຍໃນບ້ານ<br>-ຄະນະປະທານບ້ານ ແລະ ບ້ານທີ່ມີເຂດແດນຕິດຈອດກັນ | - ທີມຍ່ອຍວາງແຜນທີ 1<br>- ທີມຍ່ອຍວາງແຜນທີ 2 |
| ມື້ທີ 2 | - ສືບຕໍ່ ດຳເນີນການເກັບກຳຂໍ້ມູນລວມບ້ານ ແລະ ຂໍ້ມູນຄອບຄົວ<br>- ລົງສຳຫຼວດ ຂອບເຂດຄຸ້ມຄອງບ້ານ<br>- ລົງສຳຫຼວດ ຂອບເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ພາຍໃນ ຊຸມຊົນບ້ານ<br>- ທົບທວນຄືນແຜນທີ່ການນຳໃຊ້ທີ່ດິນ ປະຈຸບັນ ໂດຍນຳໃຊ້ຂໍ້ມູນຈາກສະໜາມ | -ແບບພິມ ເກັບກຳຂໍ້ມູນ<br>-ແຜນທີ່ ແລະ GPS (GNSS RTK, Dron RTK)<br>-GIS | -ຕາງໜ້າຄອບຄົວທີ່ມີໜ້າໃນສຳມະໂນຄົວ<br>-ຕາງໜ້າຈຸງານກະສິກຳ ແລະ ປ່າໄມ້ບ້ານ | - ທີມຍ່ອຍວາງແຜນທີ 1<br>- ທີມຍ່ອຍວາງແຜນທີ 2 |
| ມື້ທີ 3 | - ສືບຕໍ່ ດຳເນີນການເກັບກຳຂໍ້ມູນສຳມະໂນບັນຫາ ແລະ ທ່ານແຮງ ໂດຍແບ່ງກຸ່ມຍິງ, ຊາຍ, ຊົນເຜົ່າ;<br>- ສັງລວມຂໍ້ມູນ;<br>- ສືບຕໍ່: ສຳຫຼວດ ແລະ ທົບທວນຂອບເຂດ ແລະ ປະເພດການນຳໃຊ້ທີ່ດິນ ພາຍໃນບ້ານ;<br>- ສືບຕໍ່: ທົບທວນຄືນແຜນທີ່ການນຳໃຊ້ທີ່ດິນ ປະຈຸບັນໂດຍນຳໃຊ້ຂໍ້ມູນຈາກສະ ໜາມ | -ແບບພິມ ເກັບກຳຂໍ້ມູນ<br>-ແຜນທີ່ ແລະ GPS (GNSS RTK, Dron RTK),<br>-GIS | -ຕ່າງໜ້າຄອບຄົວມີໜ້າໃນສຳມະໂນຄົວ<br>-ຕາງໜ້າຈຸງານກະສິກຳ ແລະ ປ່າໄມ້ບ້ານ | - ທີມຍ່ອຍວາງແຜນທີ 1<br>- ທີມຍ່ອຍວາງແຜນທີ 2 |
| ມື້ທີ 4 | - ສືບຕໍ່ ສັງລວມຂໍ້ມູນ;<br>- ສ້າງລະບຽບ ແລະ ແຜນການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;<br>- ສືບຕໍ່ ສຳຫຼວດ ແລະ ທົບທວນຂອບເຂດ ແລະ ປະເພດການນຳໃຊ້ທີ່ດິນ ພາຍໃນບ້ານ<br>- ສ້າງແຜນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ອະນາຄົດ;<br>- ສົມທຽບ ຂໍ້ມູນປ່ຽນແປງການນຳໃຊ້ ທີ່ດິນ ແຜນທີ່ ປີ 2010 (ກະຊວງແຜນທີ່ ແມ່ນ ກະຊວງທີ່ພາກຫ້ອງການ) | - ແບບພິມ ເກັບກຳຂໍ້ມູນ<br>- ຮ່າງລະບຽບ ແລະ ແຜນ<br>- ແຜນທີ່ ແລະ GPS (GNSS RTK, Dron RTK)<br>- GIS | - ຕາງໜ້າ ຄອບຄົວທີ່ມີໜ້າໃນສຳມະໂນຄົວ<br>- ຕາງໜ້າຈຸງານກະສິກຳ ແລະ ປ່າໄມ້ບ້ານ<br>- ການຈັດຕັ້ງບ້ານ<br>- ຈຸງານກະສິກຳ ແລະ ປ່າໄມ້ບ້ານ | - ທີມຍ່ອຍວາງແຜນທີ 1<br>- ທີມຍ່ອຍວາງແຜນທີ 2 |
| ມື້ທີ 5 | - ສືບຕໍ່ ສັງລວມຂໍ້ມູນ ແລະ ວິເຄາະ ຂໍ້ມູນ<br>- ສືບຕໍ່ ສ້າງລະບຽບ ແລະ ແຜນການຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ບ້ານ<br>- ຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ | - ແບບພິມສັງລວມ<br>- ຮ່າງລະບຽບ<br>- ໂຄງຮ່າງແຜນຄຸ້ມຄອງທີ່ດິນ | - ປະຊາຊົນໝົດບ້ານ | - ທີມຍ່ອຍວາງແຜນທີ 1<br>- ທີມຍ່ອຍວາງແຜນທີ 2 |
| ມື້ທີ 6 | - ປະຊຸມທີມງານຜ່ານຂໍ້ມູນທີ່ສັງລວມ ແລະ ວິເຄາະ<br>- ກຳນົດເງື່ອນໄຂໃນການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ໂດຍອີງໃສ່ການວິເຄາະຂໍ້ມູນ<br>- ສືບຕໍ່ຂຽນແຜນຄຸ້ມຄອງ | - ແບບພິມ ສັງລວມ ແລະ ວິເຄາະຂໍ້ມູນ<br>- ໂຄງຮ່າງແຜນຄຸ້ມຄອງທີ່ດິນ | | ທີມຍ່ອຍວາງແຜນ ທີ 1<br>ທີມຍ່ອຍວາງແຜນ ທີ 2 |

| | | | | |
|---|---|---|---|---|
| ມື້ທີ 7 | ກອງປະຊຸມນຳສະເໜີຜ່ານແຜນຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ບ້ານ ແລະ ສະຫຼຸບວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ | ບົດນຳສະເໜີແຜນຄຸ້ມຄອງ ບົດບັນທຶກກອງປະຊຸມ | ປະຊາຊົນໝົດບ້ານ ທັງຍິງ ແລະ ຊາຍ | ທີມງານ ສູນກາງ, ແຂວງ ແລະ ເມືອງ |
| ມື້ທີ 8 | ກອງປະຊຸມສະເໜີຜ່ານແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ ເມືອງ | ວາລະກອງປະຊຸມ ແລະ ຮ່າງແຜນ | ການຈັດຕັ້ງບ້ານ ແລະ ຈຸງານກະສິກຳ ແລະ ປ່າໄມ້ບ້ານ | ທີມງານ ສູນກາງ, ແຂວງ, ເມືອງ ແລະ ການຈັ້ງຕັ້ງບ້ານ |
| ມື້ທີ 9 | ເດີນທາງກັບ | | | |

## ຂັ້ນຕອນ 2 ແຕ່ງຕັ້ງ ຄະນະຊີ້ນຳຂັ້ນເມືອງ ແລະ ທີມງານວິຊາການ

- **ຄະນະຊີ້ນຳຂັ້ນເມືອງ ປະກອບດ້ວຍ:**
  1) ທ່ານ ປະທານ ຫຼື ຮອງປະທານ ຄະນະກຳມະການປົກຄອງຂັ້ນເມືອງ ເປັນຫົວໜ້າ;
  2) ທ່ານຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຮອງ;
  3) ບັນດາຫົວໜ້າ ຫຼື ຮອງຫ້ອງການທີ່ກ່ຽວຂ້ອງ ຂັ້ນເມືອງ (ໂຍທາທິການ ແລະ ຂົນສົ່ງ, ວັດທະນະທຳ ແລະ ການທ່ອງທ່ຽວ, ອຸດສາຫະກຳ ແລະ ການຄ້າ, ການເງິນ, ກອງບັນຊາການທະຫານຂັ້ນເມືອງ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ, ຄະນະຈັດຕັ້ງ, ແນວລາວສ້າງຊາດ ຂັ້ນເມືອງ, ສະຫະພັນແມ່ຍິງຂັ້ນເມືອງ) ເປັນຄະນະ.
- **ຄະນະຊີ້ນຳຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:**
  1) ຊີ້ນຳການຈັດຕັ້ງປະຕິບັດວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້;
  2) ອຳນວຍຄວາມສະດວກໃນການເຂົ້າເຖິງຂໍ້ມູນທີ່ຈຳເປັນ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ຂັ້ນເມືອງ ແລະ ຂັ້ນບ້ານ;
  3) ເຂົ້າຮ່ວມກອງປະຊຸມຕ່າງໆ ທີ່ຈັດຂຶ້ນກ່ຽວກັບການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້;
  4) ພິຈາລະນາ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນ ໃນຂະບວນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້;
  5) ດຳເນີນຂັ້ນຕອນຕ່າງໆ ເພື່ອຜ່ານ ແລະ ຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
  6) ຊີ້ນຳ, ຕິດຕາມ, ຊຸກຍູ້ ແລະ ແນະນຳ ທີມງານວິຊາການ ເພື່ອໃຫ້ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສຳເລັດຕາມຄາດໝາຍທີ່ວາງໄວ້;
  7) ລາຍງານ ແລະ ນຳສະເໜີ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຕໍ່ຄະນະກຳມະການປົກຄອງຂັ້ນແຂວງ ເພື່ອພິຈາລະນາ ແລ້ວນຳສະເໜີ ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ.

**ຄະນະທີມງານວິຊາການ ປະກອບມີ 4 ທີມງານໃຫຍ່ ແລະ 2 ທີມງານຍ່ອຍ ດັ່ງນີ້:**

1. **ທີມງານເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ (FPIC):** ທີມງານນີ້ເລັ່ງໃສ່ ຈັດຕັ້ງປະຕິບັດຂະບວນການ ປຶກສາຫາລືກັບປະຊາຊົນໃນຄັ້ງທຳອິດ ເພື່ອສົ່ງເສີມສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ ແລະ ຍົກສູງຄວາມສະເໝີພາບ ຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງຊຸມຊົນ, ທີມງານນີ້ປະກອບມີສະມາຊິກ 5 ທ່ານ ພາຍໃຕ້ການອຳນວຍຄວາມສະດວກຂອງ ແນວລາວສ້າງຊາດ ແລະ ສະຫະພັນແມ່ຍິງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ຫ້ອງການຄະນະກຳມະການປົກຄອງຂັ້ນເມືອງ.
2. **ທີມງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ**: ການຈັດຕັ້ງປະຕິບັດວຽກງານພາກສະໜາມ ທີມງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຈະໄດ້ ແບ່ງອອກ ເປັນສອງທີມຍ່ອຍ ເພື່ອເຮັດວຽກ ສອງ ຢ່າງແຕກຕ່າງກັນ ຄື: ທີມຍ່ອຍທີ 1 ເຮັດໜ້າທີ່ໃນການເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນ, ສ້າງລະບຽບ ແລະ ຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ແລະ ທີມຍ່ອຍທີ 2 ເຮັດໜ້າທີ່ ໃນການ ສຳຫຼວດ-ເກັບກຳຂໍ້ມູນພາກສະໜາມ ແລະ ແຕ້ມແຜນທີ່. ສະນັ້ນ, ສິ່ງທີ່ຄວນຄຳນຶງ ໃນການແບ່ງທີມ ມີ ດັ່ງນີ້:

- ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ;

- ຜູ້ທີ່ຮັບຜິດຊອບແຕ່ລະໜ້າວຽກຄວນໄດ້ຮັບການຝຶກອົບຮົມ ແລະ ແນະນຳຢ່າງເຕມທີ່;
- ຄວາມຕ້ອງການຂອງໜ້າວຽກ ແລະ ປະສົບການ ຫຼື ທັກສະ ແລະ ຄວາມສາມາດຂອງສະມາຊິກ;
- ຄວາມສະໝັກໃຈຂອງທີມ;
- ປະກອບດ້ວຍ ແມ່ຍິງ ເພື່ອສົ່ງເສີມບົດບາດຍິງ-ຊາຍ;
- ການໃຫ້ໂອກາດໃນການຮຽນຮູ້ຂອງສະມາຊິກທີມງານ ໂດຍສະເພາະສົ່ງເສີມໃຫ້ແມ່ຍິງ ໄດ້ມີສ່ວນຮັບຜິດຊອບວຽກວິຊາການ;
- ຄວນມີການກຳນົດຫົວໜ້າທີມງານຍ່ອຍ ຊຶ່ງມີໜ້າທີ່ໃນການແບ່ງໜ້າວຽກ ແລະ ການສະຫຼຸບສັງລວມ ຜົນໄດ້ຮັບແຕ່ລະມື້;
- ຄວນມີກະກຽມເຄື່ອງມື ຂອງທີມງານໃນການເດີນສຳຫຼວດຂອບເຂດພື້ນທີ່ທີ່ຈະຮັບປະກັນຄວາມປອດໄພ ແລະ ຄວນມີການສຶກສາພື້ນທີ່ ແລະ ເສັ້ນທາງການເດີນສຳຫຼວດ ໂດຍນຳໃຊ້ແຜນທີ່ ແລະ ສອບຖາມ ປະຊາຊົນ ເພື່ອປະຢັດເວລາ, ເພີ່ມປະສິດທິພາບ ຫຼີກລ້ຽງຄວາມສ່ຽງທີ່ອາດຈະເກີດຂຶ້ນ;
- ທີມງານວິຊາການສຳຫຼວດແຕ່ລະທີມຢ່າງໜ້ອຍ ຄວນມີສອງຄົນ ທີ່ມາຈາກຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ;
- ກຳນົດຊາວບ້ານທີ່ຈະເຂົ້າຮ່ວມໃນການເດີນສຳຫຼວດຢ່າງໜ້ອຍ 3 ຄົນ ຕໍ່ທີມສຳຫຼວດ ເພື່ອຊ່ວຍນຳທາງ, ຂົນເຄື່ອງຊ່ວຍ ແລະ ຖາງແລວທາງ. ຖ້າເດີນສຳຫຼວດໃນພື້ນທີ່ມີຄວາມສ່ຽງ ຄວນມີກຳລັງປ້ອງກັນຄວາມສະຫງົບ (ປກສ) ໄປນຳ.

**ທີມງານວາງແຜນຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ບ້ານ ປະກອບດ້ວຍ:**

1) ຫົວໜ້າ ຫຼື ຮອງຫົວໜ້າໜ່ວຍງານປ່າໄມ້ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຫົວໜ້າ;
2) ຫົວໜ້າ ຫຼື ຮອງຫົວໜ້າໜ່ວຍງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເປັນຮອງ;
3) ພະນັກງານວິຊາການ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຈຳນວນ 4 ທ່ານ ເປັນຄະນະ;
4) ພະນັກງານວິຊາການ ຈາກຫ້ອງການໂຍທາທິການ ແລະ ຂົນສົ່ງ, ຄະນະຈັດຕັ້ງ, ສະຫະພັນແມ່ຍິງ, ແນວລາວສ້າງຊາດ ຂັ້ນເມືອງ ພາກສ່ວນລະ 1 ທ່ານ ເປັນຄະນະ.

**ທີມງານວາງແຜນຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

- ສ້າງແຜນການ ລະອຽດ ກ່ຽວກັບການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ເປັນຕົ້ນ ແຜນດຳເນີນງານ, ແຜນຈັດປະຊຸມ ແລະ ອື່ນໆ;
- ຈັດຕັ້ງປະຕິບັດບັນດາກິດຈະກຳ ທີ່ກຳນົດໄວ້ໃນແຜນການດຳເນີນງານ ເປັນຕົ້ນ ຈັດກອງປະຊຸມ ການເກັບກຳຂໍ້ມູນ, ສຳຫຼວດວັດແທກພາກສະໜາມ, ການສັງລວມ-ວິເຄາະຂໍ້ມູນ, ການແຕ້ມແຜນທີ່ຈັດສັນທີ່ດິນ ແລະ ປ່າໄມ້ຂັ້ນບ້ານ, ການສ້າງແຜນທີ່ຕ່າງໆ ຕາມມາດຕະຖານ-ເຕັກນິກ ເພື່ອປະກອບເຂົ້າໃນຮ່າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ສ້າງ ແລະ ປັບປຸງ ຮ່າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຕາມໂຄງຮ່າງທີ່ໄດ້ກຳນົດໄວ້ ພ້ອມທັງຈັດກອງປະຊຸມຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄວາມເປັນເອກະພາບຕໍ່ເນື້ອໃນຂອງແຜນດັ່ງກ່າວ;
- ສັງລວມບັນດາຂໍ້ມູນ ແລະ ເອກະສານທັງໝົດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານພາກສະໜາມ;
- ລາຍງານຄວາມຄືບໜ້າ, ຜົນສຳເລັດ ແລະ ບັນຫາຕ່າງໆ ກ່ຽວກັບການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ໃຫ້ຄະນະຊີ້ນຳ ຂັ້ນເມືອງ ເປັນແຕ່ໄລຍະ;
- ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ທີມງານວາງແຜນຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ບ້ານ ປະກອບມີ 2 ທີມງານຍ່ອຍ ຄື:** ① ທີມງານເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນ,ສ້າງລະບຽບ ແລະ ສ້າງແຜນວຽກຍ່ອຍ ແລະ ② ທີມງານສຳຫຼວດ-ເກັບກຳຂໍ້ມູນພື້ນທີ່ພາກສະໜາມ ແລະ ແຕ້ມແຜນທີ່ ດັ່ງນີ້:

**ທີມງານຍ່ອຍທີ 1:** ທີມງານເກັບກຳ, ສັງລວມ ແລະ ວິເຄາະຂໍ້ມູນ,ສ້າງລະບຽບ ແລະ ສ້າງແຜນວຽກຍ່ອຍ ເຮັດໜ້າທີ່ໃນການເກັບກຳຂໍ້ມູນລວມບ້ານ ແລະ ຂໍ້ມູນຄອບຄົວ, ສັງລວມຂໍ້ມູນໂດຍນຳໃຊ້ແບບຟອມສັງລວມ, ວິເຄາະ

ຂໍ້ມູນ, ສ້າງແຜນໃນການນໍາໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ປ່າໄມ້, ສ້າງລະບຽບໃນການຄຸ້ມຄອງທີ່ດິນ ແລະ ປ່າໄມ້ ໂດຍມີການແບ່ງຄວາມຮັບຜິດຊອບໃຫ້ແຕ່ລະທ່ານ ດັ່ງສະແດງອອກໃນຕາຕະລາງລຸ່ມນີ້:

| ລດ | ຊື່ | ພາກສ່ວນ | ຮັບຜິດຊອບ |
|---|---|---|---|
| 1 | ທ່ານ | ຫກສ | ຫົວໜ້າທີມ ຮັບຜິດຊອບວາງແຜນ ແລະ ຈັດສັນໜ້າວຽກ ໃຫ້ທີມ ງານແຕ່ລະມື້, ສະໜັບສະໜູນທີມ, ກວດກາຄວາມຖືກຕ້ອງ ແລະ ສັງລວມຂໍ້ມູນ |
| 2 | ທ່ານ | ຫກສ | ເກັບກໍາ, ສໍາພາດ ຂໍ້ມູນ ລະດັບຄອບຄົວ ໂດຍສະເພາະຂໍ້ມູນສັງລວມກ່ຽວກັບທີ່ດິນ |
| 3 | ທ່ານ | ພກສ | ເກັບກໍາ, ສໍາພາດ ຂໍ້ມູນ ລະດັບຄອບຄົວ ໂດຍສະເພາະຂໍ້ມູນສັງລວມກ່ຽວກັບທີ່ດິນ |
| 4 | ທ່ານ | ພກສ | ເກັບກໍາ, ສໍາພາດ ຂໍ້ມູນ ລະດັບຄອບຄົວ ໂດຍສະເພາະຂໍ້ມູນສັງລວມກ່ຽວກັບທີ່ດິນ |

**ທີມງານຍ່ອຍທີ 2**: ທີມງານສໍາຫຼວດ-ເກັບກໍາຂໍ້ມູນພື້ນທີ່ພາກສະໜາມ ແລະ ແຕ້ມແຜນທີ່ ເຮັດໜ້າທີ່ໃນການປຶກ ສາຫາລືກັບ ການຈັດຕັ້ງຊຸມຊົນບ້ານ ທີ່ມີຂອບເຂດຕິດຈອດກັນ ເພື່ອເປັນເອກະພາບເລື່ອງເຂດຄຸ້ມຄອງ ບ້ານ, ລົງສໍາຫຼວດຂອບເຂດຄຸ້ມຄອງບ້ານ, ສໍາຫລູດຂອບເຂດ ແລະ ປະເພດການນໍາໃຊ້ ທີ່ດິນແຕ່ລະປະເພດ ແມ່ນຕ້ອງນໍາໃຊ້ກ້ອງ GNSS RTK, Dron RTK ເທົ່ານັ້ນ (ເນື່ອງຈາກມີຄ່າຜິດດ່ຽງຕໍ່າທີ່ສຸດ ແລະ ຈະສະດວກໃນເວລາສໍາຫຼວດທີ່ດິນສະເພາະຕອນ ຈຶ່ງບໍ່ມີບັນຫາກ່ຽວກັບເນື້ອທີ່ດິນມີຄວາມຜິດດ່ຽງ) ເວັ້ນເສຍແຕ່ໃນກໍລະນີ ພື້ນທີ່ເປັນພູຜາ, ປ່າໄມ້ຕຶບໜາ, ການເດີນທາງຫຍຸ້ງຍາກ, ແມ່ນໍ້າ ແມ່ນອະນຸຍາດໃຫ້ໃຊ້ GPS ອື່ນເປັນຕົ້ນ Gamin ລະອຽດໄດ້ແນະນໍາຂ້າງເທິງນັ້ນກ່ຽວກັບອຸປະກອນສໍາຫຼວດວັດແທກ, ສ້າງແຜນທີ່ປະເພດທີ່ດິນ ແລະ ປ່າໄມ້, ຂອບເຂດຄຸ້ມຄອງ ແລະ ແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ ແລະ ອະນາຄົດ ໂດຍມີການແບ່ງຄວາມຮັບຜິດຊອບໃຫ້ແຕ່ລະທ່ານດັ່ງສະແດງອອກໃນຕາຕະລາງລຸ່ມນີ້:

| ລດ | ຊື່ | ພາກສ່ວນ | ຮັບຜິດຊອບ |
|---|---|---|---|
| 1 | ທ່ານ | ຫກສ | ຫົວໜ້າທີມ ຮັບຜິດຊອບວາງແຜນ ໜ້າວຽກໃຫ້ທີມງານແຕ່ລະມື້, ສະໜັບສະໜູນທີມ, ກວດກາຄວາມຖືກຕ້ອງ, ສັງລວມຂໍ້ມູນ, ແຕ້ມແຜນທີ່ |
| 2 | ທ່ານ | ຫກສ | ສໍາຫຼວດ-ເກັບກໍາຂໍ້ມູນພາກສະໜາມ |
| 3 | ທ່ານ | ພກສ | ສໍາຫຼວດ-ເກັບກໍາຂໍ້ມູນພາກສະໜາມ |
| 4 | ທ່ານ | ພກສ | ສໍາຫຼວດ-ເກັບກໍາຂໍ້ມູນພາກສະໜາມ |

3. **ທີມງານສໍາຫຼວດວັດແທກ ແລະ ຂຶ້ນທະບຽນ**: ທີມງານນີ້ມີໜ້າທີ່ດໍາເນີນການສໍາຫຼວດ ວັດແທກຕອນດິນສະເພາະຕອນ ດ້ວຍກ້ອງ RTK ທີ່ເຊື່ອມກັບລະບົບຖານຂໍ້ມູນທີ່ດິນ Lao Land Reg, ສ້າງແຜນທີ່ຕາດິນ ເພື່ອເປັນຂໍ້ມູນໃນການພິຈາລະນາຕາມເງື່ອນໄຂຂ້າງເທິງວ່າ ທີ່ດິນຕອນໃດ ສາມາດອອກໃບຕາດິນ ຫຼື ອອກໃບຢັ້ງຢືນການນໍາໃຊ້ທີ່ດິນ ຫຼື ເຮັດສັນຍາວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ທີມງານນີ້ ປະກອບມີ ສະມາຊິກ 11 ທ່ານ.
4. **ທີມງານຕິດຕາມ ກວດກາ:** ມີໜ້າທີ່ສະໜັບສະໜູນການຕິດຕາມແຜນການ, ການປະຕິບັດ ຕາມສິດໃນການນໍາໃຊ້ທີ່ດິນ, ຂໍ້ຕົກລົງ ແລະ ສັນຍາ, ລວມທັງການ ແກ້ໄຂຂໍ້ຂັດແຍ້ງທີ່ດິນ. ທີມງານນີ້ ປະກອບມີ ສະມາຊິກ 12 ທ່ານ ຈາກກອງກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທີ່ຂຶ້ນກັບ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

ວິຊາການບາງທ່ານອາດຈະຖືກມອບໝາຍໃຫ້ເຂົ້າຮ່ວມໃນຫຼາຍທີມກໍເປັນໄດ້ ຂຶ້ນກັບການຈັດສັນເວລາ. ໃນແຕ່ລະທີມ, ມີການຈັດແບ່ງໜ້າທີ່ຮັບຜິດຊອບ ໂດຍສະເພາະແມ່ນ ມີພະນັກງານວິຊາການທີ່ຮັບຜິດຊອບເຮັດໜ້າທີ່ອໍານວຍຄວາມສະດວກໃຫ້ສົ່ງເສີມຄວາມຮູ້ ແລະ ຄວາມສະເໝີພາບຍິງ-ຊາຍ ທີ່ໄດ້ຜ່ານການຝຶກອົບຮົມ ແລ້ວ ແລະ ຄວນມີເພດຍິງຢ່າງໜ້ອຍ 30% ໃນແຕ່ລະທີມ.

ຕາຕະລາງ: ອີງປະກອບຂອງທັງ 4 ທີມຄວນມີຈຳນວນສະມາຊິກ ດັ່ງລຸ່ມນີ້:

| ພາກສ່ວນ | ທີມງານເສີມຂະຫຍາຍສິດ (FPIC) | ທີມງານວາງແຜນ | ທີມງານສຳຫຼວດ ວັດແທກ ແລະ ສອບຖາມສິດ | ທີມງານ ຕິດຕາມ ກວດກາ |
|---|---|---|---|---|
| ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ | | 4 (ຂະແໜງປ່າໄມ້ 1, ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ 3 (ຮັບຜິດຊອບວຽກຈັດສັນທີ່ດິນ 2 ແລະ ຈັດສັນດິນກະສິກຳ 1) | 4 (ຂະແໜງປ່າໄມ້, ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ) | 3 |
| ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ | 1 | 6 (ໜ່ວຍງານຄຸ້ມຄອງ ແລະ ພັດທະນາທີ່ດິນ 4, ໜ່ວຍງານສິ່ງແວດລ້ອມ ແລະ ປ່າໄມ້ 2) | 6 (ໜ່ວຍງານປ່າໄມ້) | 6 (ໜ່ວຍງານສິ່ງແວດລ້ອມ ແລະ ປ່າໄມ້) |
| ຄະນະຈັດຕັ້ງ ຂັ້ນເມືອງ | 1 | | | 1 |
| ສະຫະພັນແມ່ຍິງ ຂັ້ນເມືອງ | 1 | 1 | 1 | 1 |
| ແນວລາວສ້າງຊາດ ຂັ້ນເມືອງ | 1 | 1 | | 1 |
| **ຈຳນວນທັງໝົດ** | **5** | **10** | **11** | **12** |

## ຂັ້ນຕອນ 3 ຈັດຝຶກອົບຮົມໃຫ້ທີມງານວິຊາການ

ການຈັດຝຶກອົບຮົມ ມີຄວາມສຳຄັນ ແລະ ຈຳເປັນ ເພື່ອສ້າງຂີດຄວາມສາມາດໃຫ້ແກ່ທີມງານວິຊາການຂັ້ນແຂວງ ແລະ ເມືອງ ໃຫ້ມີຄວາມພ້ອມ ກ່ອນທີ່ຈະລົງຈັດຕັ້ງປະຕິບັດຕົວຈິງຢູ່ພາກສະໜາມ. ເປົ້າໝາຍ ຂອງການຝຶກອົບຮົມ ເພື່ອໃຫ້ທີມງານວິຊາການດັ່ງກ່າວ ມີຄວາມຮູ້, ຄວາມສາມາດ ແລະ ທັກສະ ໃນການດຳເນີນການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ, ການເຜີຍແຜ່ປະຊາສຳພັນ, ການປູກຝັງຈິດສຳນຶກບົດບາດຍິງຊາຍ, ການດຳເນີນການວາງແຜນຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ບ້ານ, ການສຳຫຼວດ-ວັດແທກ, ສອບຖາມສິດ ເພື່ອພິຈາລະນາວ່າຕອນດິນໃດ ທີ່ສາມາດອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ສ້າງສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ພ້ອມທັງ ທັກສະການອຳນວຍຄວາມສະດວກກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມກັບປະຊາຊົນຕະຫຼອດຂະບວນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ຊຶ່ງຕ້ອງປະກອບດ້ວຍຜູ້ທີ່ມີຄວາມຮູ້ ແລະ ທັກສະ ສະເພາະດ້ານໃນແຕ່ລະທີມງານ ດັ່ງນີ້:

1) ທີມງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຕ້ອງປະກອບດ້ວຍຜູ້ທີ່ມີຄວາມຮູ້ ແລະ ທັກສະ ດັ່ງນີ້:
   - ມີຄວາມຮູ້ດ້ານການນຳໃຊ້ໂປແກຣມ GIS 1-2 ຄົນ;
   - ມີຄວາມຮູ້ ແລະ ຄວາມສາມາດໃນການນຳໃຊ້ GPS, IBASS (ກ້ອງ GNSS RTK, Dron RTK) 2 ຫາ 4 ຄົນ;
   - ມີຄວາມຮູ້ ແລະ ຄວາມສາມາດໃນການດຳເນີນການເສີມຂະຫຍາຍສິດເປັນເຈົ້າ ຂອງ ປະຊາຊົນ ບັນດາເຜົ່າ 4 ຄົນ;
   - ມີຄວາມຮູ້ ແລະ ຄວາມສາມາດໃນການດຳເນີນການເຜີຍແຜ່ປະຊາສຳພັນວຽກງານຮັບຮູ້ສິດ 4 ຄົນ;
   - ມີຄວາມຮູ້ ແລະ ຄວາມສາມາດໃນການດຳເນີນການເຜີຍແຜ່ບົດບາດຍິງຊາຍ 2 ຄົນ;
   - ມີຄວາມສາມາດໃນການອຳນວຍຄວາມສະດວກ ກອງປະຊຸມປຶກສາຫາລືສ້າງແຜນທີ່ແບບ ມີສ່ວນ ຮ່ວມກັບປະຊາຊົນພາຍໃນຊຸມຊົນບ້ານ;
   - ມີຄວາມສາມາດໃນການເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ກວດກາຄວາມຖືກຕ້ອງ, ປ້ອນຂໍ້ມູນເຂົ້າຖານຂໍ້ມູນທະບຽນທີ່ດິນ Lao Land Reg, ວິເຄາະຂໍ້ມູນ ແລະ ນຳໃຊ້ຜົນການວິເຄາະຂໍ້ມູນເຂົ້າໃນ ການສ້າງແຜນ ຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ 4 ຄົນ.

2) ທີມງານສໍາຫຼວດວັດແທກ, ຂຶ້ນທະບຽນອອກໃບຕາດິນ ຂັ້ນເມືອງ ຕ້ອງປະກອບດ້ວຍຜູ້ທີ່ມີ ຄວາມຮູ້ ແລະ ທັກສະ ດັ່ງນີ້:
   - ມີຄວາມຮູ້ ແລະ ຄວາມສາມາດໃນການນໍາໃຊ້ໂປຼແກມ ຖານຂໍ້ມູນ PG admin 10, ໂປຼແກຼມ LandReg ແລະ ໂປຣແກຣມ QGIS 6 ຄົນ;
   - ມີຄວາມຮູ້ ແລະ ຄວາມສາມາດໃນການສອບຖາມສິດ 4 ຄົນ;
   - ມີຄວາມຮູ້ ແລະ ຄວາມສາມາດໃນການ ສໍາຫຼວດວັດແທກ 4 ຄົນ;
   - ມີຄວາມຮູ້ ແລະ ຄວາມສາມາດໃນການ ນໍາໃຊ້ໂປແກມ LUIS 2 ຄົນ.

ການຈັດຝຶກອົບຮົມ ຈະຈັດຂຶ້ນຢູ່ເມືອງ ຕາມດ້ວຍການລົງປະຕິບັດຕົວຈິງຢູ່ບ້ານ. ໃນເບື້ອງຕົ້ນ ຄວນ ປະເມີນ ລະດັບຄວາມຮູ້, ຄວາມສາມາດ ແລະ ທັກສະ ຂອງທີມງານວິຊາການ ຕາມທີ່ກໍານົດໄວ້ຂ້າງເທິງ ເພື່ອນໍາມາວາງແຜນ ແລະ ກໍານົດຫົວຂໍ້ການຝຶກອົບຮົມ. ສໍາລັບ ຫົວຂໍ້ການຝຶກອົບຮົມ ປະກອບມີ ດັ່ງນີ້:

- ວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ (ວາລະ 14 ວັນ) ປະກອບມີຫົວຂໍ້ຝຶກອົບຮົມດັ່ງນີ້:
  1) ບາດກ້າວ ແລະ ຂັ້ນຕອນການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
  2) ການແນະນໍາການການເກັບກໍາຂໍ້ມູນ ແລະ ການສໍາຫຼວດພາກສະໜາມ;
  3) ເຕັກນິກການສ້າງແຜນທີ່ ດ້ວຍລະບົບ GIS ແລະ GPS;
  4) ການຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ;
  5) ການນໍາເຂົ້າຂໍ້ມູນການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ (LUIS).
- ການເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນລາວບັນດາເຜົ່າ (FPIC) (ວາລະ 2 ວັນ, ເຮັດຕົວຈິງ ບ້ານລະ 1 ວັນ);
- ການເຜີຍແຜ່ປະຊາສໍາພັນ (ວາລະ 3 ວັນ, ເຮັດຕົວຈິງ ບ້ານລະ 1 ວັນ);
- ເຜີຍແຜ່ວຽກງານຄວາມສະເໝີພາບຍິງຊາຍ ແລະ ການເຊື່ອມສານບົດບາດຍິງຊາຍໃນຂະບວນການຮັບຮູ້ສິດນໍາ ໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ (ວາລະ 4 ວັນ, ເຮັດຕົວຈິງ ບ້ານລະ 1 ວັນ);
- ການສໍາຫຼວດ-ວັດແທກ, ສອບຖາມສິດ, ຂຶ້ນທະບຽນອອກໃບຕາດິນ ຫຼື ໃບຢັ້ງຢືນ ຫຼື ສັນຍາຄຸ້ມຄອງ, ປົກປັກ ຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ (ວາລະ 14 ວັນ).

## ຂັ້ນຕອນ 4 ການປະສານງານ ແລະ ນັດບ້ານເປົ້າໝາຍ

ກ່ອນທີ່ຈະເດີນທາງໄປເຮັດວຽກຢູ່ພາກສະໜາມ ຕ້ອງປະສານເພື່ອນັດໝາຍກັບບ້ານເປົ້າໝາຍ ກ່ອນລ່ວງ ໜ້າຢ່າງໜ້ອຍ 5 ວັນ ເພື່ອໃຫ້ການຈັດຕັ້ງບ້ານ ແລະ ຊາວບ້ານ ມີເວລາກະກຽມເຂົ້າຮ່ວມກິດຈະກໍາ. ຫ້ອງການ ກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ ອອກແຈ້ງການ ເຖິງ ການຈັດຕັ້ງບ້ານ ໂດຍມີເນື້ອໃນລະບຸ ຈຸດປະສົງ, ຕາຕະ ລາງເວລາເຮັດວຽກ, ເນັ້ນໃຫ້ມີຜູ້ເຂົ້າຮ່ວມກອງປະຊຸມ ປະກອບດ້ວຍທັງ ຍິງ ແລະ ຊາຍ, ຜູ້ເສຍອົງຄະ, ຜູ້ດ້ອຍ ໂອກາດ, ຊົນເຜົ່າ ຢ່າງລະອຽດ ເພື່ອໃຫ້ປະຊາຊົນ ແລະ ການຈັດຕັ້ງຊຸມຊົນບ້ານ ຮັບຊາບ ຢ່າງຈະແຈ້ງ. ກ່ອນຈະ ຮອດມື້ປະຊຸມ ທີມງານວິຊາການຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ ຄວນປະສານຫາການຈັດຕັ້ງ ຊຸມຊົນບ້ານ ອີກເທື່ອໜຶ່ງ ເພື່ອຢໍ້າຄືນ ແຜນການປະຊຸມ ຕາມແຈ້ງການໄປກ່ອນໜ້ານີ້.

## ຂັ້ນຕອນ 5 ດໍາເນີນວຽກການສົ່ມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ (FPIC) ແລະ ຄວາມສະເໝີພາບ ຍິງຊາຍ ໃນວຽກການຮັບຮູ້ສິດນໍາໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

ດັ່ງທີ່ຮູ້ນໍາກັນວ່າ ມີປະຊາຊົນຈໍານວນຫຼວງຫຼາຍໄດ້ອາໄສຢູ່ໃນເຂດປ່າໄມ້ ເຖິງ 1 ໃນ 3 ຂອງປະຊາກອນ ທົ່ວປະເທດ ແລະ ສ່ວນໃຫຍ່ ປະຊາຊົນດັ່ງກ່າວ ໄດ້ອາໄສຢູ່ກັບປ່າໄມ້ ມາເປັນເວລາດົນນານ ກ່ອນທີ່ເຂດປ່າ ຈະໄດ້ ສ້າງຕັ້ງຂຶ້ນ. ການດໍາລົງຊີວິດຂອງປະຊາຊົນ ແມ່ນອາໄສການນໍາໃຊ້ ທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນ ທໍາມະຊາດ ຕາມປະເພນີ. ແຕ່ເຖິງຢ່າງໃດກໍ່ຕາມ, ການດໍາລົງຊີວິດ ຂອງພວກເຂົາເຈົ້າ ໄດ້ມີຜົນກະທົບ ຕໍ່ກັບປ່າໄມ້ ແລະ ຊີວະ ນາໆພັນ. ເພື່ອສະໜັບສະໜູນການພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ລັດຖະບານ ໄດ້ປັບປຸງນະ ໂຍບາຍ ເພື່ອໃຫ້ຮັບຮູ້ສິດການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂອງປະຊາຊົນບັນດາເຜົ່າ ໂດຍຜ່ານຂະບວນການວາງແຜນ

ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນເຂດທີ່ດິນປ່າໄມ້. ແຕ່ເພື່ອເປັນການສ້າງຄວາມສົມດູນ ລະຫວ່າງ ການປັບປຸງຊີວິດການເປັນຢູ່ ແລະ ເວລາດຽວກັນ ກໍເພື່ອຮັບປະກັນເປົ້າໝາຍການອະນຸລັກປ່າໄມ້ ປະຊາຊົນຕ້ອງມີຄວາມເຕັມໃຈ ແລະ ເຫັນດີເຫັນພ້ອມ ທີ່ຈະເຂົ້າຮ່ວມໃນຂະບວນການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້. ເພາະຖ້າປາສະຈາກການມີສ່ວນຮ່ວມ ຈາກປະຊາຊົນແລ້ວ ການອະນຸລັກຮັກສາຊັບພະຍາກອນປ່າໄມ້ ແມ່ນບໍ່ສາມາດອະນຸລັກຮັກສາໄດ້. ນອກຈາກນີ້, ຕ້ອງຮັບຮູ້ວ່າ ປະຊາຊົນ ທີ່ອາໄສຢູ່ໃນປ່າ ຖືວ່າ ເປັນຜູ້ນຳໃຊ້ ແລະ ຄຸ້ມຄອງປ່າໄມ້ ຮ່ວມກັບພາກລັດຂັ້ນທ້ອງຖິ່ນ. ດັ່ງນັ້ນ, ເຂົາເຈົ້າ ຕ້ອງໄດ້ຮັບສິດ ໃນການເຂົ້າຮ່ວມກອງປະຊຸມປຶກສາຫາລື, ມີສ່ວນຮ່ວມໃນຂະບວນການຕັດສິນໃຈບັນດາຜົນກະທົບທີ່ອາດຈະເກີດຂຶ້ນກັບເຂົາເຈົ້າ.

ເພື່ອສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນເຂົ້າໃນວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດນຳໃຊ້ທີ່ດິນ ແລະ ປ່າໄມ້ໃນເຂດທີ່ດິນປ່າໄມ້, ການດຳເນີນວຽກງານເສີມຂະຫຍາຍສິດ ຫຼື ເຫັນດີ ເຫັນພ້ອມ ແບບສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ຈຶ່ງເປັນສິ່ງໜຶ່ງທີ່ສຳຄັນ ແລະ ຈຳເປັນ. ຂະບວນການ FPIC ເປັນທີ່ຍອມຮັບໃນລະດັບສາກົນ ທີ່ສາມາດເປັນສິ່ງທີ່ຢັ້ງຢືນວ່າ: ສິດທິຂອງປະຊາຊົນບັນດາເຜົ່າແມ່ນໄດ້ຮັບການເຄົາລົບ ທັງໃນພາກປະຕິບັດ ແລະ ພາກທິດສະດີ. ການນຳເອົາຂະບວນການ FPIC ເຂົ້າໃນການດຳເນີນງານຂອງວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແບບມີສ່ວນຮ່ວມ ແມ່ນມີຈຸດປະສົງເພື່ອຫຼຸດຜ່ອນບັນດາຜົນກະທົບທີ່ຈະຕາມມາ ແລະ ເປັນການສົ່ງເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ ໃຫ້ມີສ່ວນຮ່ວມຢ່າງເຕັມທີ່ ໃນຂະບວນການ ວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້. ດັ່ງນັ້ນ, ວຽກງານ FPIC ຈະຕ້ອງໄດ້ຖືກຈັດຕັ້ງປະຕິບັດຢ່າງ ໜ້ອຍ 2 ອາທິດ ກ່ອນຈະເລີ່ມຕົ້ນ ແລະ ຈະສືບຕໍ່ຈັດຕັ້ງປະຕິບັດ ໃນແຕ່ລະບາດກ້າວ ແລະ ຂັ້ນຕອນທີ່ສຳຄັນຂອງຂະບວນການວາງແຜນ ແລະ ຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້. ການດຳເນີນຂະບວນການ FPIC ໃນວຽກງານນີ້, ປະກອບດ້ວຍ ກອງປະຊຸມປຶກສາຫາລືໃນຂັ້ນທ້ອງຖິ່ນ ແບບລວມ ແລະ ແຍກກຸ່ມຕ່າງຫາກສຳລັບຜູ້ຊາຍ, ແມ່ຍິງ, ແລະ ຊົນເຜົ່າ ເພື່ອຮັບປະກັນການມີສ່ວນຮ່ວມ, ທົບທວນແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ມີ, ການກຳນົດເຂດຄຸ້ມຄອງ, ເຂດ ແລະ ປະເພດການນຳໃຊ້ທີ່ດິນຂອງບ້ານ, ສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ຜ່ານ ແລະ ຮັບຮອງແຜນ ຊຶ່ງເນື້ອໃນລາຍລະອຽດຂອງ FPIC ໃນການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໄດ້ກຳນົດໄວ້ຢູ່ໃນ ຄູ່ມືແນະນຳຕ່າງໆ ຂອງກົມປ່າໄມ້ ພ້ອມທັງຫຼັກສູດ ແລະ ເຄື່ອງມື ໃນການຝຶກອົບຮົມ ຫົວຂໍ້ດັ່ງກ່າວ ກໍໄດ້ພັດທະນາຂຶ້ນເພື່ອຝຶກອົບຮົມໃຫ້ກັບທີມງານວິຊາການ ກ່ອນການດຳເນີນວຽກງານ.

## ບາດກ້າວ 2 ກອງປະຊຸມບ້ານ ແລະ ການເກັບກຳຂໍ້ມູນ

### ຂັ້ນຕອນ 1 ຈັດກອງປະຊຸມ ເພື່ອສະເໜີຈຸດປະສົງ, ປະຊາສຳພັນ ແລະວຽກງານປະຊາສຳພັນຂັ້ນບ້ານ

ການດຳເນີນວຽກງານປະຊາສຳພັນບ້ານ ແມ່ນການຈັດກອງປະຊຸມບ້ານ ເພື່ອນຳສະເໜີກ່ຽວກັບຈຸດປະສົງ ແລະ ການຈັດຕັ້ງປະຕິບັດວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໃຫ້ກັບການຈັດຕັ້ງຊຸມຊົນບ້ານ, ປະຊາຊົນ ໄດ້ເຂົ້າໃຈ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ. ໃນກອງປະຊຸມດັ່ງກ່າວ ຕ້ອງຍົກໃຫ້ເຫັນຄວາມເປັນມາ, ຄວາມໝາຍຄວາມສຳຄັນຂອງວຽກງານ, ຂັ້ນຕອນ, ວິທີການ, ໄລຍະເວລາ ແລະ ກອບໜ້າວຽກກ່ຽວກັບຂະບວນການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້. ໃນນັ້ນທີມງານ ວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຈະເປັນຜູ້ນຳພາກອງປະຊຸມ ໂດຍນຳໃຊ້ເຕັກນິກຕ່າງໆ ໃນການກະຕຸ້ນການສົນທະນາ ເຊັ່ນ: ການສົນທະນາກັນເປັນກຸ່ມ, ການສະແດງລະຄອນ, ການນຳໃຊ້ແຜ່ນໂປສເຕີ້, ຮູບພາບ ແລະ ອື່ນໆ ເພື່ອດຶງດູດຄວາມສົນໃຈຂອງຊາວບ້ານ ແລະ ເຮັດໃຫ້ເຂົາເຈົ້າເຂົ້າໃຈໄດ້ດີ. ຖ້າບ້ານໃດ ທີ່ມີໄຟຟ້າ ແມ່ນໃຫ້ນຳໃຊ້ບົດນຳສະເໜີ ເປັນ PPT ແລະ ເຄື່ອງສາຍ LCD ໃນການອະທິບາຍຈະເປັນການດີ. ນອກນັ້ນ, ຄວນນຳເອົາບັນດາເອກະສານ ແລະ ອຸປະກອນຊະນິດຕ່າງໆ ຕາມທີ່ລະບຸໄວ້ໃນ ຂັ້ນຕອນ 2, ບາດກ້າວ 1 ຂ້າງເທິງນັ້ນ ມາປະກອບເຂົ້າໃນການອະທິບາຍ ຫຼື ການສົນທະນາ ເພື່ອໃຫ້ປະຊາຊົນເຂົ້າໃຈ ແລະ ມີສ່ວນຮ່ວມໃນຂະບວນການຈັດສັນທີ່ດິນ ແລະ ປ່າໄມ້ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້.

ກອງປະຊຸມປະຊາສຳພັນບ້ານ ແມ່ນໃຫ້ໄດ້ເຊີນເອົາຄະນະການຈັດຕັ້ງຊຸມຊົນບ້ານ ລວມທັງເຖົ້າແກ່ ແນວໂຮມ, ສະຫະພັນແມ່ຍິງ, ອົງການຈັດຕັ້ງມະຫາຊົນຕ່າງໆ, ປະຊາຊົນໝົດບ້ານ ຊຶ່ງຢ່າງໜ້ອຍໃຫ້ມີແມ່ຍິງ ເຂົ້າຮ່ວມກວມເອົາ 30% ພ້ອມທັງເຊື້ອເຊີນການຈັດຕັ້ງຊຸມຊົນບ້ານອ້ອມຂ້າງ ເຂົ້າຮ່ວມ. ກອງປະຊຸມຄັ້ງທຳອິດນີ້ ຄວນເລືອກຈັດຢູ່ຫ້ອງການບ້ານ, ໂຮງຮຽນ ຫຼື ສະຖານທີ່ ທີ່ມີຂະໜາດກວ້າງຂວາງເໝາະສົມ ຕາມເງື່ອນໄຂຕົວຈິງ.

ໃນການດຳເນີນການໂຄສະນາເຜີຍແຜ່ ຄວນໃຫ້ຜູ້ທີ່ຮູ້ພາສາເຜົ່າ ຫຼື ໃຊ້ນາຍແປພາສາ ເພື່ອຮັບປະກັນວ່າປະຊາຊົນຢູ່ພາຍໃນບ້ານ ທັງຍິງ-ຊາຍ ສາມາດເຂົ້າໃຈຂໍ້ມູນ ໃນເວລາເຮັດກິດຈະກຳປະຊາສຳພັນ. ກອງປະຊຸມປະຊາສຳພັນບ້ານ ມີເນື້ອໃນສຳຄັນ ດັ່ງນີ້:

**ຕາຕະລາງ 4 ຕົວຢ່າງວາລະກອງປະຊຸມປະຊາສຳພັນບ້ານ**

| ເວລາ | ນາທີ | ເນື້ອໃນ | ຜູ້ຮັບຜິດຊອບ ແລະ ວິທີການ |
|---|---|---|---|
| 08:00 - 08:30 | 30 | ການກະກຽມ ແລະ ລົງທະບຽນ | ນຳໃຊ້ແບບພິມ ລົງທະບຽນຜູ້ເຂົ້າຮ່ວມ |
| 08:30 - 08:40 | 10 | ກິດຈະກຳສ້າງຄວາມຄຸ້ນເຄີຍ | ທີມງານນຳພາດຳເນີນກິດຈະກຳ ມ່ວນຊື່ນ |
| 08:40 - 08:50 | 10 | ກ່າວຕ້ອນຮັບ, ຈຸດປະສົງກອງປະຊຸມ ແລະ ແນະນຳຜູ້ເຂົ້າຮ່ວມ | ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຈັດຕັ້ງພິທີ |
| 08:50 - 09:10 | 20 | ກ່າວເປີດ<br>ກ່າວມີຄຳເຫັນ | ຫົວໜ້າ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ |
| 09:10 - 09:20 | 10 | ມີຄຳເຫັນລາຍງານສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ | ການຈັດຕັ້ງບ້ານ |
| 09:20 - 11:00 | 100 | - ດຳເນີນວຽກງານປະຊາສຳພັນ<br>- ຄວາມເປັນມາ ແລະ ຄວາມໝາຍຄວາມສຳຄັນ ຂອງວຽກງານ ລວມທັງນິຕິກຳທີ່ກ່ຽວຂ້ອງ<br>- ຈຸດປະສົງເປົ້າໝາຍ<br>- ຂັ້ນຕອນວິທີການ ແລະ ໄລຍະເວລາ<br>- ບົດບາດຍິງ-ຊາຍໃນຂະບວນການດັ່ງກ່າວ<br>- ກົນໄກໃນການຮັບຟັງຄຳຮ້ອງທຸກໃນຂະບວນການ ຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້<br>- ພາລະບົດບາດ, ສິດ ແລະ ໜ້າທີ່ຮັບຜິດຊອບຂອງ ການຈັດຕັ້ງບ້ານ ແລະ ປະຊາຊົນໃນຂະບວນການ | ຕາງໜ້າທີມງານ ຈາກ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ນຳສະເໜີໂດຍມີບົດນຳສະເໜີ ແລະ ສື່ ສິ່ງປະຈັກຕາອື່ນໆ |
| 11:00 - 11:30 | 30 | - ຄັດເລືອກຈຸງານກະສິກຳ ແລະ ປ່າໄມ້ບ້ານ<br>- ສະເໜີຈຸດປະສົງ, ວິທີການ ແລະ ພາລະບົດບາດ<br>- ສະເໜີມາດຖານໃນການຄັດເລືອກ ແລະ ສະເໜີລາຍຊື່<br>- ລົງຄະແນນ ແບບປະຊາມະຕິ<br>- ສະເໜີຜົນການຄັດເລືອກ | ຕາງໜ້າທີມງານ ຈາກ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ |
| 11:30 - 11:50 | 20 | ປຶກສາຫາລື ທົບທວນຄືນແຜນຈັດສັນນຳໃຊ້ທີ່ດິນ ແລະ ປ່າໄມ້ບ້ານທີ່ເຮັດຜ່ານມາ ນຳໃຊ້ຕາຕະລາງລາຍການກວດເຊັກ | ຕາງໜ້າທີມງານ ຈາກຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ |
| 11:50 - 12:00 | 10 | ສະເໜີແຜນການເກັບກຳຂໍ້ມູນ, ການສຳຫຼວດ ແລະ ເກັບກຳຂໍ້ມູນພາກສະໜາມ | ຕາງໜ້າທີມງານ ຈາກຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ |
| 12:00 - 12:10 | 10 | ສະຫຼຸບກອງປະຊຸມ | ປະທານ |
| 12:10 - 13:30 | 80 | ພັກກິນເຂົ້າທ່ຽງ | ຜູ້ເຂົ້າຮ່ວມທຸກທ່ານ |
| 13:30 - 16:00 | | - ປຶກສາຫາລືກັບ ການຈັດຕັ້ງບ້ານອ້ອມຂ້າງກ່ຽວກັບເຂດຄຸ້ມຄອງຂອງບ້ານ ແລະ ລົງສຳຫຼວດຕົວຈິງ<br>- ດຳເນີນການເກັບກຳຂໍ້ມູນ ຂັ້ນບ້ານ ແລະ ຄອບຄົວ | ທີມງານ |

## ຂັ້ນຕອນ 2 ແຕ່ງຕັ້ງ ຈຸງານກະສິກຳ ແລະ ປ່າໄມ້ບ້ານ

ຈຸງານກະສິກຳ ແລະ ປ່າໄມ້ບ້ານ ຈະຖືກຄັດເລືອກ ໃນກອງປະຊຸມລວມບ້ານ ຊຶ່ງມີ ຜູ້ເຂົ້າຮ່ວມ ທີ່ມາຈາກແຕ່ລະຄອບຄົວ ພາຍໃນບ້ານ ແລະ ນຳສະເໜີ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ພິຈາລະນາຕົກລົງ ເພື່ອຈັດຕັ້ງປະຕິບັດວຽກງານວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່

ດິນປ່າໄມ້. ຈຸງານດັ່ງກ່າວ ແມ່ນຂຶ້ນກັບ ໜ່ວຍງານເສດຖະກິດ-ການເງິນ ຂອງຕາແສງ ແລະ ຢູ່ພາຍໃຕ້ການຊີ້ນຳຂອງຄະນະກຳມະການປົກຄອງຕາແສງ.

ຈຸງານກະສິກຳ ແລະ ປ່າໄມ້ ຄວນປະກອບມີຕາງໜ້າຈາກ ການຈັດຕັ້ງບ້ານ (ຫົວໜ້າ ຫຼື ຄະນະ), ຕາງໜ້າ ປະຊາຊົນພາຍໃນບ້ານ, ສະຫະພັນແມ່ຍິງບ້ານ ແລະ ແນວໂຮມບ້ານ ຊຶ່ງຈຸງານດັ່ງກ່າວ ຄວນເປັນຈຳນວນຄີກ ຢ່າງໜ້ອຍບໍ່ຫຼຸດ 5 ທ່ານ ຂຶ້ນກັບຂະໜາດຂອງບ້ານ ແລະ ມີຈຳນວນສະມາຊິກທີ່ເປັນ ແມ່ຍິງ ຢ່າງໜ້ອຍ (30%).

## ຂັ້ນຕອນ 3 ການແກ້ໄຂບັນຫາກ່ຽວກັບ ການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້

ການແກ້ໄຂບັນຫາ ກ່ຽວກັບການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ແມ່ນ ການແກ້ໄຂບັນຫາກ່ຽວກັບ ການກຳນົດເຂດ, ປະເພດປ່າໄມ້ ແລະ ທີ່ດິນປ່າໄມ້, ການຄອບຄອງນຳໃຊ້ທີ່ດິນ, ຜົນກະທົບທາງລົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ຄວາມກັງວົນ ແລະ ບັນຫາອື່ນ ທີ່ມີລັກສະນະບໍລິຫານ ຕາມກົດໝາຍ.

ທຸກການແກ້ໄຂບັນຫາ ຕ້ອງປະຕິບັດຕາມຫຼັກການປຶກສາຫາລືຢ່າງສັນຕິວິທີ ແລະ ເປັນທຳ ໂດຍເລີ່ມແຕ່ຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ. ຖ້າການແກ້ໄຂບໍ່ສຳເລັດ ຫຼື ບໍ່ສາມາດຕົກລົງກັນໄດ້ ໃຫ້ສະເໜີຫາ ຄະນະກຳມະການປົກຄອງຂັ້ນຕາແສງ ແລະ ຂັ້ນເມືອງ ພິຈາລະນາ ຕົກລົງແກ້ໄຂ ທາງດ້ານບໍລິຫານ ຕາມລຳດັບ. ໃນກໍລະນີ ຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈ ຕໍ່ການຕົກລົງແກ້ໄຂ ທາງດ້ານບໍລິຫານ ແມ່ນສະເໜີໃຫ້ ຄະນະກຳມະການປົກຄອງຂັ້ນແຂວງ ເປັນຜູ້ຄົ້ນຄວ້າ, ກວດກາ ແລະ ແກ້ໄຂ ບັນຫາດັ່ງກ່າວ ຕາມກົດໝາຍ ໂດຍໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ເປັນໃຈກາງປະສານສົມທົບກັບ ພະແນກການ ທີ່ກ່ຽວຂ້ອງ. ຖ້າ ຝ່າຍໃດຝ່າຍໜຶ່ງ ຫາກຍັງບໍ່ພໍໃຈຕໍ່ການຕົກລົງແກ້ໄຂນັ້ນ ຄະນະກຳມະການປົກຄອງຂັ້ນແຂວງ ຕ້ອງແຈ້ງໃຫ້ຄູ່ກໍລະນີ ເປັນລາຍລັກອັກສອນ ນຳບັນຫາດັ່ງກ່າວ ໄປຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາ ຕັດສິນ ຕາມກົດໝາຍ.

ໃນກໍລະນີທີ່ປະຊາຊົນມີຂໍ້ຂ້ອງໃຈຕ່າງໆ ໃຫ້ນຳສະເໜີຕໍ່ທີມງານຈັດສັນທີ່ດິນຂັ້ນບ້ານ, ທີມງານສຳຫຼວດວັດແທກ, ທີມງານສອບຖາມສິດ ໃນເວລາລົງເຮັດວຽກຕົວຈິງ, ຖ້າທີມງານດັ່ງກ່າວບໍ່ສາມາດຊີ້ແຈງກັບທີ່ໃຫ້ປະຊາຊົນມີຄວາມເພິ່ງພໍໃຈ ແມ່ນໃຫ້ໃຈະການປະຊາສຳພັນ ແລ້ວ ຈຶ່ງປຶກສາຫາລືກັບຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ການຈັດຕັ້ງບ້ານ, ແນວໂຮມບ້ານ ຫຼື ແນວລາວສ້າງຊາດເມືອງ, ສະຫະພັນແມ່ຍິງເມືອງ ເພື່ອຊ່ວຍໃນການຊີ້ແຈງໃຫ້ປະຊາຊົນໄດ້ເຂົ້າໃຈ. ຖ້າຫາກປະຊາຊົນຍັງມີຄວາມບໍ່ພໍໃຈ ແມ່ນໃຫ້ນຳເອົາບັນຫາດັ່ງກ່າວ ນຳສະເໜີ ຄະນະຊີ້ນຳວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ຂັ້ນເມືອງ ແລະ ຂັ້ນແຂວງ ພິຈາລະນາ.

ການຊີ້ແຈງຕໍ່ຂໍ້ຂ້ອງໃຈ, ຄຳສະເໜີ ແລະ ຄວາມສົນໃຈ ຂອງປະຊາຊົນ ແມ່ນໃຫ້ປະຕິບັດດັ່ງນີ້:

1) ເຊື່ອມຊຶມກົດໝາຍ, ມະຕິຄະນະປະຈຳສະພາແຫ່ງຊາດ, ຄຳສັ່ງນາຍົກລັດຖະມົນຕີ, ຄຳແນະນຳລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບຂໍ້ຂ້ອງໃຈ ແລະ ຂໍ້ສົນໃຈຂອງປະຊາຊົນ ເປັນຕົ້ນ ລະບຽບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
2) ສະແດງຂໍ້ມູນພື້ນທີ່ຕົວຈິງໃຫ້ປະຊາຊົນໄດ້ເຫັນ;
3) ສົມທຽບໃສ່ຂໍ້ມູນທີ່ປະຊາຊົນຍົກຂຶ້ນ ພ້ອມທັງອະທິບາຍຕາມກົດໝາຍ, ນິຕິກຳ ແລະ ເຕັກນິກການຈັດສັນວາງແຜນ, ສຳຫຼວດວັດແທກ, ສອບຖາມສິດ.

## ຂັ້ນຕອນ 4 ການເກັບກຳຂໍ້ມູນ ທາງດ້ານເສດຖະກິດ-ສັງຄົມ, ທີ່ດິນ ແລະ ປ່າໄມ້

ການເກັບກຳ ແລະ ວິເຄາະຂໍ້ມູນຂອງບ້ານ ໃນຂະບວນການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ຈະຊ່ວຍເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມຖືກຕ້ອງ, ແທດເໝາະ ແລະ ເປັນທຳ. ການເກັບກຳຂໍ້ມູນນີ້ ຈະເກັບເອົາແຕ່ຂໍ້ມູນ ທີ່ເຫັນວ່າຈຳເປັນ ແລະ ກ່ຽວຂ້ອງ ສຳລັບການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ເທົ່ານັ້ນ ເຊັ່ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້, ເຂດກັນຊົນ ໂດຍສະເພາະ ການກຳນົດເຂດສະຫງວນ, ເຂດປ້ອງກັນ, ເຂດຟື້ນຟູປ່າໄມ້, ເຂດຊົມໃຊ້ຂອງບ້ານ ລວມທັງເຂດຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງ ແລະ ອື່ນໆ ພ້ອມທັງໝາຍລົງໃນແຜນທີ່ ຈະເປັນປະໂຫຍດ ຕໍ່ກັບການກຳນົດເຂດນຳໃຊ້ທີ່ດິນ ແລະ ປ່າໄມ້. ການເກັບກຳຂໍ້ມູນ ທາງດ້ານເສດຖະກິດ-ສັງຄົມ, ທີ່ດິນ ແລະ ປ່າໄມ້ ຄວນມີການກຳນົດຈຸດປະສົງ ແລະ ວິທີການເກັບກຳຂໍ້ມູນ ດັ່ງນີ້:

- **ຈຸດປະສົງຂອງການເກັບກຳຂໍ້ມູນ:**

  - ເພື່ອທຳຄວາມເຂົ້າໃຈ ກ່ຽວກັບການຄຸ້ມຄອງທີ່ດິນຢູ່ພາຍໃນບ້ານ ລວມທັງລະບຽບການຄຸ້ມຄອງທີ່ດິນ ໃນໄລຍະທີ່ຜ່ານມາ;
  - ເພື່ອປະເມີນ ແລະ ຄາດຄະເນກ່ຽວກັບຄວາມຕ້ອງການໃນການນຳໃຊ້ທີ່ດິນ ໃນອະນາຄົດ ຕາມທ່າອ່ຽງປະຊາກອນເພີ້ມຂຶ້ນແຕ່ລະປີ;
  - ເພື່ອເອື້ອອຳນວຍໃຫ້ການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ນຳສະເໜີຄະນະກຳມະການປົກຄອງຂັ້ນເມືອງ ແລະ ຂັ້ນແຂວງ ພິຈາລະນາ ນຳສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ;
  - ເພື່ອຊ່ວຍບ້ານສ້າງຂໍ້ຕົກລົງ ແລະ ກົດລະບຽບໃນການຄຸ້ມຄອງນຳໃຊ້ທີ່ດິນຂອງບ້ານ;
  - ເພື່ອເອື້ອຍອຳນວຍໃຫ້ວຽກງານການສຳຫຼວດວັດແທກ ຂຶ້ນທະບຽນອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ສັນຍາວ່າດ້ວຍການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້.

- **ວິທີການເກັບຂໍ້ມູນ:**

  - ເລີ່ມຈາກເກັບຂໍ້ມູນນຳ ການຈັດຕັ້ງບ້ານ ໂດຍນຳໃຊ້ຮ່າງເກັບຂໍ້ມູນລວມບ້ານ ຕາມແບບພິມ ຣສ 1;
  - ເກັບຂໍ້ມູນ ກັບຄອບຄົວ ໂດຍນຳໃຊ້ຮ່າງເກັບຂໍ້ມູນເສດຖະກິດ-ສັງຄົມ ຂອງຄອບຄົວ ຕາມແບບພິມ ຣສ 2;
  - ປະຊຸມປຶກສາຫາລືເກັບກຳຂໍ້ມູນ ກຸ່ມຍ່ອຍ: ກຸ່ມຍິງ, ກຸ່ມຊາຍ ແລະ ກຸ່ມອົງການປົກຄອງ ແລະ ກຸ່ມຊົນເຜົ່າ (ກໍລະນີ ບ້ານທີ່ມີຫຼາຍຊົນເຜົ່າ) ໂດຍນຳໃຊ້ຄຳຖາມກຸ່ມສົນທະນາ, ແຜນວາດ ແລະ ຮ່າງເກັບກຳຂໍ້ມູນ;
  - ແນະນຳທີມງານເກັບກຳຂໍ້ມູນ ມອບໝາຍໃຫ້ວິຊາການຍິງ ສຳພາດຊາວບ້ານແມ່ຍິງ ແລະ ອຳນວຍ ຄວາມ ສະດວກໃຫ້ກຸ່ມສົນທະນາ ແຍກເພດ ແລະ ເພື່ອເຮັດກິດຈະກຳສ້າງແຜນທີ່;
  - ສຳລັບຊົນເຜົ່າທີ່ມີອຸປະສັກທາງດ້ານການສື່ສານພາສາກາງ, ທີມງານຄວນໃຊ້ຜູ້ແປພາສາເຊັ່ນ: ພະນັກງານ ເມືອງ ທີ່ເວົ້າພາສາທ້ອງຖິ່ນ ຫຼື ປະຊາຊົນພາຍໃນບ້ານ;
  - ຄວນໃຫ້ຕາງໜ້າ ກຸ່ມຍ່ອຍນຳສະເໜີຜົນໄດ້ຮັບການສົນທະນາ ຕາມແບບພິມ ຣສ 4 ຊຶ່ງສາມາດຊ່ວຍຍົກສູງບົດບາດຂອງແມ່ຍິງໃນການສົນທະນາ ແລະ ການມີສ່ວນຮ່ວມ ຂອງເຂົາເຈົ້າ ໃນຂະບວນການຕັດສິນໃຈ.

**ຕາຕະລາງ 3 ສັງລວມ ລາຍການແບບພິມປະເພດຂໍ້ມູນ ແລະ ວິທີເກັບກຳຂໍ້ມູນ ດັ່ງຕາຕະລາງລຸ່ມນີ້:**

| ລ/ດ | ປະເພດຂໍ້ມູນ | ວິທີການ | ແບບຟອມ |
|---|---|---|---|
| 1 | ຂໍ້ມູນດ້ານເສດຖະກິດ-ສັງຄົມຂອງບ້ານ | ສຳພາດການຈັດຕັ້ງຊຸມຊົນບ້ານ 5-8 ທ່ານ ເພື່ອເກັບກຳຂໍ້ມູນເສດຖະກິດສັງຄົມລວມບ້ານ ໂດຍນຳໃຊ້ແບບພິມ ຣສ 1 | ຣສ 1 |
| 2 | ຂໍ້ມູນການເພີ່ມຂຶ້ນຂອງພົນ ລະເມືອງ | ສຳພາດ ການຈັດຕັ້ງຊຸມຊົນບ້ານ 5-8 ທ່ານ ເພື່ອເກັບກຳສະຖິຕິຈຳນວນປະຊາກອນພາຍໃນບ້ານ ໂດຍນຳໃຊ້ ແບບພິມ ຣສ 5 | ຣສ 5 |
| 3 | ຂໍ້ມູນສຳມະໂນບັນຫາ, ທ່າແຮງ ແລະ ໂອກາດ ຂອງບ້ານ | ສຳພາດເກັບຂໍ້ມູນເປັນກຸ່ມ: ກຸ່ມຍິງ, ກຸ່ມຊາຍ ແລະ ອົງການປົກຄອງບ້ານ ໂດຍນຳໃຊ້ ແບບພິມ ຣສ 4 | ຣສ 4 |
| 4 | ຂໍ້ມູນການນຳໃຊ້ໄມ້ ແລະ ຄຸ້ມຄອງເຄື່ອງປ່າຂອງດົງ ແລະ ສັດນໍ້າ-ສັດປ່າ | ສຳພາດເກັບຂໍ້ມູນກັບປະຊາຊົນກຸ່ມຍິງ ແລະ ກຸ່ມຊາຍ ປະມານກຸ່ມລະ 10 ຄົນ ໂດຍນຳໃຊ້ ແບບພິມ ຣສ 3 | ຣສ 3 |
| 5 | ຂໍ້ມູນເສດຖະກິດ-ສັງຄົມ ແລະ ການຄອບຄອງ-ນຳໃຊ້ທີ່ດິນຂອງຄອບຄົວ | ສຳພາດ ຜົວ ແລະ ເມຍ ເພື່ອເກັບກຳຂໍ້ມູນເສດຖະກິດ-ສັງຄົມຂອງແຕ່ລະ ຄອບຄົວໃນບ້ານໂດຍນຳໃຊ້ແບບພິມ ຣສ 2 | ຣສ 2 |

**ຂັ້ນຕອນ 5 ສັງລວມຂໍ້ມູນ**

ຂໍ້ມູນທີ່ໄດ້ເກັບກໍາ ໂດຍນໍາໃຊ້ແບບພິມຕ່າງໆ ໃນຂັ້ນຕອນທີ 4 ຂອງບາດກ້າວ 1 ຕ້ອງໄດ້ກວດກາຄວາມຖືກຕ້ອງ ເນື່ອງຈາກອາດຈະເກີດມີຄວາມຜິດພາດຈາກຄວາມເຂົ້າໃຈຂອງທີມງານທີ່ຄາດເຄື່ອນໄປ, ຈາກນັ້ນ ຈຶ່ງສັງລວມເຂົ້າໃນ ແບບຟອມຂໍ້ມູນລວມບ້ານ ຊຶ່ງເປັນພາຍເອກເຊວໃນຄອມພິວເຕີ. ຂໍ້ມູນທີ່ໄດ້ຖືກພິມເຂົ້າໃນແບບພິມສັງລວມ ຂອງບ້ານແລ້ວ ຂໍ້ມູນດັ່ງກ່າວຈະຖືກນໍາມາວິເຄາະ ຕາມແຕ່ລະໝວດໝູ່ ແລະ ປະເພດຂໍ້ມູນ ຊຶ່ງຜົນຂອງການວິເຄາະຂໍ້ມູນດັ່ງກ່າວ ຈະເປັນປະໂຫຍດໃນການປຶກສາຫາລືກັບການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ເພື່ອສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃຫ້ມີຄວາມເໝາະສົມກັບສະພາບພື້ນທີ່ຂອງບ້ານ ໂດຍອີງໃສ່ ທ່າແຮງຂອງບ້ານທີ່ມີ ເພື່ອຮອງຮັບການຂະຫຍາຍຕົວຂອງປະຊາກອນພາຍໃນບ້ານ ພ້ອມທັງ ເລັ່ງໃສ່ແກ້ໄຂບັນຫາທີ່ເກີດຂຶ້ນຜ່ານມາ ແລະ ປ້ອງກັນບໍ່ໃຫ້ມັນເກີດຂຶ້ນອີກ ແລະ ຊອກມາດຕະຖານ ໃນການປ້ອງກັນໄພພິບັດ ທາງທໍາມະຊາດທີ່ມີຄວາມສ່ຽງຈະເກີດຂຶ້ນ ໃນໄລຍະນີ້, ພະນັກງານຍິງຄວນໄດ້ຮັບການຊຸກຍູ້ ແລະ ໃຫ້ໂອກາດເທົ່າທຽມກັນໃນການຮ່ວມມື ກັບພະນັກງານເພດຊາຍໃນການຮວບຮວມຂໍ້ມູນ ແລະ ຂໍ້ມູນຄວນຈະຊີ້ບອກເຖິງການແຍກເພດ.

## ບາດກ້າວ 3 ການທົບທວນ ຫຼື ການກໍານົດເຂດຄຸ້ມຄອງຂອງບ້ານ

ເຂດຄຸ້ມຄອງຂອງບ້ານ ແມ່ນ ເຂດແດນທີ່ກໍານົດຂອບເຂດການຄຸ້ມຄອງຂອງບ້ານ ຫຼື ຂອບເຂດບ້ານ; ເສັ້ນເຂດແດນບ້ານຕາມປົກກະຕິ ໂດຍອີງໃສ່ຂໍ້ມູນທີ່ມີການຮັບຮູ້ຮ່ວມກັນ ມາແຕ່ດົນນານ ກັບບ້ານໃກ້ຄຽງ ຊຶ່ງມັກຈະຖືເອົາລໍາຫ້ວຍ, ແມ່ນໍ້າ, ສັນພູ ຫລື ເສັ້ນທາງ ຕາມຊື່ທ້ອງຖິ່ນເຄີຍເອີ້ນກັນ ເປັນບ່ອນກໍານົດ.

ການທົບທວນຂອບເຂດຄຸ້ມຄອງບ້ານ ແມ່ນ ການກວດກາຄືນບັນດາຂໍ້ມູນ ແລະ ເອກະສານ ທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເຊັ່ນ: ຂໍ້ມູນການປົກຄອງ ຈາກຄະນະຈັດຕັ້ງຂັ້ນເມືອງ, ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາເຂດຄຸ້ມຄອງບ້ານ, ບົດບັນທຶກເຂດຄຸ້ມຄອງລະຫວ່າງຊຸມຊົນບ້ານ ຕໍ່ຊຸມຊົນບ້ານໃກ້ຄຽງ ທີ່ມີຢູ່ແລ້ວ (ອາດເປັນບົດບັນທຶກການບອກເລົ່າ ຫຼື ບົດບັນທຶກຂອບເຂດຄຸ້ມຄອງຂອງບ້ານ ທີ່ມີ ຫຼື ໄດ້ສໍາເນົາເກັບໄວ້).

ກໍລະນີ ບ້ານທີ່ບໍ່ທັນມີບົດບັນທຶກ, ຂໍ້ມູນຂອບເຂດຄຸ້ມຄອງຂອງບ້ານນັ້ນ ທີມງານວິຊາການ ຕ້ອງສະເໜີໃຫ້ປະຊາຊົນ ອະທິບາຍລະອຽດ ກ່ຽວກັບຂອບເຂດຄຸ້ມຄອງຂອງບ້ານທີ່ຕິດຈອດກັບແຕ່ລະບ້ານອ້ອມຂ້າງ ອີງຕາມຄວາມເຂົ້າໃຈ ຮັບຮູ້ຂອງປະຊາຊົນ ໂດຍຂຽນເປັນບົດບອກເລົ່າຂຶ້ນມາໃໝ່.

ບາດກ້າວ 3 ການທົບທວນ ຫຼື ກໍານົດເຂດຄຸ້ມຄອງຂອງບ້ານ ປະກອບມີ 4 ຂັ້ນຕອນ ດັ່ງນີ້:

**ຂັ້ນຕອນ 1 ຈັດກອງປະຊຸມ ທົບທວນ ຫຼື ກໍານົດເຂດຄຸ້ມຄອງແບບມີສ່ວນຮ່ວມກັບບ້ານເປົ້າໝາຍ ແລະ ບ້ານອ້ອມຂ້າງ**

ກອງປະຊຸມທົບທວນ ຫຼື ກໍານົດເຂດຄຸ້ມຄອງຂອງບ້ານ ຈະຈັດຂຶ້ນໃນລະຫວ່າງ ກອງປະຊຸມບ້ານ ຄັ້ງທໍາອິດໃນຂັ້ນຕອນທີ 1 ຂອງບາດກ້າວທີ 2 ທີ່ກ່າວມາຂ້າງເທິງ ຊຶ່ງມີຂັ້ນຕອນ ແລະ ວິທີການ ດັ່ງນີ້:

- ນໍາສະເໜີ ຈຸດປະສົງ ແລະ ຂັ້ນຕອນ ວິທີການໃນການປຶກສາຫາລື ເພື່ອໃຫ້ປະຊາຊົນ ແລະ ການຈັດຕັ້ງບ້ານ ໄດ້ເຂົ້າໃຈເຖິງ ແນວທາງການປຶກສາຫາລື ແລະ ຮັບຮູ້ຜົນໄດ້ຮັບ ແລະ ຜົນກະທົບ ທີ່ອາດຈະເກີດຂຶ້ນ ແລ້ວ ເປີດໂອກາດໃຫ້ປະຊາຊົນ ໄດ້ສອບຖາມ ຫຼື ມີຂໍ້ສະເໜີ;
- ທີມງານວິຊາການ ດໍາເນີນການທົບທວນເຂດຄຸ້ມຄອງຂອງບ້ານ ໂດຍຕັ້ງຄໍາຖາມຕໍ່ກັບ ການຈັດຕັ້ງບ້ານເປົ້າໝາຍ ແລະ ບ້ານອ້ອມຂ້າງ ລວມທັງປະຊາຊົນ ດັ່ງນີ້:
  - ການກໍານົດເຂດຄຸ້ມຄອງຂອງບ້ານທີ່ໄດ້ດໍາເນີນໄລຍະຜ່ານມາ ມີຄວາມຖືກຕ້ອງ ແລະ ມີຄວາມເປັນເອກະພາບກັນແລ້ວບໍ ລະຫວ່າງ ປະຊາຊົນພາຍໃນບ້ານກັນເອງ ແລະ ກັບບ້ານອ້ອມຂ້າງ;
  - ມີຂໍ້ຕົກລົງຮັບຮອງຢ່າງເປັນທາງການແລ້ວບໍ່ ແລະ ຍັງມີຢູ່ບໍ່;
  - ມີບົດບັນທຶກເຂດຄຸ້ມຄອງ ລະຫວ່າງ ບ້ານຕໍ່ບ້ານທີ່ເຮັດຜ່ານມາບໍ່ ແລະ ຍັງມີເອກະສານດັ່ງກ່າວບໍ່;
  - ມີແຜນທີ່ຂອບເຂດຄຸ້ມຄອງບ້ານທີ່ໄດ້ຖືກຮັບຮອງແລ້ວບ ບໍ່ ແລະ ຍັງມີເອກະສານດັ່ງກ່າວບໍ່;
  - ມີຈຸດໃດແດ່ທີ່ຍັງບໍ່ທັນເປັນເອກະພາບກັນ ຫຼື ມີບັນຫາກ່ຽວກັບເຂດແດນບ້ານບໍ່ ໃນໄລຍະຜ່ານມາ.

- ສະແດງ ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ຫຼື ພາບຖ່າຍຈາກໂດຣນ ກ່ຽວກັບເຂດຄຸ້ມຄອງຂອງຊຸມຊົນບ້ານ ແລ້ວເຊີນຕົວແທນຂອງບ້ານເປົ້າໝາຍ ແລະ ບ້ານອ້ອມຂ້າງເທື່ອລະບ້ານ ເພື່ອຊ່ວຍອະທິບາຍ ແລະ ໝາຍຈຸດທີ່ເປັນເຂດຄຸ້ມຄອງຂອງບ້ານຕົນໃຫ້ລະອຽດ ໂດຍນຳໃຊ້ຈຸດທີ່ສຳຄັນ ເຊັ່ນ: ເສັ້ນທາງ, ຫ້ວຍນ້ຳລຳເຊ, ສັນພູ ເພື່ອກຳນົດຈຸດ ທີ່ເປັນຂໍ້ຂັດແຍ່ງກັນ ແລ້ວຈຶ່ງປຶກສາຫາລື ເພື່ອຫາຂໍ້ຕົກລົງທີ່ເປັນເອກະພາບຮ່ວມກັນ. ໃນກໍລະນີຕົວແທນຂອງບ້ານອ້ອມຂ້າງໃດໜຶ່ງທີ່ເຂົ້າຮ່ວມປະຊຸມ ເຫັນດີເປັນເອກະພາບກັບບ້ານເປົ້າໝາຍ ກ່ຽວກັບເຂດການຄຸ້ມຄອງບ້ານທັງສອງແລ້ວ ແມ່ນໃຫ້ເຮັດບົດບັນທຶກຮ່ວມກັນໄວ້. ພິມແຜນທີ່ເຂດຄຸ້ມຄອງ ລະຫວ່າງ ບ້ານເປົ້າໝາຍ ກັບບ້ານອ້ອມຂ້າງ ແຕ່ລະບ້ານອອກ ເພື່ອນຳໃຊ້ເວລາລົງສຳຫຼວດເຂດແດນຕົວຈິງ ຢູ່ພາກສະໜາມ.

## ຂັ້ນຕອນ 2 ການສຳຫຼວດພື້ນທີ່ເຂດຄຸ້ມຄອງຂອງບ້ານ

- ວາງແຜນການລົງສຳຫຼວດຮ່ວມກັບ ການຈັດຕັ້ງບ້ານເປົ້າໝາຍ ແລະ ບ້ານອ້ອມຂ້າງ: ແບ່ງທີມງານຍ່ອຍ ທີ່ມີຕົວແທນຂອງການຈັດຕັ້ງບ້ານເປົ້າໝາຍ ແລະ ການຈັດຕັ້ງບ້ານອ້ອມຂ້າງ, ສຶກສາເສັ້ນທາງ ເພື່ອປະຢັດເວລາ ແລະ ຄວາມປອດໄພ, ກະກຽມອຸປະກອນ ແລະ ເຄື່ອງມືທີ່ຈຳເປັນເຊັ່ນ: ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ຫຼື ແຜນທີ່ ໂຕໂປ, ບົດບັນທຶກກອງປະຊຸມ, ແບບຟອມການສຳຫຼວດພາກສະໜາມ, GPS, GNSS RTK, Drone RTK ແລະ IBASS ສຳລັບ ພື້ນທີ່ບໍ່ສາມາດຮັບສັນຍານອິນເຕີເນັດທີ່ເຊື່ອມກັບຈຸດອ້າງອີງ ສະຖານີສຳຫຼວດວັດແທກແບບຕໍ່ເນື່ອງ (CORS) ແມ່ນນຳໃຊ້ Base ແລະ Rover ຊຶ່ງເຮັດໜ້າທີ່ຄ້າຍກັບ ສະຖານີສຳຫຼວດວັດແທກແບບຕໍ່ເນື່ອງ (CORS) ທີ່ສາມາດເຊື່ອມກັບກອງ GNSS RTK, ພ້າ ສຳລັບຖາງທາງ, ໃສ່ເກີບ, ໝວກ ແລະ ເສື້ອຜ້າທີ່ມີຄວາມປອດໄພ ລວມທັງເສື້ອກັນຝົນ ແລະ ກຽມອາຫານ ແລະ ນ້ຳດື່ມໃຫ້ພຽງພໍ.
- ອີງໃສ່ ບົດບັນທຶກກອງປະຊຸມປຶກສາຫາລືຮ່ວມກັນກັບ ການຈັດຕັ້ງບ້ານອ້ອມຂ້າງ ແລະ ແຜນທີ່ວາງໄວ້ ລົງສຳຫຼວດເຂດຄຸ້ມຄອງຂອງບ້ານໃນພື້ນທີ່ຈິງ ພ້ອມທັງໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບເຂດຄຸ້ມຄອງຂອງບ້ານ;
- ເດີນສຳຫຼວດຂອບເຂດຄຸ້ມຄອງບ້ານ ສຳລັບພື້ນທີ່ ທີ່ສາມາດເດີນສຳຫຼວດ ໄດ້ສະດວກ ຕ້ອງນຳໃຊ້ກ້ອງ GNSS RTK ເພື່ອບັນທຶກຂໍ້ມູນຄ່າພິກັດ ໄລຍະຮອບຕອນດິນ. ສຳລັບພື້ນທີ່ ທີ່ເປັນເຂດຄ້ອຍຊັນສູງ, ປ່າຕຶບໜາ, ແມ່ນ້ຳ, ສາຍຫ້ວຍ ແລະ ບັນຫາອື່ນ ທີ່ເຂົ້າເຖິງຍາກ ແມ່ນສາມາດນຳໃຊ້ Drone RTK ,GPS, GNSS RTK ແລະ ຕິດຕັ້ງ IBASS ໄດ້ (ແຕ່ການນຳໃຊ້ GPS ຕ້ອງຮັກສາຄ່າຜິດດ່ຽງ ບໍ່ເກີນ 3 ແມັດ (+ ຫຼື - 3 ແມັດ).
- ໃນກໍລະນີ ສອງບ້ານ ທີ່ມີແມ່ນ້ຳໄຫຼຜ່ານ ໄດ້ກຳນົດເປັນເຂດຄຸ້ມຄອງບ້ານ ແມ່ນໃຫ້ຖືເອົາຈຸດໃຈກາງນ້ຳ ເປັນເຂດແດນບ້ານ ໂດຍຮັບຮອງຈາກຂັ້ນເມືອງ ຫຼື ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໄດ້ກຳນົດຂອບເຂດບ້ານຢ່າງຈະແຈ້ງ;
- ຖ່າຍຮູບເອົາແຕ່ລະຈຸດ ທີ່ໄດ້ສຳຫຼວດ ຈຸດພິກັດເຫຼົ່ານັ້ນໄວ້, ນຳໃຊ້ແບບຟອມ ບັນທຶກພາກສະໜາມ ເພື່ອບັນທຶກຈຸດທີ່ເປັນບັນຫາ ແລະ ທ່າແຮງ ໄວ້;
- ນຳໃຊ້ແຜນທີ່ພາບຖ່າຍດາວທຽມ ແລະ ແຜນທີ່ ພູມີປະເທດ (topo) ເພື່ອກວດຄືນໃນເວລາເດີນສຳຫຼວດ ແລວ ກໍລະນີມີບາງຈຸດ ມີຂໍ້ສົງໃສ ຫຼືບໍ່ທັນຈະແຈ້ງ;
- ເມື່ອໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບເຂດຄຸ້ມຄອງບ້ານສຳເລັດແລ້ວ ໃຫ້ບັນທຶກລາຍລະອຽດການຕົກລົງກັນ ເຂົ້າໃສ່ຮ່າງຂໍ້ຕົກລົງກ່ຽວກັບເຂດຄຸ້ມຄອງຂອງຊຸມຊົນບ້ານ ແລະ ຮ່າງຂໍ້ຕົກລົງກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງເຂດ ຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ;
- ຖ້າຂໍ້ຂັດແຍ່ງບໍ່ສາມາດແກ້ໄຂໄດ້ ແມ່ນໃຫ້ດຳເນີນຕາມ ຂັ້ນຕອນທີ 3; ບາດກ້າວ 2.

## ຂັ້ນຕອນ 3 ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ

- ເມື່ອເປັນເອກະພາບກັບທຸກບ້ານອ້ອມຂ້າງກ່ຽວກັບຂອບເຂດຄຸ້ມຄອງຂອງຊຸມຊົນບ້ານແລ້ວ ໃຫ້ສ້າງແຜນທີ່ ດິຈິຕອນ ກ່ຽວກັບເຂດຄຸ້ມຄອງຂອງບ້ານ;
- ແຕ້ມແຜນທີ່ດີຈີຕອນ ໂດຍນຳໃຊ້ໂປແກມ ArcGIS ຫຼື QGIS ແລະ ນຳໃຊ້ຂໍ້ມູນການວັດແທກ ຈຸດພິກັດ ແລະ ໄລຍະຂອບເຂດຄຸ້ມຄອງບ້ານ ທີ່ສຳຫຼວດວັດແທກດ້ວຍກ້ອງ GNSS RTK ຫຼື Drone RTK, GPS, ຂໍ້ມູນກ່ຽວກັບເຂດຄຸ້ມຄອງບ້ານ ທີ່ບັນທຶກ ໃນ ແບບພິມ ຫຼື ຮ່າງບັນທຶກຂໍ້ມູນ, ແລະ ຮູບຖ່າຍດິຈິຕອນ ທີ່ຖ່າຍຢູ່ແຕ່ລະຈຸດສຳຄັນຂອງຂອບເຂດຄຸ້ມຄອງຂອງບ້ານ;

### ຂັ້ນຕອນ 4 ຮັບຮອງເຂດຄຸ້ມຄອງຂອງບ້ານ ຮ່ວມກັບບ້ານອ້ອມຂ້າງ

ພາຍຫຼັງທີ່ສຳເລັດການສ້າງບົດບັນທຶກຂອບເຂດຄຸ້ມຄອງບ້ານ ແລະ ກວດກາຄວາມຖືກຕ້ອງແລ້ວ ໃຫ້ລົງລາຍເຊັນໃສ່ບົດບັນທຶກດັ່ງກ່າວ ເພື່ອໃຫ້ສາມາດຮັບຮອງ ແລະ ນຳໃຊ້ ຕາມກົດໝາຍ ແລະ ລະບຽບການ. ໃນບົດບັນທຶກດັ່ງກ່າວ ໃຫ້ມີລາຍເຊັນຂອງການຈັດຕັ້ງບ້ານເປົ້າໝາຍ ແລະ ບ້ານອ້ອມຂ້າງ ແຕ່ລະບ້ານ ທີ່ມີເຂດຄຸ້ມຄອງເຊື່ອມຕໍ່ກັນ, ທີມງານວິຊາການດ້ານເຕັກນິກ, ຄະນະຈັດຕັ້ງຂັ້ນເມືອງ ແລ້ວນຳ ສະເໜີຄະນະກຳມະການປົກຄອງຕາແສງ ແລະ ຂັ້ນເມືອງ ພິຈາລະນາຮັບຮອງ.

ໃນກໍລະນີ ບັນດາບ້ານອ້ອມຂ້າງບໍ່ເຫັນດີ ເປັນເອກະພາບກັນ ແລະ ບໍ່ສາມາດຕົກລົງກັນໄດ້ ກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງ ບ້ານຕໍ່ບ້ານ ແມ່ນໃຫ້ເຮັດບົດບັນທຶກໄວ້ ເພື່ອເປັນຫຼັກຖານນຳສະເໜີ ຄະນະກຳມະການຄອງຕາແສງ ແລະ ຂັ້ນເມືອງ ພິຈາລະນາແກ້ໄຂຕໍ່ໄປ.

## ບາດກ້າວ 4 ການສຳຫຼວດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ

ການສຳຫຼວດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ປັດຈຸບັນ ຈະຖືກດຳເນີນ ພາຍຫຼັງໄດ້ມີການເຫັນດີເປັນເອກະພາບ ແລະ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ສຳເລັດ ເພື່ອສ້າງເປັນແຜນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ປັດຈຸບັນ. ຂະບວນການນີ້ ຕ້ອງມີການປຶກສາຫາລືກັບປະຊາຊົນທັງໝົດພາຍໃນບ້ານ, ຈຸງານກະສິກຳ ແລະ ປ່າໄມ້ບ້ານ, ການຈັດຕັ້ງບ້ານ, ຄະນະກຳມະການປົກຄອງຕາແສງ ໂດຍມີການເຂົ້າຮ່ວມຂອງປະຊາຊົນພາຍໃນບ້ານ ລວມທັງແມ່ຍິງ, ແນວໂຮມບ້ານ, ຊົນເຜົ່າ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດ.

ບາດກ້າວ 4 ການສຳຫຼວດເຂດ, ປະເພດການນຳໃຊ້ ທີ່ດິນ ແລະ ປ່າໄມ້ປະຈຸບັນ ປະກອບມີ 5 ຂັ້ນຕອນ ດັ່ງນີ້:

### ຂັ້ນຕອນ 1 ກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມກັບບ້ານ ກ່ຽວກັບເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ

ກອງປະຊຸມປຶກສາຫາລືແບບມີສ່ວນຮ່ວມກັບບ້ານ ເພື່ອໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ຈຸດປະສົງ, ວິທີການ ແລະ ຂັ້ນຕອນນີ້ ເປັນຢ່າງດີ ທັງເປັນການເປີດໂອກາດ ໃຫ້ປະຊາຊົນ ໄດ້ສອບຖາມ, ສະເໜີຂໍ້ຂ້ອງໃຈ ກ່ອນຈະດຳເນີນ ຂັ້ນຕອນຕໍ່ໄປ (ຂັ້ນຕອນ 2-7) ຂອງບາດກ້າວນີ້.

ຂັ້ນຕອນການຈັດປະຊຸມ ມີເນື້ອໃນສຳຄັນ ດັ່ງນີ້:

- ທີມງານວິຊາການ ນຳສະເໜີ ຈຸດປະສົງ ແລະ ວິທີການຈັດຕັ້ງປະຕິບັດ, ຄາດຄະເນຜົນໄດ້ຮັບ ແລະ ຜົນກະທົບທີ່ຈະຕາມມາ; ຮັບປະກັນວ່າ ການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ໂດຍສະເພາະ ແມ່ຍິງເຂົ້າໃຈ ເຖິງການກຳນົດເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້;
- ສະແດງພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ຫຼື ແຜນທີ່ພູມສັນຖານທີ່ມີເຂດຄຸ້ມຄອງຂອງບ້ານ. ຈາກນັ້ນ, ກໍ່ປຶກສາຫາລືກ່ຽວກັບສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງບ້ານ ຊຶ່ງປະຊາຊົນເປັນຜູ້ຊີ້ບອກເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ພາຍໃນບ້ານ ເຊັ່ນ: ພື້ນທີ່ນາ, ສວນ, ເຂດລ້ຽງສັດ ແລະ ອື່ນໆ;
- ປຶກສາຫາລືກ່ຽວກັບຂໍ້ມູນຂອງບ້ານ, ທີ່ດິນແຮກະສິກຳ ແລະ ຜົນປະໂຫຍດຈາກປ່າໄມ້ທີ່ເປັນຂອງລວມບ້ານ;
- ສະເໜີໃຫ້ປະຊາຊົນ ແຕ້ມແຜນວາດເຂດການນຳໃຊ້ທີ່ດິນປະຈຸບັນ ເຊັ່ນ: ເຂດພື້ນທີ່ນາ, ສວນ (ໄມ້ໃຫ້ໝາກ, ໄມ້ອຸດສາຫະກຳ ແລະ ພືດອາຍຸສັ້ນ), ພື້ນທີ່ລ້ຽງສັດທີ່ເປັນ ຂອງລວມຊຸມຊົນບ້ານ ຫຼືສ່ວນບຸກຄົນ, ກະສິກຳປ່າໄມ້ແບບປະສົມປະສານ, ພື້ນທີ່ດິນແຮທຳການຜະລິດກະສິກຳ ແລະ ທີ່ດິນແຮໄວ້ ສຳລັບຈຸດປະສົງອື່ນໆ;
- ວິຊາການສືບຕໍ່ແຕ້ມເຂດ ແລະ ປະເພດການນຳໃຊ້ທີ່ດິນລົງໃນແຜນທີ່ຕາມການບອກເລົ່າ ຂອງຊຸມຊົນບ້ານ.

### ຂັ້ນຕອນ 2 ສຳຫຼວດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ

ການລົງສຳຫຼວດ ເກັບກຳຂໍ້ມູນເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ ຂອງບ້ານ ດ້ວຍການນຳໃຊ້ເຄື່ອງມື ກ້ອງ GNSS RTK ຫຼື Drone RTK ຫຼື GPS ແລະ ແບບພິມບັນທຶກພາກສະໜາມ ຂອງທີມງານວິຊາການ ເພື່ອບັນທຶກລາຍລະອຽດ ຈຸດທີ່ຕັ້ງ ຂອງທີ່ດິນແຕ່ລະປະເພດ ຢູ່ໃນຂອບເຂດຂອງບ້ານ ດ້ວຍການຍ່າງສຳຫຼວດພາກສະໜາມ ຮ່ວມກັບການຈັດຕັ້ງບ້ານ ຫຼື ຕົວແທນທີ່ຖືກມອບໝາຍຈາກການຈັດຕັ້ງບ້ານ.

ຂັ້ນຕອນໃນການລົງສຳຫຼວດ ປະກອບ ມີ ກິດຈະກຳຕົ້ນຕໍ ດັ່ງນີ້:

- ວາງແຜນການລົງສຳຫຼວດຮ່ວມກັບການຈັດຕັ້ງບ້ານ ດ້ວຍການວາງແຜນເສັ້ນທາງສຳຫຼວດ ແລະ ແບ່ງເປັນ ທີມຍ່ອຍ ຊຶ່ງມີ ປະຊາຊົນ 2-3 ຄົນ ຜູ້ທີ່ຮູ້ຈັກສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ເປັນຢ່າງດີ ເຂົ້າຮ່ວມນຳ ເພື່ອເປັນການປະຢັດເວລາ ແລະ ຮັບປະກັນຄວາມປອດໄພ;
- ກະກຽມອຸປະກອນ ແລະ ເຄື່ອງມືທີ່ຈຳເປັນ ເຊັ່ນ: ແຜນທີ່ຈຳລອງເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ຈາກການປຶກສາຫາລື ກັບບ້ານ, ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ຫຼື ແຜນທີ່ພູສັນຖານ (topo), ແບບພິມການສຳຫຼວດພາກສະໜາມ, ກ້ອງ GNSS RTK ຫຼື Drone RTK , IBASS ເຄື່ອງມື GPS, ຊຸດສຳລັບເດີນສຳຫຼວດ (ເກີບ, ໝວກ, ເສື້ອກັນຝົນ, ພ້າ...) ລວມທັງກຽມອາຫານ, ນ້ຳດື່ມໃຫ້ພຽງພໍ ແລະ ອື່ນໆ;
- ສຳລັບ ເຂດແດນບ້ານທີ່ສັນຍານ CORE ບໍ່ສະຖຽນໃຫ້ຕິດຕັ້ງເບດກ່ອນດ້ວຍ IBASS ເພື່ອຮັບປະກັນຄ່າຜິດດ່ຽງການສຳຫຼວດວັດແທກບໍ່ເກີນຄ່າອະນຸຍາດ;
- ລົງສຳຫຼວດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ພາຍໃນບ້ານ ຕາມແຜນການ ທີ່ວາງໄວ້;
- ກຳນົດຄ່າພິກັດທີ່ຕັ້ງ ຂອງຈຸດຕ່າງໆ ຂອງເຂດ ແລະ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໂດຍນຳໃຊ້ເຄື່ອງມືກ້ອງ GNSS RTK ຫຼື Drone RTK ຫຼື GPS, ສັງເກດ ແລະ ບັນທຶກປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ແຕ່ລະປະເພດ ພ້ອມທັງການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງບ້ານອ້ອມຂ້າງເຂົ້າໃນແຜນທີ່ດາວທຽມ ແລະ ແຜນທີ່ພູມີປະເທດ, ຖ່າຍຮູບ (ດ້ວຍກ້ອງດີຈີຕອນ ເອົາຈຸດສຳຄັນຕ່າງໆ ຂອງເຂດ ແລະ ປະເພດການນຳໃຊ້ທີ່ດິນບ່ອນທີ່ໄດ້ທຳການວັດແທກຄ່າພິກັດດ້ວຍເຄື່ອງມືຈີພີເອັດ ແລ້ວບັນທຶກໃສ່ໃນແບບພ້ອມການສຳຫຼວດພື້ນທີ່ເອົາຈຸດ ເຫຼົ່ານັ້ນໄວ້, ນຳໃຊ້ ແບບພິມ ຣສ 6 ເພື່ອບັນທຶກຈຸດທີ່ມີບັນຫາ ແລະ ທ່າແຮງ;
- ນຳໃຊ້ແຜນທີ່ພາບຖ່າຍດາວທຽມ ແລະ ແຜນທີ່ພູມສັນຖານ (topo) ເພື່ອກວດຄືນໃນເວລາເດີນສຳຫຼວດແລວທາງ ກໍລະນີມີບາງຈຸດ ມີຂໍ້ສົງໃສ ຫຼື ບໍ່ທັນຈະແຈ້ງ.

**ສິ່ງທີ່ຄວນເອົາໃຈໃສ່ ໃນການສຳຫຼວດ ເຂດ, ປະເພດນຳໃຊ້ທີ່ດິນ ແລະ ປ່າໄມ້:**

- ການກຳນົດເຂດ ປົກປັກຮັກສາຊີວະນາງພັນ, ຖິ່ນທີ່ຢູ່ອາໄສ, ພື້ນທີ່ດິນເຊື່ອມໂຊມ ທີ່ມີເງື່ອນໄຂນຳໃຊ້ທຳການຜະລິດກະສິກຳ ແລະ ປ່າໄມ້ ແບບປະສົມປະສານ, ການພັດທະນາທີ່ດິນ, ເສັ້ນທາງ ແລະ ການຈັດສັນເຂດ ທີ່ຢູ່ອາໄສ, ພື້ນທີ່ປ່າເລົ່າ, ດິນນາ, ເຂດລ້ຽງສັດ ແລະ ອື່ນໆ ເພື່ອໃຊ້ໃນການກຳນົດຫາ ຄວາມຕ້ອງການທີ່ດິນ ຂອງປະຊາຊົນ ໃນອະນາຄົດ;
- ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຢູ່ໃນເຂດຄຸ້ມຄອງຂອງບ້ານ ແລະ ບ້ານອ້ອມຂ້າງ, ທ່າແຮງ ແລະ ບັນຫາໃນການກຳນົດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້;
- ຄວາມຈຳເປັນໃນການປົກປັກຮັກສາແຫຼ່ງນ້ຳ ເພື່ອຄ້ຳປະກັນການສະໜອງນ້ຳ ໃຫ້ຊົນລະປະທານ, ໜອງປາ ແລະ ການຊົມໃຊ້ໃນຄົວເຮືອນ;
- ເຂດດິນແຮ ເພື່ອຄຸ້ມຄອງ ແລະ ນຳໃຊ້ລວມບ້ານ ໂດຍສະເພາະ ທີ່ດິນປຸກສ້າງ ແລະ ດິນແຮທຳການຜະລິດກະສິກຳ ເພື່ອຮອງຮັບການເພີ່ມຂຶ້ນຂອງປະຊາກອນໃນອະນາຄົດ;
- ທີມງານວິຊາການ ສຳຫຼວດເຂດ, ປະເພດນຳໃຊ້ທີ່ດິນ ແລະ ປ່າໄມ້ ຄວນມີການເຂົ້າຮ່ວມ ຂອງແມ່ຍິງ ຢ່າງໜ້ອຍສາມສິບສ່ວນຮ້ອຍ.

### ຂັ້ນຕອນ 3 ທົບທວນ ຫຼື ສ້າງແຜນຈັດສັນຄຸ້ມຄອງປ່າໄມ້ ຂອງສາມປະເພດປ່າ

ການທົບທວນ ຫຼື ສ້າງແຜນຈັດສັນຄຸ້ມຄອງປ່າໄມ້ ຂອງສາມປະເພດປ່າ ຕ້ອງປະຕິບັດກ່ອນການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຊຶ່ງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 มิຖຸນາ 2019 ການຄຸ້ມຄອງປ່າໄມ້ຕາມແຜນຈັດສັນທີ່ລັດ ໄດ້ກຳນົດ ດັ່ງນີ້:

1) ປ່າປ້ອງກັນ ແມ່ນກຳນົດພື້ນທີ່ເປັນ ເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້;
2) ປ່າສະຫງວນ ແມ່ນການກຳນົດພື້ນທີ່ເປັນເຂດຫວງ ຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ;
3) ປ່າຜະລິດ ແມ່ນການກຳນົດພື້ນທີ່ເປັນເຂດທີ່ສາມາດຂຸດຄົ້ນໄມ້, ເຂດປ່າຟື້ນຟູ, ເຂດປູກໄມ້, ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ.

ການທົບທວນ ຫຼື ສ້າງແຜນຈັດສັນຄຸ້ມຄອງສາມປະເພດປ່າ ມີເນື້ອໃນສຳຄັນ ດັ່ງນີ້:

- ສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຄວາມໝາຍ, ຄວາມສຳຄັນຂອງການທົບທວນ ຫຼື ສ້າງແຜນຈັດສັນຄຸ້ມຄອງປ່າໄມ້ ຂອງສາມປະເພດປ່າ ໃຫ້ກັບປະຊາຊົນ;
- ສັງລວມ ແລະ ເກັບກຳຂໍ້ມູນ ກ່ຽວກັບຄວາມຫຼາກຫຼາຍທາງຊີວະນາໆພັນ ເພື່ອປຶກສາຫາລືຮ່ວມກັບປະຊາຊົນ ແລ້ວມາສ້າງເປັນແຜນທີ່ເຂດຈັດສັນຄຸ້ມຄອງປ່າໄມ້ ຂອງສາມປະເພດປ່າ;
- ລົງສຳຫຼວດ ແລະ ປະເມີນຄວາມຫຼາກຫຼາຍຂອງຊີວະນາໆພັນ ພາຍໃນຂອບເຂດບ້ານ ຮ່ວມກັບປະຊາຊົນ ຜູ້ທີ່ຮູ້ສະພາບພື້ນທີ່ປ່າໄມ້ເປັນຢ່າງດີ ເພື່ອກຳນົດເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ ຫຼື ເຂດຊຸດຄົ້ນໄມ້.

### ຂັ້ນຕອນ 4 ສ້າງແຜນທີ່ດີຈີຕອນ ເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ

- ພາຍຫຼັງສຳເລັດ ຂັ້ນຕອນສອງ ແລະ ຂັ້ນຕອນສາມ, ນຳເອົາ ຂໍ້ມູນສຳຫຼວດພື້ນທີ່ຕົວຈິງທັງໝົດ ມາສ້າງແຜນທີ່ ດີຈີຕອນເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ປະຈຸບັນ ໃສ່ໃນໂປຣແກຣມ GIS;
- ສ້າງແຜນທີ່ດີຈີຕອນ ໂດຍນຳໃຊ້ ລະຫັດຄ່າສີ (Land use code) 17.3.

### ຂັ້ນຕອນ 5 ກວດກາສະພາບພື້ນທີ່ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຢູ່ໃນຂອບເຂດຊຸມຊົນບ້ານ ກ່ອນ ແລະ ຫຼັງການປະກາດສ້າງຕັ້ງເຂດປ່າໄມ້

ພາຍຫຼັງສຳເລັດການສ້າງແຜນທີ່ເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນເຂດທີ່ດິນປ່າໄມ້ ປັດຈຸບັນແລ້ວ ຕ້ອງກວດກາ ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ຕ່າງໆ ທີ່ເກີດຂຶ້ນກ່ອນ ຫຼື ຫຼັງ ປະກາດສ້າງຕັ້ງ ເປັນເຂດປ່າໄມ້. ພາຍຫຼັງ ສຳເລັດການກວດກາປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂໍ້ມູນດັ່ງກ່າວນີ້ ຈະປະກອບໃນການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຊຶ່ງຕ້ອງລໍຖ້າ ສະພາປະຊາຊົນຂັ້ນແຂວງ ຮັບຮອງກ່ອນ ຈາກນັ້ນຈຶ່ງພິຈາລະນາ ຕາມແຕ່ລະກໍລະນີ ຄື: ກໍລະນີ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ກ່ອນການປະກາດສ້າງຕັ້ງເປັນເຂດປ່າໄມ້ ຊຶ່ງມີເອກະສານຢັ້ງຢືນການນຳໃຊ້ທີ່ດິນ ແມ່ນ ສາມາດພິຈາລະຂຶ້ນທະບຽນອອກໃບຕາດິນ (ສະເພາະດິນປຸກສ້າງຖາວອນ ແລະ ດິນນາ) ຕາມບາດກ້າວທີ 6 ຂອງຄູ່ມືແນະນຳສະບັບນີ້ ແລະ ຕັດອອກຈາກເນື້ອທີ່ດິນປ່າໄມ້; ສ່ວນ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຫຼັງຈາກປະກາດສ້າງຕັ້ງເປັນເຂດປ່າໄມ້ ຈະຖືກຮັກສາເປັນເຂດທີ່ດິນປ່າໄມ້, ນຳໃຊ້ ເພື່ອຈຸດປະສົງອື່ນໆ ຕາມເງື່ອນໄຂທີ່ກຳນົດໄວ້ ໃນໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ຄຳສັ່ງ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 1821/ກປ. ລົງວັນທີ 26 ພະຈິກ 2025.

ການກວດກາ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ສາມາດດຳເນີນ ດ້ວຍວິທີການ ດັ່ງນີ້:

- ກະກຽມ ພາບຖ່າຍດາວທຽມ ຫຼື ພາບຖ່າຍທາງອາກາດ ຂອງປີປະກາດສ້າງຕັ້ງເປັນເຂດປ່າໄມ້ ທີ່ມີຄວາມລະອຽດຊັດເຈນພຽງພໍ;
- ນຳໃຊ້ໂປແກຣມ GIS ເພື່ອສົມທຽບ (overlay) ພາບຖ່າຍດາວທຽມ ຫຼື ພາບຖ່າຍທາງອາກາດ ກັບ ແຜນທີ່ເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ປະຈຸບັນ ແລ້ວກຳນົດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ກ່ອນ ແລະ ຫຼັງການປະກາດສ້າງຕັ້ງເປັນເຂດປ່າໄມ້;
- ປຶກສາຫາລື ແລະ ເປັນເອກະພາບ ກັບປະຊາຊົນພາຍໃນບ້ານ ໂດຍການເຂົ້າຮ່ວມ ຂອງແມ່ຍິງ, ຊົນເຜົ່າ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດ ໂດຍໄດ້ຮັບການຢັ້ງຢືນ ຈາກການຈັດຕັ້ງຊຸມຊົນບ້ານ, ຕາແສງ ແລະ ເມືອງ;
- ສະຫຼຸບສັງລວມຂໍ້ມູນ ເພື່ອນຳໃຊ້ເຂົ້າໃນຂັ້ນຕອນ ການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ພິຈາລະນາ ຕາມເງື່ອນໄຂການຂຶ້ນທະບຽນອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ, ຫຼື ສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທີ່ກຳນົດໄວ້ໃນບາດກ້າວທີ 6.

## ບາດກ້າວ 5 ການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ

ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແມ່ນ ການກຳນົດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນເຂດປ່າໄມ້ ໂດຍສອດຄ່ອງກັບຈຸດພິເສດ, ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ, ທີ່ຕັ້ງພູມສັນຖານ ແລະ ຈຸດພິເສດແຕ່ລະທ້ອງຖິ່ນ ເພື່ອປົກປັກຮັກສາສິ່ງແວດລ້ອມ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາ

ເສດຖະກິດຂອງບ້ານ ຕາມທິດສີຂຽວ ແລະ ຍືນຍົງ. ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແມ່ນ ການກໍານົດບັນດາກິດຈະກໍາ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ທີ່ດິນ ແລະ ປ່າໄມ້ ຕາມການນໍາໃຊ້ຕົວຈິງຂອງບ້ານ. ສະນັ້ນ, ທີມງານວິຊາການ ຕ້ອງໄດ້ມີການວິເຄາະ, ວິໄຈສະພາບພື້ນທີ່, ບັນດາເງື່ອນໄຂ ແລະ ທ່າແຮງ ຂອງບ້ານໃຫ້ລະອຽດຊັດເຈນ ເພື່ອເປັນຂໍ້ມູນພື້ນຖານ ໃນການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ເພື່ອແນໃສ່ການຄຸ້ມຄອງ, ນໍາໃຊ້ທີ່ດິນປ່າໄມ້ໃຫ້ຍືນຍົງ. ບາດກ້າວ 5 ການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ປະກອບມີ 7 ຂັ້ນຕອນ ດັ່ງນີ້:

**ຂັ້ນຕອນ 1 ວິເຄາະຂໍ້ມູນ ທາງດ້ານທີ່ດິນ, ກະສິກໍາ - ປ່າໄມ້ ແລະ ດ້ານເສດຖະກິດ-ສັງຄົມ**

ນໍາເອົາຂໍ້ມູນບາດກ້າວທີ 2 ມາເຮັດການວິເຄາະ ເພື່ອກໍານົດເງື່ອນໄຂໃນການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ດັ່ງນີ້:

**(1)** ການນໍາໃຊ້ຂໍ້ມູນດ້ານກະສິກໍາ ແລະ ປ່າໄມ້

- ປະເມີນ ແລະ ກໍານົດ ລະດັບຄວາມຄ້ອຍຊັນຂອງທີ່ດິນໂດຍພື້ນຖານ ໃນເຂດທໍາການຜະລິດກະສິກໍາຂອງບ້ານ ແລ້ວໝາຍເຂົ້າໃສ່ ແຜນທີ່ພາບຖ່າຍດາວທຽມ;
- ຂຽນສະແດງບອກລະບົບການຜະລິດກະສິກໍາ ທີ່ປະຊາຊົນຕ້ອງການນໍາໃຊ້ໃນແຕ່ລະຈຸດ ພາຍໃນເຂດທີ່ດິນກະສິກໍາ ໃສ່ແຜນທີ່ພາບຖ່າຍດາວທຽມ;
- ບັນທຶກຂໍ້ມູນກ່ຽວກັບ ວິທີການນໍາໃຊ້ ແຕ່ລະເຂດປ່າໄມ້ຂອງບ້ານ ໃນປະຈຸບັນ ແລ້ວຂຽນໃສ່ ແຜນທີ່ພາບດາວທຽມໄວ້;
- ໝາຍຈຸດທີ່ຕັ້ງ ເຂດທີ່ມີເຄື່ອງປ່າຂອງດົງສໍາຄັນ ໃສ່ແຜນທີ່ພາບຖ່າຍດາວທຽມ;
- ປະເມີນຜົນການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ ເຊັ່ນ: ການປູກພືດອາຍຸສັ້ນ, ການປູກພືດ ເປັນສິນຄ້າ, ການລ້ຽງສັດ ແລະ ການຂຸດຄົ້ນເຄື່ອງປ່າຂອງດົງ.

**(2)** ການນໍາໃຊ້ ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ

- ຄິດໄລ່ການເພີ່ມຂຶ້ນຂອງຈໍານວນປະຊາກອນໃນ 10 ປີ ຕໍ່ໜ້າໂດຍອີງໃສ່ ຂໍ້ມູນການເກີດ, ການຕາຍ ເພື່ອເປັນບ່ອນອີງ ໃຫ້ແກ່ການວາງແຜນໃຫ້ແທດເໝາະ ກັບຄວາມຕ້ອງການໃນການນໍາໃຊ້ພື້ນທີ່ທໍາການຜະລິດ, ທີ່ຢູ່ອາໄສ, ໂຄງລ່າງພື້ນຖານ, ກິດຈະກໍາພັດທະນາ ແລະ ກິດຈະກໍາປັບປຸງຊີວິດການເປັນຢູ່ ຂອງປະຊາຊົນໃນບ້ານ ລວມທັງວິເຄາະເຖິງໄພຂົ່ມຂູ່ຕໍ່ປ່າໄມ້ ແລະ ສັດປ່າ ອີກດ້ວຍ.
- ປະເມີນການປ່ຽນແປງ ດ້ານການນໍາໃຊ້ທີ່ດິນທີ່ຄາດວ່າຈະເກີດຂຶ້ນ ຢູ່ໃນບ້ານເພື່ອຄໍານວນການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງຄວາມຕ້ອງການດ້ານເນື້ອທີ່ດິນສໍາລັບການທໍາມາຫາກິນຂອງປະຊາຊົນ;
- ວິເຄາະຫາຄວາມຕ້ອງການທາງດ້ານສະບຽງອາຫານ, ເຂົ້າ, ຊີ້ນ, ປາ ແລະ ອື່ນໆ ຂອງປະຊາຊົນ;
- ຄາດຄະເນເນື້ອທີ່ທັງໝົດ ທີ່ບ້ານຕ້ອງການໃນອະນາຄົດ ສໍາລັບການຜະລິດກໍາກະສິກໍາ, ພັດທະນາປ່າໄມ້ ແລະ ທີ່ຢູ່ອາໄສ;
- ໝາຍເສັ້ນທາງໃຫຍ່ ແລະ ເສັ້ນທາງຍ່າງ ສໍາລັບເຂົ້າຫາເຂດນໍາໃຊ້ທີ່ດິນຕ່າງໆ ໃສ່ໃນແຜນທີ່.

**(3)** ປະເມີນ ບັນຫາ ແລະ ທ່າແຮງ ໃນການນໍາໃຊ້ທີ່ດິນ ແລະ ປ່າໄມ້ ຂອງບ້ານ

- ນໍາໃຊ້ຂໍ້ມູນສໍາມະໂນບັນຫາ ແລະ ທ່າແຮງການນໍາໃຊ້ທີ່ດິນ ແລະ ປ່າໄມ້ ເພື່ອວິເຄາະຫາສາເຫດ, ຜົນກະທົບ ແລະ ສະເໜີວິທີການແກ້ໄຂ ເພື່ອປັບປຸງ ການວາງແຜນຄຸ້ມຄອງ ນໍາໃຊ້ທີ່ດິນ ແລະ ປ່າໄມ້ ໃນປະຈຸບັນ ໃຫ້ດີຂຶ້ນ, ຄວນເອົາໃຈໃສ່ບັນຫາທີ່ໄດ້ຈາກ ການສົນທະນາ ກຸ່ມຍິງ-ຊາຍ ແລະ ການຈັດຕັ້ງຊຸມຊົນບ້ານ;
- ກໍານົດທ່າແຮງ ແລະ ໂອກາດ ເພື່ອປັບປຸງວິທີການນໍາໃຊ້ຢູ່ໃນເຂດປ່າໄມ້ ແລະ ເຂດທີ່ດິນກະສິກໍາ;
- ກໍານົດ ບັນຫາທີ່ເກີດຂຶ້ນ ໃນເຂດທໍາການຜະລິດກະສິກໍາ ບໍ່ຖືກຕາມຈຸດປະສົງ ຂອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ ພ້ອມທັງປຶກສາຫາລືຊອກຫາວິທີແກ້ໄຂສະພາບການດັ່ງກ່າວ;
- ເກັບກໍາຂໍ້ມູນ ການນໍາໃຊ້ທີ່ດິນ ແລະ ປ່າໄມ້ ຂອງປະຊາຊົນພາຍໃນບ້ານ ທີ່ເຂົ້າໄປນໍາໃຊ້ທີ່ດິນຢູ່ບ້ານອື່ນ ແລະ ປະຊາຊົນບ້ານອື່ນເຂົ້າມາ ທໍາການຜະລິດໃນຂອບເຂດບ້ານ ເພື່ອຊອກຫາວິທີການແກ້ໄຂ ແລະ ລະບຽບການ ທີ່ເໝາະສົມ ມາຄຸ້ມຄອງ ແລະ ນໍາໃຊ້.

**ຂັ້ນຕອນ 2 ກະກຽມເງື່ອນໄຂສຳລັບການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ໃນອະນາຄົດ**

***ເງື່ອນໄຂທົ່ວໄປ:***

- ວິເຄາະການດຳລົງຊີວິດ ແລະ ປະເພນີການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງປະຊາຊົນ ໃນປັດຈຸບັນ;
- ວິເຄາະຄວາມສອດຄ່ອງ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງປະຊາຊົນ ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມຂັ້ນທ້ອງຖິ່ນ;
- ຄວາມຕ້ອງການ ການນຳໃຊ້ທີ່ດິນຂອງປະຊາຊົນໃນອະນາຄົດ ໂດຍອີງໃສ່ການເພີ່ມຂຶ້ນຂອງຈຳນວນປະຊາກອນ ເພື່ອທຳການຜະລິດ, ຂະຫຍາຍພື້ນຖານໂຄງລ່າງເຊັ່ນ: ເສັ້ນທາງ, ຫ້ອງການ, ໂຮງຮຽນ,ໂຮງໝໍ, ຕະຫຼາດ, ວັດ, ສະຖານທີ່ຖິ້ມຂີ້ເຫຍື້ອ, ບໍ່ບຳບັດນ້ຳເສຍ ແລະ ອື່ນໆ;
- ທ່າແຮງ ແລະ ຂໍ້ຈຳກັດ ຂອງພື້ນທີ່ທຳການຜະລິດຕ່າງໆ ຕາມທີ່ຊາວບ້ານເຂົ້າໃຈ;
- ທ່າແຮງ ການນຳໃຊ້ເຕັກນິກທີ່ທັນສະໄໝເຂົ້າໃນການຜະລິດກະສິກຳ ເພື່ອຍົກສະມັດຕະພາບຜົນຜະລິດ;
- ວິທີການນຳໃຊ້ປ່າໄມ້ ທີ່ປະຕິບັດຢູ່ໃນແຕ່ລະເຂດທີ່ດິນປ່າໄມ້;
- ຄວາມຕ້ອງການຂອງປະຊາຊົນໃນການຊົມໃຊ້ໄມ້ (ປຸກສ້າງ, ຟືນ, ຫຼັກຮົ້ວ ແລະ ອື່ນໆ);
- ຄວາມຕ້ອງການຂອງປະຊາຊົນ ໃນການຊົມໃຊ້ເຄື່ອງປ່າຂອງດົງ ເພື່ອຮັບປະກັນໃຫ້ມີການປົກປັກຮັກສາ ແລະ ນຳໃຊ້ແບບຍືນຍົງ;
- ຄວນພິຈາລະນາຄວາມຈຳເປັນຂອງແມ່ຍິງ, ປະຊາຊົນລາວບັນດາເຜົ່າ, ຜູ້ດ້ອຍໂອກາດ ແລະ ຜູ້ເສຍອົງຄະໃນການເຂົ້າເຖິງທີ່ດິນເພື່ອທຳການຜະລິດກະສິກຳ ແລະ ການດຳລົງຊີວິດ ໃນອະນາຄົດ;
- ເຂດສະຫງວນແຫຼ່ງນ້ຳ ປະຕິບັດຕາມດຳລັດ ວ່າດ້ວຍທີ່ດິນບໍລິເວນນ້ຳ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ເຂດສະຫງວນແລວທາງ ປະຕິບັດຕາມກົດໝາຍ ວ່າດ້ວຍທາງຫຼວງ ສະບັບເລກທີ 03/ສພຊ, ລົງວັນທີ 08 ພະຈິກ 2016 ແລະ ລະບຽບການທີ່ກ່ຽວຂ້ອງ;
- ເຂດສະຫງວນແລວສາຍສົ່ງໄຟຟ້າແຮງສູງ ປະຕິບັດຕາມ ກົດໝາຍ ແລະ ລະບຽບການຂອງກະຊວງພະລັງງານ ແລະ ບໍ່ແຮ່.

**ເງື່ອນໄຂທາງພູມສັນຖານ ແລະ ຄວາມຄ້ອຍຊັນ:** ການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ອີງໃສ່ຈຸດທີ່ຕັ້ງ ຂອງພື້ນທີ່ຕົວຈິງ ຕາມພູມສັນຖານ ແລະ ຄວາມຄ້ອຍຊັນ ທີ່ໄດ້ກຳນົດໄວ້ໃນມາດຕະການນຳໃຊ້ທີ່ດິນຄື:

- ຄວາມຄ້ອຍຊັນແຕ່ **0-5%** ແມ່ນກຳນົດເປັນທີ່ດິນນາ ສຳລັບປູກເຂົ້າ ແລະ ການກະສິກຳອື່ນໆ ທຸກປະເພດ ຖ້າຈະປູກພືດລົ້ມລຸກຄວນປູກພືດຄຸມດິນ ເພື່ອບໍ່ໃຫ້ຫຍ້າຂຶ້ນ ແລະ ຖ້າຈະປູກໄມ້ຢືນຕົ້ນ ແມ່ນຕ້ອງມີລະບົບລະບາຍນ້ຳຢ່າງເໝາະສົມ;
- ຄວາມຄ້ອຍຊັນຫຼາຍກວ່າ **5-15%** ແມ່ນກຳນົດເປັນພື້ນທີ່ກະສິກຳ ຫຼື ປ່າໄມ້ທຸກປະເພດ (ນອກຈາກການເຮັດ ຊົນລະປະທານ) ແຕ່ຖ້າຈະປູກພືດລົ້ມລຸກ ຕ້ອງເຮັດເປັນຄັນຄູດິນຕາມແນວລະດັບຂວາງ ເພື່ອປ້ອງກັນການເຊາະເຈື່ອນ;
- ຄວາມຄ້ອຍຊັນຫຼາຍກວ່າ **15-25%** ແມ່ນກຳນົດເປັນພື້ນທີ່ປູກໄມ້ທຸກປະເພດ ຖ້າຈະປູກພືດລົ້ມລຸກ ຕ້ອງເຮັດ ເປັນນາຂັ້ນໄດ ເພື່ອເປັນການປົກປັກຮັກສາໜ້າດິນເສຍກ່ອນ;
- ຄວາມຄ້ອຍຊັນຫຼາຍກວ່າ **25-35%** ແມ່ນກຳນົດເປັນພື້ນທີ່ປູກຕົ້ນໄມ້ທຸກຊະນິດ ຫຼື ຖ້າຈະປູກພືດປະສົມປະສານກັບການປູກປ່າ ຫຼື ຈະປູກໄມ້ກໍໄດ້, ຖ້າຈະປູກຫຍ້າລ້ຽງສັດ ກໍຕ້ອງກ່ຽວເອົາຫຍ້າໄປໃຫ້ສັດກິນຢູ່ໃນຄອກ ແລະ ຖ້າຈະປູກໄມ້ໃຫ້ໝາກຕ້ອງມີພືດຄຸມດິນລະຫວ່າງກົກໄມ້ຕະຫຼອດແນວ;
- ຄວາມຄ້ອຍຊັນຫຼາຍກວ່າ **35-45%** ແມ່ນກຳນົດເປັນປ່າປ້ອງກັນການເຊາະເຈື່ອນ ຂອງດິນ, ປ່າປ້ອງກັນແຫຼ່ງນ້ຳ ແລະ ປ່າປົກປັກຮັກສາຊີວະນາໆພັນເທົ່ານັ້ນ ໃນກໍລະນີໃຊ້ເປັນປ່າຜະລິດເຄື່ອງປ່າຂອງດົງ ຕ້ອງລະມັດລະວັງບໍ່ໃຫ້ທີ່ດິນເກີດການເຊາະເຈື່ອນໃນເວລາຂຸດຄົ້ນເຄື່ອງປ່າຂອງດົງນັ້ນ.
- ຄວາມຄ້ອຍຊັນຫຼາຍກວ່າ **45%** ຂຶ້ນໄປ ແມ່ນບໍ່ເໝາະສົມສຳລັບປ່າຜະລິດ ຕ້ອງເປັນປ່າສະຫງວນ, ປ່າປ້ອງກັນແຫຼ່ງນ້ຳ ຊີວະນາໆພັນ ແລະ ປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ.

**ເງື່ອນໄຂສຳລັບໃຊ້ກຳນົດເຂດ ແລະ ປະເພດການນຳໃຊ້ທີ່ດິນຂອງບ້ານ**

| ເຂດນຳໃຊ້ທີ່ດິນ | ເງື່ອນໄຂການກຳນົດ | ຈຸດປະສົງ/ກິດຈະກຳ |
|---|---|---|
| ເຂດທີ່ຢູ່ອາໄສ | ພື້ນທີ່ທີ່ກຳນົດໄວ້ເປັນເຂດປຸກສ້າງທີ່ຢູ່ອາໄສ ຊຶ່ງລວມມີທັງພື້ນທີ່ ທີ່ກຳນົດໄວ້ ເພື່ອຮອງຮັບການເພີ່ມຂຶ້ນຂອງພົນລະເມືອງ | ປຸກສ້າງເຮືອນຢູ່, ວັດ, ໂຮງຮຽນ, ສຸກສາລາ, ຮ້ານຄ້າ, ໂຮງສີ ແລະ ອື່ນໆ |
| ພື້ນທີ່ກະສິກຳ | - ພື້ນທີ່ຮາບພຽງ ແລະ ທີ່ມີຄວາມຄ້ອຍຊັນ ທີ່ເໝາະສົມກັບການປູກພືດຜະລິດສະບຽງອາຫານ ແລະ ສັບຊ່ວາເປັນນາ;<br>- ພື້ນທີ່ເໝາະສຳລັບການລ້ຽງສັດ;<br>- ພື້ນທີ່ ທີ່ເປັນປ່າຊຸດໂຊມບໍ່ສາມາດຟື້ນຟູເປັນປ່າທຳມະຊາດຄືນໄດ້;<br>- ພື້ນທີ່ແຮໄວ້ຮອງຮັບການເພີ່ມຂຶ້ນຂອງພົນລະເມືອງ. | - ເຮັດນາ, ເຮັດສວນ;<br>- ປູກໄມ້ໃຫ້ໝາກ;<br>- ປູກໄມ້ເສດຖະກິດ;<br>- ລ້ຽງສັດໃຫຍ່;<br>- ລ້ຽງປາ ແລະ ສັດນ້ອຍ. |
| ເຂດປ່າປ້ອງກັນ | - ພື້ນທີ່ດິນທີ່ມີຄວາມຄ້ອຍຊັນຫຼາຍ;<br>- ເຂດທີ່ມີດິນເຊາະເຈື່ອນງ່າຍ;<br>- ເຂດຍອດນ້ຳ;<br>- ພື້ນທີ່ລຽບເສັ້ນທາງ ແລະ ສາຍນ້ຳ;<br>- ພື້ນທີ່ທີ່ບໍ່ຄວນນຳໃຊ້ເປັນບ່ອນປຸກສ້າງ, ອຸດສາຫະກຳ ແລະ ທຳການຜະລິດ;<br>- ພື້ນທີ່ທີ່ມີເງື່ອນໄຂເຂົ້າຟູເປັນເຂດປ່າປ້ອງກັນ. | - ປົກປັກຮັກສາພື້ນທີ່ຄ້ອຍຊັນ;<br>- ຫຼຸດຜ່ອນການເຊາະເຈື່ອນ;<br>- ປົກປັກຮັກສາແຫຼ່ງນ້ຳ ແລະ ສາຍນ້ຳ; ຟື້ນຟູປ່າທີ່ຊຸດໂຊມລະດັບໃດໜຶ່ງ;<br>- ເກັບເຄື່ອງປ່າຂອງດົງທີ່ບໍ່ຫວງຫ້າມ ໃນປະລິມານຈຳກັດ;<br>- ຫ້າມກິດຈະກຳທີ່ເຮັດໃຫ້ເກີດການເຊາະເຈື່ອນຂອງດິນ. |
| ເຂດປ່າສະຫງວນ | - ພື້ນທີ່ທີ່ມີຊະວະນາໆພັນ ພືດ ແລະ ສັດຫຼາຍພຽງພໍໃນດ້ານປະລິມານ, ຊະນິດ ແລະ ຄຸນຄ່າທາງທຳມະຊາດທີ່ຈະສາມາດ ຈັດເປັນເຂດປ່າສະຫງວນ ລວມເອົາ ດິນທາມ ແລະ ປຸ່ງ ຊຶ່ງເປັນແຫຼ່ງອາຫານ ຂອງສັດປ່າ;<br>- ມີທ່າແຮງດ້ານທ່ອງທ່ຽວທຳມະຊາດ. | - ອະນຸລັກພືດພັນ ແລະ ສັດປ່າ;<br>- ລວບລວມຊະນິດພັນ;<br>- ສະຖານທີ່ພັກຜ່ອນຍ່ອນໃຈ;<br>- ທ່ອງທ່ຽວທາງທຳມະຊາດ;<br>- ຄົ້ນຄວ້າວິທະຍາສາດ;<br>- ເກັບກູ້ເຄື່ອງປ່າ ຂອງດົງຊະນິດ ທີ່ບໍ່ຫວງຫ້າມ ໃນປະລິມານຈຳກັດ. |
| ເຂດປ່າສັກສິດ | ປ່າຊ້າ, ປ່າຫວງຫ້າມ, ປ່າມະເຫສັກ | ຮັກສາເປັນປ່າສັກສິດ |
| ເຂດປ່າຊົມໃຊ້ | ເພື່ອໃຫ້ປະຊາຊົນນຳໃຊ້ແບບຍືນຍົງ | - ເກັບກູ້ເຄື່ອງປ່າຂອງດົງ;<br>- ສະໜອງໄມ້ປຸກສ້າງທີ່ຢູ່ອາໄສ;<br>- ສະໜອງຟືນ ແລະ ໄມ້ຫຼັກຮົ້ວ;<br>- ສະໜອງຢາປົວພະຍາດ;<br>- ຮັກສາແນວພັນໄມ້. |
| ພື້ນທີ່ ທີ່ມີເງື່ອນໄຂສຳລັບການປູກໄມ້ເປັນສິນຄ້າ | - ພື້ນທີ່ປ່າໄມ້ເຊື່ອມໂຊມ ຫຼື ທີ່ດິນປອກໂຫຼ້ນ;<br>- ທີ່ດິນທີ່ມີຄວາມຄ້ອຍຊັນບໍ່ເກີນ 25 ອົງສາ;<br>- ເປັນພື້ນທີ່ຊາວບ້ານຕົກລົງກັນໄວ້. | - ປູກໄມ້ເພື່ອເປັນສິນຄ້າ;<br>- ປູກພືດເສດຖະກິດອາຍຸສັ້ນ;<br>- ລ້ຽງສັດ ແລະ ປາ. |
| ພື້ນທີ່ອື່ນໆ | ພື້ນທີ່ດິນປອກໂຫຼ້ນ, ດານຫີນ, ຫີນ ແຮ່, ສາຍນ້ຳ, ໜອງທຳມະຊາດ, ບຶງ ແລະ ເສັ້ນທາງ | ປູກໄມ້ ແລະ ຟື້ນຟູປ່າ |

**ຂັ້ນຕອນ 3 ກອງປະຊຸມປຶກສາຫາລືເພື່ອກຳນົດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ແລ້ວສ້າງແຜນທີ່ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃນອະນາຄົດ**

- ເຊີນຄະນະກຳມະການປົກຄອງຕາແສງ, ຄະນະການຈັດຕັ້ງບ້ານ, ແນວໂຮມ ແລະ ປະຊາຊົນພາຍໃນບ້ານ ທັງຍິງ ແລະ ຊາຍ ເຂົ້າຮ່ວມປະຊຸມປຶກສາຫາລື;

- ນຳສະເໜີ ຈຸດປະສົງ, ຂັ້ນຕອນວິທີການ ແລະ ຜົນຄາດວ່າຈະໄດ້ຮັບ;
- ເຜີຍແຜ່ລະບຽບກົດໝາຍກ່ຽວກັບສິດ, ພັນທະຂອງປະຊາຊົນໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ແລະ ປ່າໄມ້;
- ນຳສະເໜີເງື່ອນໄຂສຳລັບການສ້າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃນອະນາຄົດໃຫ້ການຈັດຕັ້ງບ້ານ ແລະ ປະຊາຊົນໝົດບ້ານໄດ້ເຂົ້າໃຈ ແລະ ເປີດໂອກາດໃຫ້ປະຊາຊົນໄດ້ສອບຖາມ ແລະ ມີຂໍ້ສະເໜີ;
- ປຶກສາຫາລືກັບປະຊາຊົນທຸກຄົນເພື່ອຕົກລົງການກຳນົດເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃນອະນາຄົດ;
- ສາຍແຜນທີ່ການນຳໃຊ້ທີ່ດິນໃນປັດຈຸບັນຂຶ້ນ ແລ້ວປັບປຸງແຜນທີ່ ຫຼື ເພີ່ມເຂດຕ່າງໆທີ່ຕ້ອງການນຳໃຊ້ໃນອະນາຄົດອີກ 5-10 ປີຂ້າງໜ້າ ໂດຍອີງໃສ່ຜົນຂອງການສົນທະນາຕົກລົງກັນກັບປະຊາຊົນ;
- ກຳນົດເຂດທີ່ຢູ່ອາໄສ ລວມທັງພື້ນທີ່ເພື່ອແຮໄວ້ຮອງຮັບການຂະຫຍາຍການປຸກສ້າງ ຕາມການເພີ່ມຂຶ້ນ ຂອງພົນລະເມືອງໃນອະນາຄົດ;
- ກຳນົດແລວສະຫງວນເສັ້ນທາງ, ສາຍນ້ຳ ແລະ ສາຍສົ່ງໄຟຟ້າຕາມລະບຽບການ ຂອງຂະແໜງການ ທີ່ກ່ຽວຂ້ອງ;
- ກຳນົດທີ່ຕັ້ງ ແລະ ເນື້ອທີ່ ຫຼື ເຂດຍ່ອຍ ສຳລັບການຜະລິດກະສິກຳປະເພດຕ່າງໆໃນອະນາຄົດ ພາຍໃນເຂດທີ່ດິນກະສິກຳ ໂດຍອີງໃສ່ລະດັບຄວາມຄ້ອຍຊັນຂອງພື້ນທີ່ ແລະ ແຜນທີ່ສະແດງ ປະເພດການຜະລິດ ທີ່ຊາວບ້ານຢາກ ເຮັດໃນບ່ອນຕ່າງໆ ເຊັ່ນ: ບ່ອນທີ່ຢາກເຮັດນາ, ປູກພືດອາຍຸສັ້ນ, ປູກໄມ້ເສດຖະກິດ ແລະ ໄມ້ໃຫ້ໝາກ, ບ່ອນ ລ້ຽງສັດ, ເຮັດໜອງປາ ແລະ ອື່ນໆ;
- ກຳນົດບ່ອນທີ່ມີເງື່ອນໄຂ, ທ່າແຮງ ທັງມີເນື້ອທີ່ພຽງພໍ ສຳລັບການລົງທຶນໄລຍະຍາວ ເພື່ອປູກພືດ ອຸດສາຫະກຳ ຫຼື ປູກໄມ້ເປັນສິນຄ້າ;
- ລະບຸວິທີການຜະລິດກະສິກຳ ແບບອະນຸລັກຢູ່ເຂດເນີນສູງ;
- ກຳນົດລະບົບການຜະລິດກະສິກຳ ແລະ ວິທີການປັບປຸງການຜະລິດທີ່ເຫັນວ່າເປັນໄປໄດ້;
- ກຳນົດລະດັບທີ່ສາມາດອະນຸຍາດໃຫ້ນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ;
- ກຳນົດພື້ນທີ່ທີ່ຊາວບ້ານເຫັນວ່າມີເງື່ອນໄຂໃນການລົງທຶນ ເພື່ອຜະລິດເປັນສິນຄ້າໄດ້;
- ພາຍຫຼັງທີ່ມີຄວາມເປັນເອກະພາບຕໍ່ກັບແຜນທີ່ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານແລ້ວ ສືບຕໍ່ປຶກສາຫາລື ເພື່ອກຳນົດກົດຈະກຳການຄຸ້ມຄອງນຳໃຊ້ທີ່ກຳນົດໃຫ້ປະຕິບັດໃນແຕ່ລະເຂດ ແລະ ປະເພດທີ່ດິນ ແລະ ປ່າໄມ້ຂອງບ້ານ;
- ກຳນົດຂອບເຂດ ແລະ ປະເພດ ການນຳໃຊ້ທີ່ດິນກະສິກຳ, ຈຸດປັກຫຼັກໝາຍ ຂອບເຂດທຳການຜະລິດ ໃນເຂດດິນກະສິກຳ ແລະ ສ້າງແຜ່ນທີ່ ດ້ວຍການ:

- ກຳນົດຂອບເຂດ ແລະ ປະເພດ ການນຳໃຊ້ທີ່ດິນກະສິກຳ ແມ່ນໄດ້ຈາກການສັງລວມ ແລະ ວິເຄາະຂໍ້ມູນ ການນຳໃຊ້ທີ່ດິນກະສິກຳຂອງບ້ານ ແລ້ວຕ້ອງກຳນົດດິນກະສິກຳ ອອກເປັນ 4 ປະເພດຕາມການນຳໃຊ້ ຄື: (1) ດິນນາ; (2) ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ ຫຼື; (3) ດິນປູກພືດອາຍຸຍາວ ຫຼື ຕົ້ນໄມ້ໃຫ້ໝາກ; (4) ດິນລ້ຽງສັດ ແລະ ສັດນ້ຳ; ນອກຈາກນີ້ ຍັງຕ້ອງໄດ້ກຳນົດ ຂອບເຂດ ດິນກະສິກຳຖາວອນ ແລະ ການນຳໃຊ້ທີ່ດິນກະສິກຳ ກ່ອນການປະກາດປ່າໄມ້ ເພື່ອເປັນບ່ອນອີງ ໃຫ້ແກ່ຂະບວນຮັບຮູ້ສິດໃນຂັ້ນຕອນຕໍ່ໄປ;
- ປັກຫຼັກໝາຍ ຂອບເຂດທຳການຜະລິດກະສິກຳ ໃນເຂດທີ່ດິນປ່າໄມ້ ພາຍຫຼັງສຳເລັດ ການສ້າງແຜນທີ່ການນຳໃຊ້ທີ່ດິນ ໃນປັດຈຸບັນ ແລ້ວ, ຄະນະທີມງານວິຊາການ ຕ້ອງໄດ້ສົມທົບ ຄະນະຄຸ້ມຄອງທີ່ດິນຂັ້ນບ້ານ ລົງສຳຫຼວດ ຂອບເຂດຈຸດປັກຫຼັກໝາຍ ເຂດທຳການຜະລິດກະສິກຳຊົ່ວຄາວ ໃນພື້ນທີ່ຕົວຈິງ ເປັນຕົ້ນ ຈຸດທີ່ເຊື່ອມຕໍ່ກັບທີ່ດິນປ່າໄມ້ ຫຼື ຈຸດດິນສະຫງວນຕ່າງໆ ຂອງພາກສ່ວນອື່ນທີ່ກ່ຽວຂ້ອງ ຢູ່ພາຍໃນບ້ານ, ພ້ອມທັງສ້າງບົດບັນທຶກຂອບເຂດທຳການຜະລິດກະສິກຳ ແລ້ວຈຶ່ງນຳເອົາຫຼັກໝາຍຖາວອນມາປັກພາຍຫຼັງ. ສຳລັບສັນຍາລັກ ຂອງຫຼັກໝາຍເຂດທຳການຜະລິດກະສິກຳ ມີຂະໜາດ 10 ຊມ (ມັງຕີແມັດ) x 10 ຊມ x 100 ຊມ, ເປັນຫຼັກຊີມັງ ສີນ້ຳຕານ ຂຽນດ້ວຍຕົວໜັງສືສີຂາວ ຂຽນຄຳວ່າ: ເຂດທຳການຜະລິດກະສິກຳ ກຳນົດເປັນຈຸດອ້າງອີງ ແລະ ເພື່ອບົ່ງບອກໃຫ້ທຸກຄົນ ຢູ່ພາຍໃນບ້ານ ແລະ ບຸກຄົນອື່ນ ໄດ້ເຂົ້າໃຈ ແລະ ຮັບຮູ້ ຕໍ່ ເຂດຜະລິດກະສິກຳ ຂອງບ້ານ;
- ສ້າງແຜນທີ່ ດ້ວຍການສັງລວມຂໍ້ມູນທີ່ເກັບກຳມາ ຈາກພາກສະໜາມ ນຳມາປະກອບສ້າງ ແຜນທີ່ 4 ແຜນທີ່ ໂດຍນຳໃຊ້ໂປຣແກມ QGIS ຫຼື ArcGIS ດັ່ງນີ້:

1. ແຜນທີ່ ກຳນົດ ຂອບເຂດ ແລະ ປະເພດການນຳໃຊ້ທີ່ດິນກະສິກຳ ໃນເຂດທີ່ດິນປ່າໄມ້;

2. ແຜນທີ່ ຂອບເຂດ ຈຸດປັກຫຼັກໝາຍ ເຂດທຳການຜະລິດກະສິກຳ;
3. ແຜນທີ່ ຕອນດິນ ອອກໃບຢັ້ງຢືນການນຳໃຊ້ທີ່ດິນ;
4. ແຜນທີ່ ກຳນົດ ຂອບເຂດ ການນຳໃຊ້ທີ່ດິນ ກ່ອນການປະກາດປ່າໄມ້.

**ຕົວຢ່າງ 3 ຮ່າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ**

| ເຂດນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງບ້ານ | ທີ່ຕັ້ງ | ເນື້ອທີ (ຮຕ) | ກິດຈະກຳຄຸ້ມຄອງ | ເວລາ (ປີ) | | | | |
|---|---|---|---|---|---|---|---|---|
| | | | | | | | | |
| ເຂດທີ່ດິນປ່າໄມ້ | | | | | | | | |
| 1. ປ່າປ້ອງກັນ | | | | | | | | |
| 2. ປ່າສະຫງວນ | | | | | | | | |
| 3.ປ່າຊົມໃຊ້ | | | | | | | | |
| 4. ປ່າສັກສິດ/ປ່າມະເຫສັກ | | | | | | | | |
| ເຂດທີ່ດິນກະສິກຳ | | | | | | | | |
| 1. ເນື້ອທີ່ນາ | | | | | | | | |
| 2. ເນື້ອທີ່ປູກພືດອາຍຸສັ້ນ | | | | | | | | |
| 3. ເນື້ອທີ່ປູກພືດເປັນສິນຄ້າ | | | | | | | | |
| 4. ບ່ອນລ້ຽງສັດ (ມີຮົ້ວ) | | | | | | | | |
| 5. ຄັງລ້ຽງສັດລວມໝູ່ | | | | | | | | |
| ເຂດທີ່ດິນອື່ນໆ | | | | | | | | |
| 1. ເຂດທີ່ຢູ່ອາໄສ | | | | | | | | |
| 2. ທີ່ດິນລວມບ້ານ | | | | | | | | |
| **ລວມທີ່ດິນທັງໝົດຂອງບ້ານ** | | | | | | | | |

## ຂັ້ນຕອນ 4 ທົບທວນ ຫຼື ສ້າງລະບຽບກ່ຽວກັບການຄຸ້ມຄອງທີ່ດິນ ແລະ ປ່າໄມ້

ລະບຽບກ່ຽວກັບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ ສ້າງຂຶ້ນເພື່ອຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ ຢູ່ໃນຂອບເຂດຄຸ້ມຄອງຂອງບ້ານ ໂດຍການປຶກສາຫາລື ແລະ ເປັນເອກະພາບຮ່ວມກັບການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ລວມທັງແມ່ຍິງ, ຊົນເຜົ່າ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດ. ລະບຽບສະບັບນີ້ນຳໃຊ້ສຳລັບປະຊາຊົນພາຍໃນບ້ານ ແລະ ບ້ານອື່ນທີ່ເຂົ້າມານຳໃຊ້ທີ່ດິນ ແລະ ປ່າໄມ້ ພາຍໃນຂອບເຂດຄຸ້ມຄອງບ້ານ.

ຂັ້ນຕອນ ໃນການທົບທວນ ຫຼື ສ້າງລະບຽບກ່ຽວກັບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ ມີ ດັ່ງນີ້:

- ຈັດກອງປະຊຸມປຶກສາຫາລືຮ່ວມກັບອົງການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານ ລວມທັງແມ່ຍິງ, ຊົນເຜົ່າ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດ;
- ທົບທວນຄືນລະບຽບກ່ຽວກັບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂອງບ້ານທີ່ມີຢູ່ແລ້ວ;
- ປຶກສາຫາລືເພື່ອຮ່າງກົດລະບຽບທີ່ຄວນຈະນຳໃຊ້ສຳລັບແຕ່ລະເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໂດຍລະບຸ ກິດຈະກຳຕ່າງໆທີ່ອະນຸຍາດ ແລະ ບໍ່ອະນຸຍາດໃຫ້ດຳເນີນໃນແຕ່ລະເຂດ, ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ພ້ອມ ກຳນົດມາດຕະການຕໍ່ຜູ້ລະເມີດລະບຽບການທີ່ກຳນົດ;
- ນຳສະເໜີ ຮ່າງກົດລະບຽບຕໍ່ການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ລວມທັງແມ່ຍິງ, ຊົນເຜົ່າ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດ ໄດ້ຮັບຮູ້, ເຂົ້າໃຈ ເພື່ອຄວາມເຫັນດີ ເປັນເອກະພາບດ້ານເນື້ອໃນ;
- ພາຍຫຼັງທີ່ກົດລະບຽບດັ່ງກ່າວ ເຫັນດີເປັນເອກະພາບໝົດບ້ານແລ້ວ ຈະຕ້ອງໄດ້ຮັບການເຊັນ ແລະ ປະທັບຕາໂດຍຄະນະກຳມະການປົກຄອງຕາແສງ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ແລ້ວອັດສຳເນົາ ເພື່ອແຈກຢາຍໃຫ້ບັນດາບ້ານທີ່ຢູ່ໃກ້ຄຽງ.

## ຂັ້ນຕອນ 5 ຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ

ຂຽນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໂດຍນຳໃຊ້ຂໍ້ມູນທີ່ໄດ້ຈາກຂັ້ນຕອນທີ 1-4 ຂອງບາດກ້າວ 5 ຂ້າງເທິງ ແລະ ນຳໃຊ້ຄຳແນະນຳ ກ່ຽວກັບການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ສະບັບເລກທີ 4143/ກປ, ລົງວັນທີ 03

ຕຸລາ 2023. ການກະກຽມ ແລະ ສ້າງແຜນຕາມໂຄງຮ່າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ປະຊາຊົນນຳໃຊ້ຕົວຈິງ ທີ່ໄດ້ກະກຽມ ຕາມໂຄງຮ່າງແຜນເອກະສານຊ້ອນທ້າຍ ຂອງຄູ່ມືສະບັບນີ້.

**ຂັ້ນຕອນ 6 ຈັດກອງປະຊຸມຂັ້ນບ້ານເພື່ອຜ່ານແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ**

- ເຊີນຄະນະກຳມະການປົກຄອງຕາແສງ, ການຈັດຕັ້ງບ້ານ, ເຖົ້າແກ່ແນວໂຮມ ແລະ ປະຊາຊົນພາຍໃນບ້ານ ທັງຍິງ ແລະ ຊາຍ ເຂົ້າຮ່ວມປະຊຸມ;
- ນຳສະເໜີ ຈຸດປະສົງ, ຂັ້ນຕອນ, ວິທີການ, ຄາດຄະເນຜົນໄດ້ຮັບ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນ;
- ນຳສະເໜີຮ່າງແຜນຄອງທີ່ດິນ ແລະ ປ່າໄມ້ບ້ານໄປເພື່ອລະພາກ;
- ເປີດໂອກາດໃຫ້ການຈັດຕັ້ງບ້ານ ແລະ ປະຊາຊົນໄດ້ມີຄຳຖາມ ຫຼື ຄຳເຫັນຕໍ່ກັບແຜນຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ປັບປຸງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຕາມການເຫັນດີເປັນເອກະພາບຂອງປະຊາຊົນພາຍໃນບ້ານ;
- ທົບທວນເພື່ອໃຫ້ແນ່ໃຈວ່າຊາວບ້ານທີ່ໄດ້ເຂົ້າຮ່ວມ (ທັງຍິງ ແລະ ຊາຍ) ເຂົ້າໃຈຢ່າງເຕັມທີ່ ກ່ຽວກັບແຜນການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ທີ່ດິນກະສິກຳ ແລະ ທີ່ດິນປະເພດອື່ນ;
- ຮັບປະກັນວ່າແຜນດັ່ງກ່າວ ໄດ້ມີສ່ວນຮ່ວມ ກັບການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ລວມທັງແມ່ຍິງ, ຊົນເຜົ່າ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດ ໃນການກຳນົດກິດຈະກຳການ ຟື້ນຟູປ່າໄມ້ ແລະ ກິດຈະກຳອື່ນໆ;
- ສະເໜີໃຫ້ ການຈັດຕັ້ງບ້ານ ລົງລາຍເຊັນ ພ້ອມທັງປະທັບຕາໃສ່ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ.

**ຂັ້ນຕອນ 7 ການຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ**

- ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ນຳສົ່ງຮ່າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ປະຊາຊົນນຳໃຊ້ຕົວຈິງ ທີ່ໄດ້ມີການເຫັນດີ ແລະ ຮັບຮອງຈາກການຈັດຕັ້ງບ້ານ ແລະ ຄະນະກຳມະການປົກຄອງຕາແສງ ແລ້ວນັ້ນ ໃຫ້ຄະນະກຳມະການປົກຄອງຂັ້ນເມືອງ ແລະ ຫ້ອງການທີ່ກ່ຽວຂ້ອງ ຂັ້ນເມືອງ ເພື່ອພິຈາລະນາມີຄຳເຫັນ;
- ປັບປຸງຮ່າງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຕາມການປະກອບຄຳເຫັນ ຂອງຄະນະກຳມະການປົກຄອງຂັ້ນເມືອງ ແລະ ຫ້ອງການທີ່ກ່ຽວຂ້ອງ ຂັ້ນເມືອງ;
- ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເຮັດໜັງສືສະເໜີຫາ ຄະນະກຳມະການປົກຄອງຂັ້ນເມືອງ ພ້ອມທັງປະກອບເອກະສານຄັດຕິດ ດັ່ງນີ້:
  - ໜັງສືສະເໜີ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອສະເໜີຄະນະກຳມະການປົກຄອງຂັ້ນເມືອງ;
  - ປຶ້ມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
  - ແຜນທີ່ ຈັດສັນ ການນຳໃຊ້ທີ່ດິນ ແລະ ປ່າໄມ້ບ້ານ;
  - ແຜນທີ່ ການນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ປະຊາຊົນນຳໃຊ້ຕົວຈິງ;
  - ແຜນທີ່ ຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ໃນອະນາຄົດ;
  - ບົດບັນທຶກກອງປະຊຸມບ້ານ ເພື່ອຜ່ານແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
  - ບົດລາຍງານທີ່ເປັນເອກະພາບກັບບ້ານ;
  - ລະບຽບຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ;
  - ຮ່າງ ມະຕິ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ວ່າດ້ວຍການຮັບຮອງເອົາແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ຄະນະກຳມະການປົກຄອງຂັ້ນເມືອງ ສະເໜີຕໍ່ ຄະນະກຳມະການປົກຄອງຂັ້ນແຂວງ ໂດຍຜ່ານພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ເພື່ອຄົ້ນຄວ້າ ນຳສະເໜີສະພາປະຊາຊົນແຂວງ ພິຈາລະນາຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ດ້ວຍການປະກອບເອກະສານຄັດຕິດ ດັ່ງນີ້:
  - ໜັງສືສະເໜີ ຂອງຄະນະກຳມະການປົກຄອງຂັ້ນເມືອງ ຫາ ຄະນະກຳມະການປົກຄອງຂັ້ນແຂວງ ພ້ອມກັບເອກະສານທັງໝົດທີ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ສະເໜີຫາຄະນະກຳມະການປົກຄອງຂັ້ນເມືອງ;
  - ພາຍຫຼັງ ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງແລ້ວ ປະທານຄະນະກຳມະການປົກຄອງຂັ້ນແຂວງ ອອກຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ.

## ບາດກ້າວ 6 ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

### ຂັ້ນຕອນ 1 ຈັດປະຊາສຳພັນຍ່ອຍ

ທີມງານຈັດຕັ້ງປະຕິບັດວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ປະສານສົມທົບກັບ ການຈັດຕັ້ງບ້ານເປົ້າໝາຍ ເປີດກອງປະຊຸມ ປະຊາສຳພັນຍ່ອຍ ໃຫ້ແກ່ຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ ໃນເຂດພື້ນທີ່ ຈະຂຶ້ນທະບຽນອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການສຳຫຼວດວັດແທກ ເພື່ອເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ລ່ວງໜ້າ ສອງ ຫາ ສາມ ວັນ. ເຊີນເອົາປະຊາຊົນໝົດບ້ານ ທັງແມ່ຍິງ ແລະ ຜູ້ຊາຍ, ເຖົ້າແກ່ແນວໂຮມ, ທຸກຊົນເຜົ່າເຂົ້າຮ່ວມ ການຜະລິດເຄື່ອງມືສື່ສານທີ່ເຂົ້າໃຈງ່າຍ ໂດຍສະເພາະແມ່ນແມ່ຍິງ, ຜູ້ທີ່ບໍ່ຮູ້ໜັງສື ຫຼື ຜູ້ທີ່ສື່ສານໄດ້ພຽງແຕ່ ພາສາຊົນເຜົ່າ.

ເນື້ອໃນຕົ້ນຕໍ ລວມມີ ຈຸດປະສົງ, ຂັ້ນຕອນວິທີການ, ຄວາມສຳຄັນ ແລະ ປະໂຫຍດຂອງການຮັບຮູ້ສິດ ເພື່ອຂຶ້ນທະບຽນອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ການເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້, ສິດຂອງຜູ້ໄດ້ ຮັບສິດ, ໜ້າທີ່ ແລະ ການມີສ່ວນຮ່ວມ ການຈັດຕັ້ງບ້ານ ແລະ ເຈົ້າຂອງສິດ ນຳໃຊ້ທີ່ດິນ, ເງື່ອນໄຂໃນການຮັບຮູ້ສິດນຳໃຊ້ທີ່ດິນທີ່ກຳນົດໄວ້ໃນຂໍ້ 3.1 ຂ້າງເທິງ.

- ທີມງານຈັດຕັ້ງປະຕິບັດວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້: ດຳເນີນກອງປະຊຸມສະເພາະແມ່ຍິງ (ເຄິ່ງວັນ) ເນື້ອໃນຕົ້ນຕໍ ເວົ້າເຖິງ ຄວາມສະເໝີພາບບົດບາດຍິງ-ຊາຍສິດ ຂອງແມ່ຍິງ, ລະບຽບກົດໝາຍທີ່ກ່ຽວຂ້ອງ, ຄວາມສ່ຽງທີ່ຈະເສຍສິດ ແລະ ຜົນສະທ້ອນຂອງການ ບໍ່ອອກ ຊື່ແມ່ຍິງ ໃນໃບຕາດິນ ກໍລະນີທີ່ເປັນຊັບເດີມ ແລະ ສິນສົມສ້າງ, ນຳໃຊ້ເຄື່ອງມືປະກອບຫຼາຍຢ່າງເຊັ່ນ ວີດີໂອ, ໂປດສະເຕີ, ກິດຈະກຳຖາມ-ຕອບ, ຍົກບັນຫາຕົວຈິງມາສົນທະນາ ແລະ ປະເມີນຄວາມເຂົ້າໃຈກ່ອນ ແລະ ຫຼັງການປະຊາສຳພັນ.
- ທີມງານຈັດຕັ້ງປະຕິບັດວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້: ນັດໝາຍຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນລ່ວງໜ້າ ສາມວັນ ກ່ອນການລົງສຳຫຼວດວັດແທກ ແລະ ສອບຖາມສິດ ເພື່ອກະກຽມຄວາມພ້ອມ ຊຶ່ງຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ ຕ້ອງກະກຽມ (1) ໃບຢັ້ງຢືນກ່ຽວກັບການໄດ້ມາ ຂອງສິດນຳໃຊ້ທີ່ດິນ ເປັນຕົ້ນ ການມອບຂອງລັດ, ສັນຍາມອບໂອນ, ຍົກຊັບ, ຊື້ ຂາຍສິດນຳໃຊ້ທີ່ດິນ; (2) ສຳເນົາບັດ ປະຈຳຕົວ ຫຼື ໃບຢັ້ງຢືນທີ່ຢູ່ ແລະ ສຳມະໂນຄົວ, ຖ້າແມ່ນນິຕິບຸກຄົນ ຫຼື ການຈັດຕັ້ງສັງຄົມ ຕ້ອງມີສຳເນົາ ໃບທະບຽນວິສາຫະກິດ, ໃບອະນຸຍາດການລົງທຶນ ຫຼື ໃບອະນຸຍາດສ້າງຕັ້ງອົງການຈັດຕັ້ງສັງຄົມ; (3) ໃບແຈ້ງ ເສຍອາກອນທີ່ດິນ ຫຼື ໃບຮັບເງິນເສຍອາກອນທີ່ດິນປະຈຳປີ; (4) ເອກະສານອື່ນໆທີ່ກ່ຽວຂ້ອງ.

### ຂັ້ນຕອນ 2 ດຳເນີນການສອບຖາມສິດ ແລະ ເກັບກຳຂໍ້ມູນການໄດ້ສິດນຳໃຊ້ທີ່ດິນ



**ກ່ອນຈະດຳເນີນການສອບຖາມສິດ ເຈົ້າໜ້າທີ່ທີ່ດິນ ຕ້ອງກຳແໜ້ນຫຼັກການຮັບຮູ້ສິດ ຕາມທີ່ລະບຸໃນແຜນດຳເນີນງານແຫ່ງຊາດ ດັ່ງນີ້:**

1) ຂອບເຂດທີ່ດິນປ່າໄມ້ (ປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມໃຊ້ຂອງບ້ານ, ປ່າປະເພດອື່ນຂອງບ້ານ) ທີ່ສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮອງແຜນຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ເພື່ອໃຫ້ເປັນເຂດປົກປັກຮັກສາປ່າໄມ້ ແລະ ອະນຸລັກຊີວະນາໆພັນ ແມ່ນອອກໃບຕາດິນລັດ;
2) ສຳລັບເນື້ອທີ່ດິນ ທີ່ຢູ່ນອກເຂດທີ່ດິນປ່າໄມ້ (ປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມໃຊ້ຂອງບ້ານ, ປ່າປະເພດອື່ນຂອງບ້ານ) ແມ່ນສາມາດອອກໃບຕາດິນ (ຖ້ານຳໃຊ້ກ່ອນປະກາດ ເປັນທີ່ດິນປ່າໄມ້ ກໍລະນີເປັນທີ່ດິນປຸກສ້າງຖາວອນ ແລະ ທີ່ດິນນາຖາວອນ), ອອກໃບຢັ້ງຢືນການນຳໃຊ້ທີ່ດິນ (ຖ້ານຳໃຊ້ພາຍຫຼັງປະກາດເປັນທີ່ດິນປ່າໄມ້ ຮອດມື້ປະກາດກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້ ປີ 2019) ແລະ ເຮັດ ສັນຍາ ວ່າດ້ວຍການ ຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ (ພາຍຫຼັງປະກາດກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້ ໃນປີ 2019 ຮອດເດືອນພະຈິກ 2024 ພາຍຫຼັງມີຄຳສັ່ງນາຍົກ ເລກທີ 20).
3) ໃນການດຳເນີນການສຳຫຼວດວັດແທກດິນທຸກຕອນຢູ່ພາຍໃນບ້ານ ຕາມການມາແຈ້ງຂອງປະຊາຊົນນັ້ນ ແມ່ນໃຫ້ດຳເນີນການສຳຫຼວດວັດແທກ ດ້ວຍກ້ອງ GNSS RTK ເພື່ອໃຫ້ຮູ້ໄດ້ວ່າ ປະຊາຊົນ ໄດ້ຊີ້ບອກຈຸດ ຫຼື ຈັບຈອງທີ່ດິນໃນເຂດທີ່ດິນປ່າໄມ້ (ປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມໃຊ້ຂອງບ້ານ, ປ່າປະເພດອື່ນຂອງບ້ານ) ທີ່ນອນໃນຂອບເຂດບ້ານດັ່ງກ່າວຄືແນວໃດ. ແຕ່ການພິຈາລະນາຈະອອກເອກະສານສິດນຳໃຊ້ທີ່ດິນ ຄືແນວໃດນັ້ນ ແມ່ນໃຫ້ປະຕິບັດຕາມ ຂໍ້ 2) ຂ້າງເທິງນັ້ນ.

ເຈົ້າໜ້າທີ່ທີ່ດິນ ປະຈຳຢູ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ສົມທົບກັບ ການຈັດຕັ້ງບ້ານ ທີ່ກ່ຽວຂ້ອງ ດຳເນີນການສອບຖາມສິດ ແລະ ເກັບກຳຂໍ້ມູນການໄດ້ສິດນຳໃຊ້ທີ່ດິນ ຈາກການຄອບຄອງ ແລະ ນຳໃຊ້ທີ່ດິນ ດ້ວຍການບັນທຶກຂໍ້ມູນໃສ່ແບບພິມການສອບຖາມສິດ ທີ່ໄດ້ກຳນົດໄວ້ໃຫ້ ສຳເລັດ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນເລີ່ມດຳເນີນການສອບຖາມສິດ ແລະ ເກັບກຳຂໍ້ມູນ ການໄດ້ມາ ຂອງສິດດັ່ງກ່າວ ໂດຍໃຫ້ຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ, ການຈັດຕັ້ງບ້ານ ແລະ ເຈົ້າໜ້າທີ່ທີ່ດິນ ລົງລາຍເຊັນ ໃສ່ແບບພິມ. ໃນກໍລະນີ ຜູ້ຄອບຄອງນຳໃຊ້ທີ່ດິນ ບໍ່ໄດ້ເຂົ້າຮ່ວມໃນການສອບຖາມສິດ ຕ້ອງມອບສິດໃຫ້ຜູ້ຕາງໜ້າ ຢ່າງເປັນລາຍລັກອັກສອນ ເພື່ອໃຫ້ຜູ້ຕາງໜ້າເຂົ້າຮ່ວມແທນ.

ຜ່ານການສອບຖາມສິດ ແລະ ເກັບກຳຂໍ້ມູນການໄດ້ ສິດນຳໃຊ້ທີ່ດິນ ຈາກຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ ຖ້າຫາກວ່າທີ່ດິນຕອນໃດ ມີຂໍ້ຂັດແຍ່ງ ແຕ່ໄດ້ຜ່ານຂະບວນການຍຸຕິທຳ ຫຼື ມີຄຳຕັດສິນຂອງສານທີ່ໃຊ້ໄດ້ ຢ່າງເດັດຂາດ ແລະ ໄດ້ຮັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານສຳເລັດແລ້ວ ໃຫ້ດຳເນີນການສຳຫຼວດ ວັດແທກຕອນດິນ ແລະ ປະກອບສຳນວນເອກະສານການຂຶ້ນທະບຽນອອກໃບຕາດິນ ແລ້ວສະເໜີ ຫາ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ລົງລາຍເຊັນ ໃສ່ໃບທະບຽນທີ່ດິນ ແລະ ໃບຕາດິນ ໂດຍບໍ່ຜ່ານ ຂັ້ນຕອນການອອກ ແຈ້ງການຫາຜູ້ຄັດຄ້ານ ຫຼື ປະກາດຫາຜູ້ຄັດຄ້ານ.

## ຂັ້ນຕອນ 3 ການສຳຫຼວດວັດແທກທີ່ດິນ ແລະ ການສ້າງແຜນທີ່ດິນສະເພາະຕອນ

- ຄືໄດ້ລະບຸແຈ້ງໃນຂໍ້ 1) ຂອງຂັ້ນຕອນ 2 ຂ້າງເທິງນັ້ນ ຂອບເຂດທີ່ດິນປ່າໄມ້ (ປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມໃຊ້ຂອງບ້ານ, ປ່າປະເພດອື່ນຂອງບ້ານ) ທີ່ສະພາປະຊາຊົນຂັ້ນແຂວງ ໄດ້ຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ເພື່ອໃຫ້ເປັນເຂດປົກປັກຮັກສາປ່າໄມ້ ແລະ ອະນຸລັກຊີວະນາໆພັນ ແມ່ນອອກໃບຕາດິນລັດ. ສະນັ້ນ, ກໍລະນີທີ່ປະຊາຊົນ ນຳພາເຂົ້າໄປໃນເຂດດັ່ງກ່າວ ຕ້ອງຊີ້ແຈງໃຫ້ປະຊາຊົນຊາບວ່າ ເຂດດັ່ງກ່າວ ແມ່ນເຂດທີ່ດິນປ່າໄມ້ (ປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມໃຊ້ຂອງບ້ານ, ປ່າປະເພດອື່ນຂອງບ້ານ) ທີ່ສະພາແຂວງ ຊຶ່ງເປັນທີ່ດິນລັດ. ແຕ່ສາມາດດຳເນີນການສຳຫຼວດວັດແທກ ເພື່ອເກັບກຳຂໍ້ມູນການຈັບຈອງທີ່ດິນປ່າໄມ້ ມີເນື້ອທີ່ເທົ່າໃດ ແລະ ມີຈັກຄົນເຂົ້າໄປຈັບຈອງ ເພື່ອລາຍງານຄະນະກຳມະການປົກຄອງຂັ້ນເມືອງ ພາຍຫຼັງສຳເລັດການສຳຫຼວດວັດແທກທີ່ດິນທຸກຕອນຢູ່ພາຍໃນເມືອງ;
- ເຈົ້າໜ້າທີ່ທີ່ດິນ ທີ່ປະຈຳຢູ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ດຳເນີນການສຳຫຼວດ ວັດແທກຕອນດິນ ດ້ວຍກ້ອງ GNSS RTK ເທົ່ານັ້ນ ຊຶ່ງເຊື່ອມໂດຍກົງກັບລະບົບຖານຂໍ້ມູນທະບຽນທີ່ດິນ Lao

Land Reg ພ້ອມບັນທຶກຂໍ້ມູນໃສ່ ແບບພິມ ກ1 ຫຼື ກ2 ຕາມທີ່ໄດ້ກຳນົດໄວ້ໃນຄຳແນະນຳ ວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ ເລກທີ 6377/ກຊສ, ລົງວັນທີ 31 ທັນວາ 2021 ໂດຍມີການເຂົ້າຮ່ວມຂອງຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ, ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ຈາກເຈົ້າຂອງສິດນຳໃຊ້ທີ່ດິນດັ່ງກ່າວ ພ້ອມທັງລົງລາຍເຊັນຢັ້ງຢືນຂອງເຈົ້າໜ້າທີ່ທີ່ດິນ, ຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນ ເຊັນຈ້ຳໂປ້ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງເຊັນຈ້ຳໂປ ພ້ອມທັງມີການຢັ້ງຢືນຈາກການຈັດຕັ້ງບ້ານ (ຫ້າມທີມງານສຳຫຼວດວັດແທກ ຈັບມືເຈົ້າຂອງສິດນຳໃຊ້ທີ່ດິນ ຫຼື ຜູ້ຕາງໜ້າ ຫຼື ຜູ້ຄອບຄອງນຳໃຊ້ທີ່ດິນ ເພື່ອຈ້ຳໂປ້ລົງໃນແບບພິມ ຢ່າງເດັດຂາດ);

- ຫຼັງຈາກນັ້ນ ຈຶ່ງນຳຂໍ້ມູນດັ່ງກ່າວເຂົ້າຖານຂໍ້ມູນທະບຽນທີ່ດິນ Lao Land Reg ແລ້ວສ້າງແຜນທີ່ດິນສະເພາະຕອນ ໂດຍການລົງລາຍເຊັນ ຂອງເຈົ້າໜ້າທີ່ທີ່ດິນ ໃຫ້ສຳເລັດພາຍໃນກຳນົດເວລາ ຫ້າ ວັນລັດຖະການ;
- ກວດເບິ່ງວ່າທີ່ດິນຕອນດັ່ງກ່າວ ຖືກນຳໃຊ້ກ່ອນການປະກາດເປັນປ່າ ຫຼື ພາຍຫຼັງການປະກາດໃຊ້ກົດໝາຍວ່າດ້ວຍ ປ່າໄມ້ ແລະ ກົດໝາຍວ່າດ້ວຍທີ່ດິນ ປີ 2019 ຫຼື ກ່ອນການປະກາດໃຊ້ ຄຳສັ່ງ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024, ອີງຕາມເງື່ອນໄຂໃນການຮັບຮູ້ສິດທີ່ລະບຸໄວ້ໃນຂໍ້ 2.1 ແລະ 2.2 ຂ້າງເທິງ ໂດຍນຳໃຊ້ພາບຖ່າຍດາວທຽມ ຫຼື ພາບຖ່າຍທາງອາກາດ ທີ່ມີຄວາມລະອຽດຊັດເຈນຂອງປີນັ້ນໆ ມາທັບກັບ ແຜນທີ່ດິນແຕ່ລະ ຕອນໃນລະບົບຂໍ້ມູນທະບຽນທີ່ດິນ (Lao Land Reg). ຂໍ້ສະຫຼຸບທີ່ໄດ້ ຈະຖືກນຳໃຊ້ ປະກອບເຂົ້າໃນການພິຈາລະນາ ຈັດປະເພດສິດນຳໃຊ້ທີ່ດິນ ໃນຂັ້ນຕອນຕໍ່ໄປ.

## ຂັ້ນຕອນ 4 ຈັດປະເພດສິດນຳໃຊ້ທີ່ດິນ ເພື່ອພິຈາລະນາ ຂຶ້ນທະບຽນອອກໃບຕາດິນ ຫຼື ອອກ ໃບຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ ຫຼື ເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ບ້ານ ແລະ ສັນຍາວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ສ່ວນບຸກຄົນ

- ໜ່ວຍງານຂຶ້ນທະບຽນອອກໃບຕາດິນ ຢ່າງເປັນລະບົບ ຫຼື ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ຮັບຜິດຊອບໃນການພິຈາລະນາ ຈັດປະເພດສິດນຳໃຊ້ທີ່ດິນ ເພື່ອຂຶ້ນທະບຽນ ອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງມີໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ທີ່ນຳໃຊ້ກ້ອງ GNSS RTK ສຳຫຼວດວັດແທກຕອນດິນສະເພາະຕອນ ໂດຍອີງໃສ່ຂໍ້ມູນສຳຫຼວດວັດແທກທີ່ດິນສະເພາະຕອນ, ພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ, ເອກະສານຢັ້ງຢືນການໄດ້ມາຂອງສິດນຳໃຊ້ທີ່ດິນ (ບັນທຶກລົງ ແບບພິມ ຂ1, ຂ2, ຂ3) ປະກອບເປັນຂໍ້ມູນໃນການພິຈາລະນາຕາມ ເງື່ອນໄຂໃນການຮັບຮູ້ສິດທີ່ກຳນົດໄວ້ໃນຂໍ້ 2.1 ແລະ 2.2 ຂ້າງເທິງ ແລະ ອີງຕາມຄຳແນະນຳວ່າດ້ວຍການຂຶ້ນທະບຽນອອກໃບຕາດິນ ສະບັບເລກທີ 0500/ກຊສ, ລົງວັນທີ 14 ກຸມພາ 2022 ແລະ ຄຳແນະນຳ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບການຈັດ ຕັ້ງປະຕິບັດຄຳສັ່ງ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ສະບັບເລກທີ 1821/ກປ, ລົງວັນທີ 26 ພຶດສະພາ 2025;
- ທີ່ດິນທຸກຕອນທີ່ໄດ້ຜ່ານການສຳຫຼວດວັດແທກ ແລະ ສອບຖາມສິດ ໃຫ້ປ້ອນຂໍ້ມູນທີ່ມີຢູ່ໃນສຳນວນເອກະສານຕອນດິນເຂົ້າໃນລະບົບຖານຂໍ້ມູນທະບຽນທີ່ດິນ (ໂປຣແກຣມ Lao Land Reg) ໂດຍມີການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ຈາກນັ້ນໃຫ້ນຳໃຊ້ຂໍ້ມູນຕອນດິນທຸກຕອນໃນຖານ Lao Land Reg ເຕັງໃສ່ແຜນຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ທີ່ສະພາປະຊາຊົນຂັ້ນແຂວງ ຮັບຮອງ ພ້ອມພາບຖ່າຍດາວທຽມ (ພື້ນທີ່ຕົວຈິງ) ເພື່ອກວດກາລະອຽດວ່າ: ມີທີ່ດິນຈັກຕອນທີ່ນອນໃນເຂດທີ່ດິນປ່າໄມ້ (ປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມ ໃຊ້ຂອງບ້ານ, ປ່າປະເພດອື່ນຂອງບ້ານ) ທີ່ສະພາປະຊາຊົນຂັ້ນແຂວງ ຊຶ່ງເປັນທີ່ດິນລັດນັ້ນ ເພື່ອລາຍງານຄະນະກຳມະການປົກຄອງຂັ້ນເມືອງ ຊຶ່ງບໍ່ສາມາດອອກໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ເຮັດສັນຍາ ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ກັບບຸກຄົນໄດ້.
- ກໍລະນີ ທີ່ດິນທີ່ປະຊາຊົນນຳໃຊ້ ຢູ່ນອກເຂດທີ່ດິນປ່າໄມ້ (ປ່າສະຫງວນຂອງບ້ານ, ປ່າປ້ອງກັນຂອງບ້ານ, ປ່າຊົມໃຊ້ຂອງບ້ານ, ປ່າປະເພດອື່ນຂອງບ້ານ ທີ່ສະພາປະຊາຊົນຂັ້ນແຂວງເປັນທີ່ດິນລັດ) ຕັ້ງແຕ່ການປະກາດໃຊ້ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ກົດໝາຍ ວ່າ

ດ້ອຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ໃຫ້ຈັດປະເພດເປັນທີ່ດິນປ່າໄມ້ ໂດຍ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ຄຸ້ມຄອງ ແລະ ເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້;

- ກໍລະນີ ທີ່ປະຊາຊົນບຸກລຸກທີ່ດິນປ່າໄມ້ ນັບແຕ່ອອກຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ລາຍງານຄະນະກຳມະການປົກຄອງຂັ້ນເມືອງ ເພື່ອແກ້ໄຂຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການກວດກາຄືນການອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023.

## ຂັ້ນຕອນ 5 ການອອກແຈ້ງການຫາຜູ້ຄັດຄ້ານ

- ພາຍຫຼັງປະກອບສຳນວນເອກະສານການກ່ຽວກັບຕອນດິນ ແລະ ຈັດປະເພດສິດນຳໃຊ້ທີ່ດິນສຳເລັດແລ້ວ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ຕ້ອງອອກແຈ້ງການຫາຜູ້ຄັດຄ້ານ ໂດຍຜ່ານສື່ມວນຊົນ ແລະ ຕິດປະກາດແຈ້ງການຢູ່ຫ້ອງການບ້ານ ບ່ອນທີ່ດິນຕັ້ງຢູ່, ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ, ຫ້ອງການຄະນະກຳມະການປົກຄອງຕາແສງ, ຫ້ອງການຄະນະກຳມະການປົກຄອງຂັ້ນເມືອງ, ກຳນົດເວລາຂອງແຈ້ງການດັ່ງກ່າວ ແມ່ນ ສາມສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.
- ໃນກໍລະນີມີການສະເໜີຄັດຄ້ານ ແມ່ນ ໃຫ້ໂຈະການ ອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ທີ່ປະກອບໃສ່ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕອນດິນດັ່ງກ່າວນັ້ນໄວ້ກ່ອນ ຈົນກວ່າໄດ້ຮັບການແກ້ໄຂຕາມກົດໝາຍ ຊຶ່ງຜູ້ຄັດຄ້ານນັ້ນ ແມ່ນຜູ້ທີ່ກ່ຽວຂ້ອງໂດຍກົງ ຫຼື ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນຈາກການມອບຂອງລັດ, ການໂອນ, ການສືບທອດມູນມໍຣະດົກ, ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ການສະເໜີຄັດ ຄ້ານດັ່ງກ່າວ ຕ້ອງເຮັດເປັນລາຍລັກອັກສອນ. ຖ້າມີການສະເໜີຄັດຄ້ານແລ້ວ ແຕ່ຜູ້ກ່ຽວບໍ່ໄດ້ສະເໜີເປັນທາງການໃຫ້ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການໄກ່ເກ່ຍ ຫຼື ແກ້ໄຂຕາມກົດໝາຍ ຫຼື ບໍ່ໄດ້ມີການຮ້ອງຟ້ອງຕໍ່ສານ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນທີ່ຍື່ນຄຳສະເໜີເປັນຕົ້ນໄປ ໃຫ້ຖືວ່າຄຳສະເໜີຄັດຄ້ານນັ້ນ ແມ່ນບໍ່ມີເຫດຜົນພຽງພໍ ແລະ ຈະເຮັດໃຫ້ການສະເໜີຄັດຄ້ານດັ່ງກ່າວຕົກໄປ. ໃນກໍລະນີ ການສະເໜີຄັດຄ້ານ ໂດຍບຸກຄົນອື່ນທີ່ບໍ່ກ່ຽວຂ້ອງ ຕາມທີ່ກ່າວມາເທິງນີ້ ແມ່ນບໍ່ໃຫ້ນຳມາຄົ້ນຄວ້າ ແລະ ພິຈາລະນາ.
- ໃນໄລຍະເວລາປະກາດຫາຜູ້ຄັດຄ້ານນັ້ນ ສາມາດດຳເນີນການຈັດພິມ ໃບທະບຽນທີ່ດິນ, ໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ກວດກາການປະກອບສຳນວນຕອນດິນ ແລະ ຂໍ້ມູນທີ່ກ່ຽວຂ້ອງຢ່າງລະອຽດ ພ້ອມກັນນີ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ສາມາດເອົາຂໍ້ມູນທີ່ດິນເຂົ້າໃນລະບົບຖານຂໍ້ມູນທີ່ດິນ Lao Land Reg ທີ່ເຊື່ອມຕໍ່ກັບຖານຂໍ້ມູນທີ່ດິນຂອງພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ເພື່ອກວດກາຂໍ້ມູນທັງໝົດຮ່ວມກັນ ກ່ອນຄົບກຳນົດໄລຍະເວລາການປະກາດແຈ້ງການຫາຜູ້ຄັດຄ້ານ.

## ຂັ້ນຕອນ 6 ການພິຈາລະນາ ຂຶ້ນທະບຽນອອກໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ

- ຫຼັງຈາກສິ້ນສຸດກຳນົດໄລຍະເວລາແຈ້ງການຫາຜູ້ຄັດຄ້ານແລ້ວ ທີ່ດິນຕອນໃດຫາກບໍ່ມີຜູ້ຄັດຄ້ານ ຫຼື ມີການຄັດຄ້ານ ແຕ່ໄດ້ຮັບການແກ້ໄຂແລ້ວ ເຈົ້າໜ້າທີ່ທີ່ດິນ ຕ້ອງດຳເນີນການພິມເນື້ອໃນຕາມແບບພິມໃບທະບຽນທີ່ດິນ ແລະ ໃບຕາດິນ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມໃບທະ ບຽນທີ່ດິນ ແລະ ໃບຕາດິນ ສະບັບເລກທີ 0672/ກຊສ, ລົງວັນທີ 19 ກຸມພາ 2021 ຫຼື ດຳເນີນການພິມເນື້ອໃນຕາມແບບພິມໃບຢັ້ງຢືນການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕາມຂໍ້ຕົກລົງວ່າດ້ວຍການກຳນົດເນື້ອໃນແບບພິມ ແລະ ການພິມຕາມແບບພິມໃບທະບຽນຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ສຳເລັດພາຍໃນກຳນົດເວລາ ສອງ ວັນລັດຖະການ ແລ້ວສະເໜີໃຫ້ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

ຂັ້ນເມືອງ ລົງລາຍເຊັນໃສ່ໃບທະບຽນທີ່ດິນ ແລະ ໃບຕາດິນ; ໃບທະບຽນໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ສຳເລັດພາຍໃນກຳນົດເວລາ ສາມວັນ ລັດຖະການ.

- ພາຍຫຼັງສຳເລັດການຂຶ້ນທະບຽນອອກໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ, ແຕ່ລະຕອນແລ້ວ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ຕ້ອງລາຍງານຕໍ່ ຄະນະກຳມະການປົກຄອງຂັ້ນເມືອງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ບ່ອນທີ່ດິນຕັ້ງຢູ່ ພ້ອມທັງລາຍງານການຈັດຕັ້ງປະຕິບັດແຜນການຂຶ້ນທະບຽນອອກໃບຕາດິນ ໃນແຕ່ລະເດືອນ (ຮ່າງໃບຢັ້ງຢືນການນຳໃຊ້ທີ່ດິນ ໄດ້ຄັດຕິດມາພ້ອມນີ້). .
- ສຳລັບການຂຶ້ນທະບຽນການອອກໃບຕາດິນລັດ ໃຫ້ແກ່ຜູ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ແມ່ນໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ນຳສົ່ງໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ລົງລາຍເຊັນໃສ່ໃບທະບຽນທີ່ດິນ ແລະ ໃບຕາດິນ ໃຫ້ສຳເລັດພາຍໃນກຳນົດເວລາ ຫ້າ ວັນລັດຖະການ.

## ຂັ້ນຕອນ 7 ສ້າງສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້

ການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ແລະ ການຈັດປະເພດເປັນທີ່ດິນປ່າໄມ້ ໂດຍອອກໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ທີ່ຜ່ານການສຳຫຼວດວັດແທກຕອນດິນສະເພາະຕອນ ດ້ວຍກ້ອງ GNSS RTK ທີ່ເຊື່ອມລະບົບທະບຽນທີ່ດິນ Lao Land Reg ໃຫ້ດຳເນີນການ ເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ ດັ່ງນີ້:

### 1) ການເຮັດ ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ

ການເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ແມ່ນ ການສັງລວມ ແລະ ຂະຫຍາຍ ເນື້ອໃນຂອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ສຳລັບແຕ່ລະເຂດການນຳໃຊ້ທີ່ດິນປ່າໄມ້ ໃຫ້ເປັນ ແຜນປະຕິບັດລະອຽດ. ສັນຍາດັ່ງກ່າວ ສ້າງຂຶ້ນໂດຍການປຶກສາຫາລືຮ່ວມກັບ ການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ເພື່ອເປັນເຄື່ອງມື ໃນການຄຸ້ມຄອງ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີຄວາມຍືນຍົງ.

ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ໄດ້ກຳນົດກ່ຽວກັບ ລະບຽບ, ເງື່ອນໄຂ, ກຳນົດເວລາ, ສິດ, ບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ການຈັດຕັ້ງບ້ານ ແລະ ປະຊາຊົນ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນ ແລະ ປ່າໄມ້. ການສ້າງສັນຍາ ຕ້ອງມີໃບຢັ້ງຢືນການສຳຫຼວດວັດແທກທີ່ດິນປ່າໄມ້ ລວມໝົດບ້ານ (ສະເພາະທີ່ດິນລວມບ້ານ ຫຼື ລວມໝູ່. ຖ້າແມ່ນທີ່ດິນບຸກຄົນສະເພາະຕອນ ແມ່ນຈະມີໃບຢັ້ງຢືນການສຳຫຼວດວັດແທກທີ່ດິນສະເພາະຕອນ) ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໂດຍການມີສ່ວນຮ່ວມຂອງປະຊາຊົນ ຍິງ, ຊາຍ, ຊົນເຜົ່າ, ຜູ້ດ້ອຍໂອກາດ ແລະ ຜູ້ເສຍອົງຄະ ທີ່ໄດ້ອາໄສ ແລະ ທຳການຜະລິດຢູ່ໃນເຂດບ້ານດັ່ງກ່າວ.

#### ຂັ້ນຕອນການ ເຮັດສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ບ້ານ

- ທົບທວນເບິ່ງ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ລະບຽບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ມີ (ເບິ່ງ ບາດກ້າວ 5 ຂ້າງເທິງ);
- ປຶກສາຫາລືກ່ຽວກັບກົດລະບຽບ ແລະ ຂໍ້ຕົກລົງ ທີ່ຄວນຈະນຳໃຊ້ສຳລັບແຕ່ລະເຂດນຳໃຊ້ທີ່ດິນ;
- ກຽມຮ່າງສັນຍາເບື້ອງຕົ້ນ ທີ່ລະບຸ ຈຸດປະສົງ, ຫຼັກການ, ຂອບເຂດເນື້ອທີ່, ສິດ, ພັນທະ, ຂໍ້ຫ້າມ, ກຳນົດເວລາ ສຳລັບ ເຂດນຳໃຊ້ທີ່ດິນ ແລະ ປ່າໄມ້ ແຕ່ລະເຂດ. ສັນຍາດັ່ງກ່າວ ຈະກຳນົດກິດຈະກຳຕ່າງໆທີ່ອະນຸຍາດ ແລະ ບໍ່ອະນຸຍາດໃຫ້ເຮັດ ໃນແຕ່ລະເຂດທີ່ດິນປ່າໄມ້ ພ້ອມທັງກຳນົດມາດຕະການຕ່າງໆຕໍ່ຜູ້ລະເມີດສັນຍາຕາມກົດໝາຍ ແລະ ລະບຽບການ;
- ສະເໜີຮ່າງສັນຍາເບື້ອງຕົ້ນ ແລະ ແຜນທີ່ຂອບເຂດການນຳໃຊ້ທີ່ດິນປ່າໄມ້ແຕ່ລະເປົ້າໝາຍ ໃນແຜນຄຸ້ມຄອງ ປ່າໄມ້ຂັ້ນບ້ານ ໃນກອງປະຊຸມລວມບ້ານ;
- ຈຸງານກະສິກຳ ແລະ ປ່າໄມ້ບ້ານ ປັບປຸງສັນຍາຄືນໃໝ່ ຕາມຄຳເຫັນ ແລະ ການຕົກລົງ ໃນກອງປະຊຸມລວມບ້ານ;
- ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ຈະໄດ້ຮັບການເຊັນຢັ້ງຢືນ ຮັບຮູ້ ແລະ ບັງຄັບໃຊ້ ຈາກຄະນະກຳມະການປົກຄອງຕາແສງ ແລະ ຂັ້ນເມືອງ;

- ພະນັກງານຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຜູ້ກະກຽມ ແລະ ອັດສຳເນົາສັນຍາ ເພື່ອແຈກຢາຍໃຫ້ບັນດາບ້ານທີ່ຢູ່ໃກ້ຄຽງ ພາຍຫຼັງທີ່ໄດ້ຮັບການເຊັນ ແລະ ປະທັບຕາຈາກຄະນະກຳມະການປົກຄອງຕາແສງ, ຈຸງານກະສິກຳ ແລະ ປ່າໄມ້ບ້ານ ແລະ ຄະນະກຳມະການປົກຄອງຂັ້ນເມືອງ.

**2) ການເຮັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ກັບບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ການເຮັດສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ກັບບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ນຳໃຊ້ທີ່ດິນປ່າໄມ້ ຕັ້ງແຕ່ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ໃຫ້ຈັດປະເພດເປັນທີ່ດິນປ່າໄມ້ ໂດຍມອບໃຫ້ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ຄຸ້ມຄອງ, ສ້າງສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອຮັບຮູ້ ແລະ ປົກປ້ອງ ສິດນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ລັດໄດ້ຈັດສັນໃຫ້ປະຊາຊົນ ເພື່ອຄຸ້ມຄອງນຳໃຊ້ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ໄດ້ຮັບການອະນຸມັດ;

ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ດັ່ງກ່າວ ໄດ້ກຳນົດກ່ຽວກັບ ລະບຽບ, ເງື່ອນ ໄຂ, ກຳນົດເວລາ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ນຳໃຊ້ທີ່ດິນປ່າໄມ້ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນ ແລະ ປ່າໄມ້. ການເຮັດສັນຍາ ຕ້ອງມີໃບຢັ້ງຢືນການສຳຫຼວດວັດແທກທີ່ດິນປ່າໄມ້ແຕ່ລະຕອນ.

ຂັ້ນຕອນຂອງການ ເຮັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ກັບບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ດັ່ງນີ້:

- ທີມງານໜ່ວຍງານປ່າໄມ້ເມືອງ ຈັດກອງປະຊຸມ ກັບການຈັດຕັ້ງບ້ານ ແລະ ປະຊາຊົນທັງຍິງ ແລະ ຊາຍ, ຜູ້ທີ່ຈະເຮັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອນຳສະເໜີ ຈຸດປະສົງ, ຂັ້ນຕອນ ວິທີການໃນການເຮັດສັນຍາ, ຜົນຄາດວ່າຈະໄດ້ຮັບ, ຄວາມໝາຍຄວາມສຳຄັນຂອງການເຮັດ ສັນຍາ ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນປ່າໄມ້ສ່ວນບຸກຄົນ, ເງື່ອນໄຂຂອງສັນຍາ.
- ສະເໜີຜ່ານຮ່າງສັນຍາ ທີ່ລະບຸ ຈຸດປະສົງ, ຫຼັກການ, ຂອບເຂດເນື້ອທີ່, ສິດ, ພັນທະ, ຂໍ້ຫ້າມ, ກຳນົດເວລາ ສຳລັບ ການນຳໃຊ້ທີ່ດິນປ່າໄມ້ ຂອງບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ. ສັນຍາດັ່ງກ່າວ ຈະກຳນົດກິດຈະກຳຕ່າງໆທີ່ອະນຸຍາດ ແລະ ບໍ່ອະນຸຍາດໃຫ້ເຮັດ ພ້ອມທັງກຳນົດມາດຕະການຕ່າງໆຕໍ່ຜູ້ລະເມີດສັນຍາ ຕາມກົດໝາຍ ແລະ ລະບຽບການ;
- ທີມງານໜ່ວຍງານປ່າໄມ້ເມືອງ ເຮັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ກັບ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງ ໂດຍການ ເອົາຂໍ້ມູນຕອນດິນ ແລະ ຂໍ້ມູນຜູ້ຄອບຄອງແລະ ນຳໃຊ້ທີ່ດິນເຂົ້າໃນຮ່າງສັນຍາ ແລ້ວ ໃຫ້ຜູ້ຄອບຄອງ ແລະ ນຳໃຊ້ທີ່ດິນ ລົງລາຍເຊັນ ແລະ ແປະໂປ້ມື, ຈາກນັ້ນ ໃຫ້ນາຍບ້ານລົງລາຍເຊັນ ແລະ ປະທັບຕາຢັ້ງຢືນ ກ່ອນຈະສົ່ງໃຫ້ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ພິຈາລະນາ ລົງລາຍເຊັນ ແລະ ປະທັບຕາ;
- ເຮັດສັນຍາວ່າດ້ວຍການປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ເຮັດເປັນສອງສະບັບ, ສະບັບໜຶ່ງເກັບຮັກສາໄວ້ຢູ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ອີກສະບັບໜຶ່ງ ມອບໃຫ້ ຜູ້ຄຸ້ມຄອງ, ນຳໃຊ້ທີ່ດິນເປັນຜູ້ເກັບຮັກສາສັນຍາໄວ້ (ຮ່າງສັນຍາ ແລະ ຮ່າງແບບພິມໃບຢັ້ງຢືນການສຳຫຼວດວັດແທກ ໄດ້ຄັດຕິດມາພ້ອມນີ້).

3) **ການເຮັດສັນຍາ ວ່າດ້ວຍການນນຳໃຊ້ທີ່ດິນປ່າໄມ້ (ດິນປຸກສ້າງ ແລະ ດິນນາ)**

ເຮັດສັນຍາວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ ກັບ ການຈັດຕັ້ງບ້ານ, ອົງການຈັດຕັ້ງ, ບຸກຄົນ, ຄອບຄົວ ແລະ ນິຕິບຸກຄົນ ທີ່ໄດ້ນຳໃຊ້ທີ່ດິນປ່າໄມ້ ຕັ້ງແຕ່ການປະກາດໃຊ້ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ກົດໝາຍ ວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ສະບັບເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024 ແລະ ຄຳແນະນຳ ສະບັບເລກທີ 1821/ກປ, ລົງວັນທີ 26 ພຶດສະພາ

2025 ໂດຍມອບໃຫ້ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນຜູ້ຄຸ້ມຄອງສ້າງ ສັນຍາ ວ່າດ້ວຍການນຳໃຊ້ທີ່ດິນປ່າໄມ້ ເພື່ອຮັບຮູ້ ແລະ ປົກປ້ອງ ສິດນຳໃຊ້ທີ່ດິນ ແລະ ປ່າໄມ້ ທີ່ລັດໄດ້ຈັດສັນໃຫ້ປະຊາຊົນ ເພື່ອຄຸ້ມຄອງນຳໃຊ້ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ໄດ້ຮັບການອະນຸມັດ.

**ຂັ້ນຕອນ 8 ກອງປະຊຸມສະຫຼຸບວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້**

ຈັດກອງປະຊຸມຊຸມບ້ານ ເພື່ອສະຫຼຸບປິດຂະບວນການ ຮັບຮູ້ສິດນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ແບບມີສ່ວນຮ່ວມ ໂດຍເຊີນເອົາ ການຈັດຕັ້ງບ້ານ, ເຖົ້າແກ່ແນວໂຮມ, ສະຫະພັນຍິງ, ອົງການຈັດຕັ້ງມະຫາຊົນຕ່າງໆ, ປະຊາຊົນໝົດບ້ານ ແລະ ອົງການປົກຄອງບ້ານອ້ອມຂ້າງ ເຂົ້າຮ່ວມ, ເຊີນຄະນະກຳມະການປົກຄອງຕາແສງ ແລະ ຂັ້ນເມືອງເຂົ້າຮ່ວມ ພ້ອມທັງ ມອບແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້, ໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ລວມທັງ ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ໃຫ້ການຈັດຕັ້ງບ້ານ ແລະ ປະຊາຊົນ ຢ່າງເປັນທາງການ.

## ບາດກ້າວ 7 ການເກັບຮັກສາຂໍ້ມູນ ການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້

ການເກັບຮັກສາຂໍ້ມູນ ການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ແມ່ນ ການເກັບຮັກສາຂໍ້ມູນໄວ້ເປັນລະບົບ ເພື່ອສະດວກໃນການນຳໃຊ້, ການຕິດຕາມ, ປັບປຸງ ຂໍ້ມູນໃນແຕ່ລະໄລຍະ ແລະ ແລກປ່ຽນຂໍ້ມູນຂອງຂະແໜງການ. ໃນໄລຍະຜ່ານມາ ໄດ້ພັດທະນາລະບົບຖານຂໍ້ມູນ ທະບຽນ ທີ່ດິນ (Lao Land Reg) ເພື່ອບັນທຶກຂໍ້ມູນກ່ຽວກັບ ວຽກງານຂຶ້ນສຳມະໂນທີ່ດິນ, ຂຶ້ນທະບຽນອອກ ໃບຕາດິນ, ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ໄດ້ພັດທະນາລະບົບ ຖານຂໍ້ມູນວາງແຜນນຳໃຊ້ທີ່ດິນ (Land Use Information System - LUIS) ເພື່ອເກັບກຳ ແລະ ຄຸ້ມຄອງຂໍ້ມູນກ່ຽວກັບແຜນຈັດສັນທີ່ດິນ ໃນແຕ່ລະຂັ້ນ ລວມທັງແຜນນຳໃຊ້ທີ່ດິນຕາມຂະແໜງການ. ຖານຂໍ້ມູນດັ່ງກ່າວ ມີຂໍ້ມູນກ່ຽວກັບແຜນທີ່, ສະຖິຕິທີ່ດິນແຕ່ລະເຂດ, ແຕ່ລະປະເພດການນຳໃຊ້ທີ່ດິນ. ບັນດາຂໍ້ມູນ ຫຼື ເອກະສານຕ່າງໆຄວນປະກອບມີ ດັ່ງນີ້.

- ໜັງສືສະເໜີຮັບຮອງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ລະບຽບການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້;
- ປຶ້ມບັນທຶກເຂດຄຸ້ມຄອງຂອງບ້ານ;
- ຂໍ້ມູນເສດຖະກິດ-ສັງຄົມ ແລະ ຂໍ້ມູນການນຳໃຊ້ທີ່ດິນ ແລະ ປ່າໄມ້ຂອງຊຸມຊົນບ້ານ.

ການເກັບຮັກສາຂໍ້ມູນ ການວາງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ແລະ ການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ໃຫ້ອີງໃສ່ ລະດັບ ແລະ ຈຸດພິເສດຂອງແຕ່ລະຂັ້ນ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

**ຂັ້ນຕອນ 1 ການເກັບຮັກສາຂໍ້ມູນ ຂັ້ນບ້ານ ແລະ ຕາແສງ**

- ຈັດພິມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ເອກະສານທີ່ກ່ຽວຂ້ອງໃສ່ໃນແຟ້ມປົກແຂງ ແລະ ແຜນທີ່ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານຂະໜາດ A0 ເກັບໄວ້ໃນບັ້ງທໍ່ພີວີຊີ ຫຼື ບັ້ງແຜນທີ່ສຳເລັດຮູບ.
- ມອບໃຫ້ ການຈັດຕັ້ງບ້ານ ແລະ ຄະນະກຳມະການປົກຄອງຕາແສງ ເປັນຜູ້ເກັບຮັກສາ ຂໍ້ມູນ ຫຼັງຈາກ ກອງປະຊຸມສະຫຼຸບປິດ ໂດຍມີສ່ວນຮ່ວມ ແລະ ຮັບຮູ້ ຈາກການຈັດຕັ້ງບ້ານ ແລະ ສະຫະພັນແມ່ຍິງບ້ານ;
- ສ້າງຄວາມເຂົ້າໃຈໃຫ້ແກ່ ການຈັດຕັ້ງບ້ານ ໃນການອ່ານຂໍ້ມູນຕົວເລກ ແລະ ແຜນທີ່ ເພື່ອຈະສາມາດອະທິບາຍ ແລະ ແນະນຳໃຫ້ປະຊາຊົນສາມາດເຂົ້າເຖິງຂໍ້ມູນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
- ໃນກໍລະນີມີການປ່ຽນແປງຄະນະຮັບຜິດຊອບ, ບຸກຄົນເກັບຮັກສາຂໍ້ມູນ ຂັ້ນບ້ານ ຕ້ອງມີການມອບຮັບ ແລະ ແນະນຳວິທີການເກັບຮັກສາໃຫ້ຜູ້ຮັບຜິດຊອບໃໝ່.

**ຂັ້ນຕອນ 2 ການເກັບຮັກສາຂໍ້ມູນ ຂັ້ນເມືອງ**

- ຈັດພິມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ເອກະສານທີ່ກ່ຽວຂ້ອງໃສ່ໃນແຟ້ມປົກແຂງ ແລະ ເຮັດເປັນເອກະສານອີເລັກໂຕຣນິກ.
- ເກັບຮັກສາຂໍ້ມູນໄວ້ຢູ່ ໜ່ວຍງານປ່າໄມ້ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ.

**ຂັ້ນຕອນ 3 ການເກັບຮັກສາຂໍ້ມູນຂັ້ນແຂວງ**

- ຈັດພິມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ເອກະສານທີ່ກ່ຽວຂ້ອງໃສ່ໃນແຟ້ມປົກແຂງ ແລະ ເຮັດເປັນເອກະສານອີເລັກໂຕຣນິກ.
- ເກັບຮັກສາຂໍ້ມູນໄວ້ຢູ່ ຂະແໜງປ່າໄມ້ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ.

**ຂັ້ນຕອນ 4 ການເກັບຮັກສາຂໍ້ມູນເອກະສານ ແລະ ອີເລັກໂຕຣນິກ ຢູ່ຂັ້ນສູນກາງ**

- ປ້ອນຂໍ້ມູນແຜນຄຸ້ມຄອງທີ່ດິນ ແລະປ່າໄມ້ບ້ານ ແລະ ຂໍ້ມູນທີ່ກ່ຽວຂ້ອງຕ່າງໆ ທັງເປັນຂໍ້ມູນ GIS ແລະ ຂໍ້ມູນເອກະສານ ເຂົ້າໃນ ຖານຂໍ້ມູນວາງແຜນນຳໃຊ້ທີ່ດິນ (ໂປຣແກຣມ LUIS);
- ເກັບຂໍ້ມູນການຂຶ້ນທະບຽນອອກໃບຕາດິນ ແລະ ໃບຢັ້ງຢືນການນຳໃຊ້ທີ່ດິນເຂົ້າໃນ ຖານຂໍ້ມູນທະບຽນທີ່ດິນ (ໂປຣແກຣມ Lao Land Reg);
- ປ້ອນຂໍ້ມູນປ່າໄມ້ບ້ານ ແລະ ສັນຍາປົກປັກຮັກສາ ແລະ ນຳໃຊ້ທີ່ດິນປ່າໄມ້ ເຂົ້າໃນຖານຂໍ້ມູນຂອງກົມປ່າໄມ້.

## ບາດກ້າວ 8 ການຈັດຕັ້ງປະຕິບັດແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ

ການຈັດຕັ້ງບ້ານ, ຈຸງານກະສິກຳ ແລະ ປ່າໄມ້ບ້ານ ເປັນເຈົ້າການໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃນຂອບເຂດບ້ານຂອງຕົນໃຫ້ມີປະສິດທິຜົນສູງ. ສ້າງກະດານແຜນທີ່ ແລ້ວຕິດຕັ້ງໃສ່ບ່ອນ ທີ່ເໝາະສົມ ຢູ່ໃນບໍລິເວນຂອບເຂດບ້ານ, ດຳເນີນການເຜີຍແຜ່ແຜນ ແລະ ລະບຽບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໃຫ້ປະຊາຊົນພາຍໃນບ້ານ ແລະ ບ້ານອ້ອມຂ້າງໄດ້ຮັບຮູ້, ເຜີຍແຜ່ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບປະຊາຊົນພາຍໃນບ້ານ ໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງ ລວມທັງ ທີ່ດິນລວມຂອງບ້ານ.

ສະມາຊິກຈຸງານກະສິກຳ ແລະ ປ່າໄມ້ບ້ານ ທັງຍິງ ແລະ ຊາຍ ເປັນເຈົ້າການຈັດຕັ້ງປະຕິບັດກິດຈະກຳຢູ່ໃນແຕ່ລະເຂດ ແລະ ປະເພດປ່າ, ຊຸກຍູ້ ແລະ ປັບປຸງຊີວິດ ການເປັນຢູ່ ຂອງປະຊາຊົນ ຕາມທ່າແຮງຂອງແຕ່ລະບ້ານ ໂດຍຖືເອົາປະຊາຊົນເປັນເຈົ້າການທັງຍິງ ແລະ ຊາຍ ໃນການຈັດຕັ້ງ ປະຕິບັດກິດຈະກຳ ພ້ອມທັງ ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ໃນການຄຸ້ມຄອງປົກປັກຮັກສາ, ປູກ, ຟື້ນຟູປ່າໄມ້ ແລະ ປ້ອງກັນການທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໂດຍປະຕິບັດຕາມ ລາຍລະອຽດທີ່ກຳນົດໄວ້ ໃນ ພາກທີ III ຂໍ້ທີ 4 ຂອງ ຄຳແນະນຳ ກ່ຽວກັບການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ສະບັບເລກທີ 4143/ກປ, ລົງວັນທີ 03 ຕຸລາ 2023 ຊຶ່ງແມ່ນ ການຈັດຕັ້ງປະຕິບັດກິດຈະກຳຢູ່ໃນແຕ່ລະປະເພດປ່າ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ໂດຍເລັງໃສ່ປະຕິບັດກິດກະກຳ ທີ່ຕິດພັນກັບການຊຸກຍູ້ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຕາມທ່າແຮງຂອງແຕ່ລະບ້ານ ແລະ ໃຫ້ປະຊາຊົນເປັນເຈົ້າການ ໃນການຈັດຕັ້ງປະຕິບັດກິດຈະກຳ ແລະ ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ໃນການຄຸ້ມຄອງປົກປັກຮັກສາ, ປູກ, ຟື້ນຟູປ່າໄມ້ ແລະ ປ້ອງກັນການທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ດັ່ງນີ້:

1) **ວຽກງານຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້**

- ສ້າງ ແລະ ປັບປຸງ ລະບຽບການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ ຕາມແບບພິມ ປມບ 6;
- ໂຄສະນາເຜີຍແຜ່ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ລວມທັງລະບຽບການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ຂອງບ້ານ;
- ຕິດປ້າຍ ແລະ ປັກຫຼັກໝາຍ ໃນເຂດທີ່ດຳເນີນກິດຈະກຳ ແຕ່ລະປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ: ເຂດປູກໄມ້ ແລະ ເຄື່ອງປ່າຂອງດົງ, ເຂດຄຸ້ມຄອງ ນຳໃຊ້ເຄື່ອງປ່າຂອງດົງ ແລະ ຕິດປ້າຍ, ປັກຫຼັກໝາຍ ເພີ່ມໃນຈຸດທີ່ເຫັນວ່າມີຄວາມສ່ຽງ ຕໍ່ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ຂອງບ້ານ;
- ຈັດຕັ້ງຈຸງານກະສິກຳ ແລະ ປ່າໄມ້ບ້ານ ຫຼື ກຸ່ມປົກປັກຮັກສາປ່າໄມ້ ເພື່ອເຮັດໜ້າທີ່ຄຸ້ມຄອງປົກປັກຮັກສາ ເຂດປ່າປ້ອງກັນ (ປ່າສັກສິດ ແລະ ປ່າຊ້າ), ປ່າສະຫງວນ (ປ່າຍອດນ້ຳ, ປ່າແຄມນ້ຳ, ປ່າແຄມທາງ), ການປ້ອງກັນ

ໄຟໄໝ້ລາມປ່າ ໃນເຂດປົກຄອງຂອງບ້ານ (ຖ້າມີເງື່ອນໄຂ ກໍເຮັດ ສັນຍາ ວ່າດ້ວຍການປົກປັກຮັກສາປ່າໄມ້ກັບປະຊາຊົນ);

- ກໍານົດຈຸດ ແລະ ແລວກວດກາລາດຕະເວນ ເຂດປ່າໄມ້ ທີ່ມີຄວາມສ່ຽງ ເພື່ອປ້ອງກັນ ແລະ ສະກັດກັ້ນການບຸກລຸກທໍາລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ສ້າງແລວປ້ອງກັນໄຟໄໝ້ລາມປ່າ ເຂດທີ່ມີຄວາມສ່ຽງໄຟໄໝ້ລາມປ່າ, ມີການກວດກາລາດຕະເວນເປັນປະຈໍາໃນຊ່ວງລະດູແລ້ງ ແລະ ພ້ອມທັງອະນາໄມຖາກຖາງຕາມແລວປ້ອງກັນໄຟປີລະຄັ້ງ.

2) **ການພັດທະນາປ່າໄມ້**

- ກໍານົດເນື້ອທີ່ປູກໄມ້ ເພື່ອຮັກສາສິ່ງແວດລ້ອມ ແລະ ເຂດສາທາລະນະ ໃຫ້ດໍາເນີນໃນເຂດປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃນປ່າປ້ອງກັນ ແລະ ປ່າສະຫງວນ. ການປູກໄມ້ໃນເຂດນີ້ບໍ່ອະນຸຍາດໃຫ້ຂຸດຄົ້ນ ແລະ ນໍາໃຊ້ ເພື່ອເປົ້າໝາຍທາງດ້ານການຄ້າ (ຂໍ້ 2 ມາດຕາ 60 ຂອງກົດໝາຍວ່າດ້ວຍປ່າໄມ້);
| | ກ່ຽວກັບ ພະຍາດລະບາດຕໍ່ຄົນ:........ | | | |
| 5 | **ດ້ານໄພທໍາມະຊາດ** | | | |
| | ກ່ຽວກັບ ໄພນໍ້າຖ້ວມ:........ | | | |
| | ກ່ຽວກັບ ໄພແຫ້ງແລ້ງ:........ | | | |
| | ກ່ຽວກັບ ໄຟໃໝ້ປ່າ:........ | | | |
| | | | | |
| 6 | **ດ້ານອື່ນໆ** | | | |
| | ກ່ຽວກັບ ນໍ້າກິນນໍາໃຊ້:........ | | | |
| | ກ່ຽວກັບ ເສັ້ນທາງ:........ | | | |
| | ກ່ຽວກັບ ສຸຂະພາບຄົນ:........ | | | |
| | ກ່ຽວກັບ ວຽກເຮັດງານທໍາ:........ | | | |
| | | | | |

**ເພື່ອແກ້ໄຂບັນຫາດັ່ງກາວ ບ້ານເຮົາມີທ່າແຮງຫຍັງແດ່**

..................................................................................................................................

..................................................................................................................................

**ເພື່ອແກ້ໄຂບັນຫາດັ່ງກາວ ມີໂອກາດຫຍັງແດ່?**

..................................................................................................................................

..................................................................................................................................

..................................................................................................................................

..................................................................................................................................

### ຣສ-5: ແບບພິມເກັບກຳຂໍ້ມູນ ແນວໂນ້ມ ອັດຕາການເພີ່ມຂຶ້ນຂອງປະຊາກອນ

**ວິທີການ:** ສຳພາດນາຍບ້ານ ແລະ ຮອງນາຍບ້ານ 2-3 ອົງການປົກຄອງບ້ານ ແລະ ແນວໂຮມບ້ານ ກ່ຽວກັບອັດຕາການເພີ່ມຂຶ້ນຂອງພົນລະເມືອງ ໂດຍອີງໃສ່ສະຖິຕິຕົວເລກທີ່ບັນທຶກໄວ້ຂອງອົງການປົກຄອງບ້ານໃນໄລຍະຜ່ານມາ.

ຜູ້ໃຫ້ສຳພາດ ..........................................................................................................................

ບ້ານ:...............................; ເມືອງ: .................................; ແຂວງ: .....................................; ຜູ້ເກັບກຳຂໍ້ມູນ....................................................ວັນທີ ເກັບກຳຂໍ້ມູນ: .........................................

| ປີ (ຢ້ອນຫຼັງ) | ຈຳນວນປະຊາກອນ (ຄົນ) | ເກີດ (ຄົນ) | ເສຍຊີວິດ (ຄົນ) | ຍ້າຍເຂົ້າ (ຄົນ) | ຍ້າຍອອກ (ຄົນ) | ຈຳນວນເພີ້ມຂຶ້ນ (ຄົນ) | ອັດຕາເພີ້ມຂຶ້ນຕໍ່ປີ (%) |
|---|---|---|---|---|---|---|---|
| 2024 | | | | | | | |
| 2023 | | | | | | | |
| 2022 | | | | | | | |
| 2021 | | | | | | | |
| 2020 | | | | | | | |
| | | | | | | | |
| | | | | | | | |
| ອັດຕາການເພີ່ມຂຶ້ນ ຂອງປະຊາກອນ ໂດຍສະເລ່ຍ | | | | | | ............ຄົນ | .............% |

## ຣສ-6: ແບບພິມບັນທຶກ ການສຳຫຼວດ ແລະ ເກັບກຳຂໍ້ມູນພາກສະໜາມ

☐ ເຂດຄຸ້ມຄອງລະຫວ່າງບ້ານ; ☐ ຂອບເຂດປ່າໄມ້ບ້ານ; ☐ ສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້ (ໝາຍ √),
ສຳລັບ ເຂດປະເພດປ່າໄມ້ບ້ານ ແລະ ທີ່ດິນປ່າໄມ້ບ້ານ ທີ່ກຳນົດ: ☐ ປ່າຊົມໃຊ້ບ້ານ; ☐ ປ່າສະຫງວນບ້ານ; ປ່າປ້ອງກັນບ້ານ; ປະເພດປ່າອື່ນໆ (ປ່າຊ້າ, ປ່າສັກສິດ/ປ່າຄຳ…) ລະບຸລະອຽດ:……………………

ຊື່ບ້ານ:………………; ຕາແສງ……, ເມືອງ:…………………………, ແຂວງ:………………………………

ຊາວບ້ານ ຜູ້ພາເດີນສຳຫຼວດ:………………………………………………………………………………

ພະນັກງານ ຜູ້ບັນທຶກ/ໝາຍຈຸດ…………………………………… ວັນທີ/ເດືອນ/ປີ:…………………………

| ລຳດັບຈຸດ (ສັນຍາລັກລະບົບ ແຜນທີ່) | ຈຸດທີ່ຕັ້ງພູມີສາດ GPS (ຕົ້ນຕໍໃຫ້ນຳໃຊ້ GNSS RTK) ຫຼື ຈຸດທາງເດີນ (Waypoint) | | ຄວາມສູງ ຈາກລະດັບ ໜ້ານໍ້າທະເລ (m) | ຂໍ້ມູນລະອຽດ ຈຸດທາງເດີນ ເຊັ່ນ: ພູສູງ ຫຼື ຮາບພຽງ, ປະເພດປ່າ (ປ່າໂຄກ/ປ່າປະສົມ...), ສະພາບປ່າ/ຄວາມປົກຫຸ້ມ ຫຼື ປ່າເລົ່າ ຫຼື ການນຳໃຊ້ທີ່ດິນອື່ນໆ |
|---|---|---|---|---|
| | ເສັ້ນແວງ (X) | ເສັ້ນແວງ (Y) | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |

### ແຕ້ມແຜນວາດທາງເດີນ ແລະ ຈຸດສຳຫຼວດ, ບອກເລົ່າຂອບເຂດ
**(ສຳລັບ ຂອບເຂດປ່າໄມ້ບ້ານ, ເຂດ/ປະເພດ ສະພາບການນຳໃຊ້ທີ່ດິນ ພາຍໃນບ້ານ)**

| |
|---|
| |

**ຂໍ້ມູນເພີ່ມເຕີມ:**………………………………………………………………………………………
…………………………………………………………………………………………………………
…………………………………………………………………………………………………………
…………………………………………………

**<u>ຢັ້ງຢືນ</u>**

**ທີມງານສຳຫຼວດ**
………………………
………………………

**ຊາວບ້ານ (ຜູ້ພາສຳຫຼວດ)**
……………………
……………………

ສ-ປມ1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ສັນຍາ

## ວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້

ລະຫວ່າງ

ການຈັດຕັ້ງບ້ານ/ອົງການຈັດຕັ້ງ.....................................................

ແລະ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.....................................................

ເດືອນ..............................., ປີ...............................

ສ-ປມ1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ...........

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ເມືອງ............ ເລກທີ........./..........

...................., ວັນທີ.......................

# ສັນຍາ

## ວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງ ເລກທີ 64 /ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70 /ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍ ປ່າປ້ອງກັນ ຫຼື ປ່າສະຫງວນ ຫຼື ປ່າຜະລິດ ສະບັບເລກທີ..................;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024;
- ອີງຕາມ ຄຳແນະນຳຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1821/ກປ, ລົງວັນທີ 26 ພຶດສະພາ 2025;
- ອີງຕາມ ແຜນຈັດສັນ ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ສະບັບເລກທີ..........................................

**ສັນຍາວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ສະບັບນີ້ ໄດ້ສ້າງຂຶ້ນໂດຍ ການຕົກລົງເຫັນດີທັງສອງຝ່າຍ (ເອີ້ນວ່າ ຄູ່ສັນຍາ)**

**ລະຫວ່າງ**

**ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.................................................**

**ຊຶ່ງຕາງໜ້າໂດຍ ທ່ານ.................................. ຫົວໜ້າ/ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.............................. ຕໍ່ໄປນີ້ເອີ້ນວ່າ "ຝ່າຍ ກ"**

**ແລະ**

**ການຈັດຕັ້ງບ້ານ/ອົງການຈັດຕັ້ງ....................................**

**ຊຶ່ງຕາງໜ້າໂດຍ ທ່ານ.........................................**

**ປະທານ/ຮອງປະທານບ້ານ........................ ຕໍ່ໄປນີ້ເອີ້ນວ່າ "ຝ່າຍ ຂ"**

**ມາດຕາ 1 ຈຸດປະສົງ**

ສັນຍາສະບັບນີ້ ກຳນົດ ກ່ຽວກັບ ຫຼັກການ, ເງື່ອນໄຂ, ສິດ, ພັນທະ, ຂໍ້ຫ້າມ ແລະ ມາດຕະການໃນການຈັດຕັ້ງປະຕິບັດສັນຍາ ລະຫວ່າງ ການຈັດຕັ້ງບ້ານ/ອົງການຈັດຕັ້ງ...................... ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ................. ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ແບບຍືນຍົງ ໂດຍການມີສ່ວນຮ່ວມຂອງປະຊາຊົນພາຍໃນບ້ານ/ອົງການຈັດຕັ້ງ............ ແນໃສ່ຮັບປະກັນ ຜົນປະໂຫຍດ ຂອງຄູ່ສັນຍາ, ລັດ ແລະ ປະຊາຊົນ ພາຍໃນບ້ານ ບົນພື້ນຖານການ

ປະຕິບັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ລວມທັງການຕິດຕາມ ກວດກາ, ການປະຕິບັດສິດ ແລະ ພັນທະໃຫ້ຄົບຖ້ວນຕາມກົດໝາຍ ແລະ ລະບຽບການ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດ ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກຳນົດເວລາຂອງສັນຍາ**

ກຳນົດເວລາໃນການຈັດຕັ້ງປະຕິບັດສັນຍາສະບັບນີ້ ມີອາຍຸ............ປີ (ບໍ່ເກີນ ຫ້າສິບ ປີ) ຊຶ່ງເລີ່ມແຕ່ວັນທີ, ເດືອນ, ປີ.......... ຫາ ວັນທີ, ເດືອນ, ປີ, ....... ແລະ ສາມາດຕໍ່າໄດ້ ຕາມການຕົກລົງເຫັນດີຂອງຄູ່ສັນຍາ.

ໃນການຕໍ່ກຳນົດເວລາຂອງສັນຍາແຕ່ລະຄັ້ງ ຄູ່ສັນຍາ "ຝ່າຍ ຂ" ຕ້ອງສະເໜີເຈດຈຳນົງຢ່າງເປັນລາຍລັກອັກສອນ ເຖິງ "ຝ່າຍ ກ" ຢ່າງໜ້ອຍ ສາມ ເດືອນ ກ່ອນກຳນົດເວລາຂອງສັນຍາຈະສິ້ນສຸດ.

**ມາດຕາ 3 ເປົ້າໝາຍຂອງການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ເປົ້າໝາຍການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕ້ອງສອດຄ່ອງກັບ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ /ອົງການຈັດຕັ້ງ................ ຊຶ່ງມີເປົ້າໝາຍນຳໃຊ້ເພື່ອ..............................................
.................................................................................................................

**ມາດຕາ 4 ຂອບເຂດເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນສັນຍາ**

ຂອບເຂດເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ແມ່ນນອນຢູ່ໃນທີ່ດິນ............ (ສາມປະເພດປ່າ) ຕາມແຜນຈັດສັນປ່າ........... ຊຶ່ງໄດ້ຈັດແບ່ງຕາມພື້ນທີ່ຕົວຈິງ (ປ່າປ້ອງກັນ ລວມມີ ປ່າຍອດນໍ້າ, ປ່າແຄມນໍ້າ, ປ່າແຄມທາງ ຫຼື ປ່າສະຫງວນ ລວມມີ ປ່າສັກສິດ, ປ່າຊ້າ ຫຼື ປ່າຊົມໃຊ້ຂອງບ້ານ). ນອກຈາກນັ້ນ ຍັງມີເຂດທີ່ດິນເປົ່າວ່າງ ທີ່ໄດ້ກຳນົດເປັນເຂດຜະລິດ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ.

ການກຳນົດຂອບເຂດເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ໃນ ສັນຍາ ວ່າດ້ວຍການ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ແລະ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ມີລາຍລະອຽດດັ່ງນີ້:

**ຕາຕະລາງ 1: ຂອບເຂດເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນສັນຍາ**

| **ປ່າໄມ້ໃນຂອບເຂດປົກຄອງບ້ານ** | **ຈຸດພິກັດ (X,Y)** | **ເນື້ອທີ່ (ha)** |
|---|---|---|
| **1. ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບ້ານຄຸ້ມຄອງ** | | |
| ປ່າຊົມໃຊ້ບ້ານ | | |
| ປ່າສະຫງວນບ້ານ | | |
| ປ່າປ້ອງກັນບ້ານ | | |
| ປ່າໄມ້ ແລະ ທີ່ດິນປ່າໄມ້ອື່ນໆ (ດິນແຮສຳລັບນຳໃຊ້ໃນອະນາຄົດ) | | |
| **ລວມຍ່ອຍ** | | |
| **2. ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຄຸ້ມຄອງ, ປົກປັກຮັກສາ, ແລະ ນຳໃຊ້ແບບຍືນຍົງໂດຍອົງການຈັດຕັ້ງ / ລັດ** | | |
| | | |
| | | |
| **ລວມຍ່ອຍ** | | |
| **3. ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຄຸ້ມຄອງ, ປົກປັກຮັກສາ, ແລະ ນຳໃຊ້ແບບຍືນຍົງໂດຍ ນິຕິບຸກຄົນ ຫຼື ອື່ນໆ** | | |
| | | |
| | | |

| | | |
|---|---|---|
| **ລວມຍ່ອຍ** | | |
| **ລວມ** | | |

***ໝາຍເຫດ:** ລາຍລະອຽດກ່ຽວກັບກິດຈະກຳຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນລະບຸໄວ້ລະອຽດໃນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ໄດ້ຮັບການອະນຸມັດຮັບຮອງ ຕາມເອກະສານຊ້ອນທ້າຍ A*

**ມາດຕາ 5 ສິດ, ພັນທະ ແລະ ຂໍ້ຫ້າມຂອງແຕ່ລະຝ່າຍ**

**5.1. ສິດ, ພັນທະ ແລະ ຂໍ້ຫ້າມຂອງ "ຝ່າຍ ກ"**

**ກ. ສິດຂອງ "ຝ່າຍ ກ"**

1. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການປະຕິບັດ ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

2. ເກັບກຳຂໍ້ມູນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ນຳການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ;

3. ຊີ້ນຳ, ຊຸກຍູ້ການຈັດຕັ້ງບ້ານ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້;

4. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການປະຕິບັດ ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ;

5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ/ແຂວງ..... ແລະ ຄະນະກຳມະການປົກຄອງນະຄອນ/ເມືອງ........ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ພັນທະຂອງ"ຝ່າຍ ກ"**

1. ແຕ່ງຕັ້ງພະນັກງານ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານສາມາດນຳພາ, ຊຸກຍູ້, ການຕິດຕາມກວດກາ ແລະ ການລາຍງານ ການຈັດຕັ້ງປະຕິບັດສັນຍາສະບັບນີ້;

2. ປົກປ້ອງ ແລະ ຮັບປະກັນສິດການນຳໃຊ້, ການເຂົ້າເຖິງ ແລະ ການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງ "ຝ່າຍ ຂ" ພາຍໃຕ້ສັນຍານີ້ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ;

3. ສະໜອງການບໍລິການດ້ານເຕັກນິກວິຊາການ, ການຈັດຕັ້ງ, ຝຶກອົບຮົມທຸລະກິດ ແລະ ສະໜັບສະໜູນ ລວມທັງ ກົນໄກການແກ້ໄຂຂໍ້ຂັດແຍ່ງ ແລະ ການຈັດຕັ້ງປະຕິບັດ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

4. ທົບທວນ ແລະ ປັບປຸງແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ 5 ປີ ຮ່ວມກັບການຈັດຕັ້ງບ້ານ ພ້ອມທັງປະຊົນພາຍໃນບ້ານ/ອົງການຈັດຕັ້ງ......................;

5. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກິດຈະກຳ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ 5 ປີ, ແຜນກິດຈະກຳປະຈຳປີ, ລະບຽບການຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ລາຍງານປະຈຳປີ ຫາ ຄະນະກຳມະການປົກຄອງນະຄອນ/ເມືອງ...... ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ/ແຂວງ............ ກ່ຽວກັບການຈັດຕັ້ງປະຕິບັດສັນຍາ;

7. ສັງລວມຂໍ້ມູນກ່ຽວກັບໃບຢັ້ງຢືນການສຳຫຼວດວັດແທກ, ສັນຍາ ແລະ ເອກະສານທີ່ກ່ຽວຂ້ອງ ເຂົ້າລະບົບຖານຂໍ້ມູນທະບຽນທີ່ດິນ (Lao Land Reg) ພ້ອມທັງເກັບຮັກສາ ສັນຍາທີ່ໄດ້ອະນຸມັດ ແລະ ເອກະສານຊ້ອນທ້າຍ ທັງຕົ້ນສະບັບ ແລະ ສະບັບສຳເນົາ ໄວ້ໃຫ້ຢູ່ໃນສະພາບດີ;

8. ຕິດຕາມ, ແຈ້ງ ແລະ ປຶກສາຫາລື ກັບຄູ່ຮ່ວມສັນຍາ ເພື່ອຄວາມເປັນເອກະພາບ ກ່ຽວກັບການຫັນປ່ຽນປະເພດທີ່ດິນປ່າໄມ້ເປັນທີ່ດິນປະເພດອື່ນ ແລະ ການປ່ຽນແປງ ການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຜົນກະທົບຕໍ່ສິດຕ່າງໆ ຂອງຄູ່ຮ່ວມສັນຍາ ທີ່ລະບຸໄວ້ໃນສັນຍາສະບັບນີ້;

9. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ຄ. ຂໍ້ຫ້າມ ຂອງ "ຝ່າຍ ກ"**

1. ສວຍໃຊ້ໜ້າທີ່ ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;

2. ໃຊ້ສິດໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ປ່ຽນແປງເຂດແດນ, ຍົກຍ້າຍປ້າຍ ຫຼື ຫຼັກໝາຍເຂດແດນຂອງປ່າໄມ້ບ້ານ ທີ່ໄດ້ກຳນົດ ແລະ ຮັບຮອງ ໃນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

4. ອະນຸມັດກິດຈະກຳ ຫຼື ການແບ່ງປັນຜົນປະໂຫຍດທີ່ຂັດກັບ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຫຼື ສັນຍາສະບັບນີ້;

5. ໂອນສິດ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລະບຸໃນສັນຍາ ບ້ານ ຫຼື ສ່ວນໃດໜຶ່ງ ໄປໃຫ້ພາກສ່ວນອື່ນ (ບໍລິສັດ, ອົງການຈັດຕັ້ງ) ໂດຍບໍ່ມີການຕົກລົງເຫັນດີຂອງຄູ່ຮ່ວມສັນຍາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**5.2. ສິດ, ພັນທະ ແລະ ຂໍ້ຫ້າມຂອງ "ຝ່າຍ ຂ"**

**ກ. ສິດຂອງ"ຝ່າຍ ຂ"**

1. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ໄດ້ຮັບຜົນປະໂຫຍດຈາກປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ລະບຸໃນສັນຍາສະບັບນີ້ ແລະ ສອດຄ່ອງກັບກົດໝາຍ, ລະບຽບການ, ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

2. ຮັບຜົນປະໂຫຍດ ຈາກການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອສາທາລະນະປະໂຫຍດ, ທາງທຸລະກິດ (ການໃຊ້ໄມ້ ເພື່ອຈຸດປະສົງການຄ້າສະເພາະ ປ່າຊົມໃຊ້ບ້ານ ໃນເຂດປ່າຜະລິດ ຫຼື ນອກ ສາມປະເພດປ່າ), ໄດ້ຮັບສ່ວນແບ່ງຈາກສິນເຊື່ອກາກບອນ ແລະ ການບໍລິການລະບົບນິເວດຕ່າງໆ ອີງຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ໄດ້ຮັບຮອງ ຕາມກົດໝາຍ ແລະ ລະບຽບການ;

3. ປະກອບຄຳຄິດເຫັນ ແລະ ເຂົ້າຮ່ວມໃນການປຶກສາຫາລື ກອງປະຊຸມໃດໜຶ່ງ ທີ່ອາດຈະສົ່ງຜົນກະທົບຕໍ່ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;

4. ແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງພາຍໃນບ້ານ ເຊັ່ນ ການບຸກລຸກຈັບຈອງທີ່ດິນ, ການລັກລອບຕັດໄມ້ ແລະ ອື່ນໆ ຖ້າບໍ່ສາມາດແກ້ໄຂໄດ້ ສະເໜີຕໍ່ຂັ້ນເທິງພິຈາລະນາແກ້ໄຂ ຕາມກົດໝາຍ ແລະ ລະບຽບການ;

5. ໄດ້ຮັບການທົດແທນຄ່າເສຍຫາຍ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກໍ່ຄວາມເສຍຫາຍຈາກ ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

(ນອກຈາກສິດທີ່ໄດ້ກຳນົດໄວ້ໃນຂ້າງເທິງນີ້ແລ້ວ ໃນເວລາເຮັດສັນຍາຕົວຈິງ ສາມາດນຳເອົາເນື້ອໃນ ມາດຕາ 62, 64, 65, 78 ແລະ 80 ຂອງກົດໝາຍວ່າດ້ວຍປ່າໄມ້ ມາພິຈາລະນາເຂົ້າໃນສັນຍາ ຕາມເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນຕື່ມ).

**ຂ. ພັນທະຂອງ "ຝ່າຍ ຂ"**

1. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ມີຄວາມຍືນຍົງ ໃນຂອບເຂດເນື້ອທີ່ ທັງໝົດ ຂອງປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ລະບຸໃນມາດຕາ 4 ຂອງສັນຍາສະບັບນີ້;

2. ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ດິນເຊາະເຈື່ອນ, ຍຸບລົງ, ເຊື່ອມໂຊມ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ ປ່າໄມ, ທີ່ດິນປ່າໄມ້, ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;

3. ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຕ້ອງໄດ້ປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວສ່ວນຮ້ອຍ (20%) ຂຶ້ນໄປ ໃສ່ທີ່ດິນຕອນນີ້;

4. ແຕ່ງຕັ້ງບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດ ໃນການນຳພາການຈັດຕັ້ງປະຕິບັດ, ຕິດຕາມ ແລະ ລາຍງານ ການຈັດຕັ້ງປະຕິບັດສັນຍາ ຫາຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ..........;

5. ປຸກລະດົມປະຊາຊົນພາຍໃນບ້ານຂອງຕົນ ເຂົ້າໃຈ ທັງປະກອບສ່ວນ ແລະ ເຂົ້າຮ່ວມໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ພ້ອມທັງ ປະຕິບັດ ຫຼື ເສຍພັນທະຂອງ

ດິນ ຕາມສັນຍາ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້;

6. ສະໜອງຂໍ້ມູນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ເມືອງ..........;

7. ປ້ອງກັນ, ຕ້ານ ແລະ ສະກັດກັ້ນ ການບຸກລຸກ ທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້, ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ການລ່າສັດ, ແລະ ກິດຈະກຳອື່ນໆ ທີ່ທຳລາຍທີ່ດິນປ່າໄມ້ ແລະປ່າໄມ້ (ໄຟປ່າ, ການຫັນປ່ຽນທີ່ດິນຜິດກົດໝາຍ ແລະ ອື່ນໆ) ໂດຍປະຊາຊົນ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຈາກພາຍໃນ ຫຼື ຂ້າງນອກບ້ານ ທີ່ຂັດກັບກົດໝາຍ;

8. ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້;

9. ເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນ ຕາມລະບຽບການ;

10.ເກັບຮັກສາ ສັນຍາທີ່ໄດ້ອະນຸມັດ ແລະ ເອກະສານຊ້ອນທ້າຍ ທັງຕົ້ນສະບັບ ແລະ ສະບັບສຳເນົາ ໃຫ້ຢູ່ໃນສະພາບດີ;

11.ປະຕິບັດພັນທະອື່ນຕາມກົດໝາຍ ແລະ ລະບຽບການ.

**ຄ. ຂໍ້ຫ້າມຂອງ "ຝ່າຍ ຂ"**

1. ເອົາສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກໃຫ້ຜູ້ອື່ນ ຫຼື ແລກປ່ຽນ ສິດນຳໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ;

2. ເອົາສິດນຳໃຊ້ທີ່ດິນປ່າໄມ້ ຈາກສິດໄດ້ຮັບໝາກຜົນຈາກທີ່ດິນ ໄປໃຫ້ບຸກຄົນອື່ນ ເຊົ່າ ແລະ ຄ້ຳປະກັນ;

3. ນຳໃຊ້ສິດນຳໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງພາກລັດທີ່ມີສິດຕົກລົງ ຕາມກົດໝາຍ;

4. ປ່ຽນແປງເຂດແດນ, ຍ້າຍປ້າຍ ຫຼື ຫຼັກໝາຍເຂດແດນຂອງປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ທີ່ໄດ້ກຳນົດ ແລະ ຮັບຮອງໃນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

5. ລະເມີດເງື່ອນໄຂຂອງສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ;

6. ຈັດຕັ້ງກິດຈະກຳທີ່ຂັດກັບ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ຫຼື ສັນຍາສະບັບນີ້;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 6 ການແກ້ໄຂ ຂໍ້ຂັດແຍ່ງ

ບັນຫາ ຫຼື ຂໍ້ຂັດແຍ່ງໃດໆທີ່ເກີດຂຶ້ນ ຊຶ່ງກ່ຽວຂ້ອງກັບສັນຍາສະບັບນີ້ ຈະຕ້ອງໄດ້ຮັບການແກ້ໄຂ ແລະ ປຶກສາຫາລືຢ່າງສັນຕິວິທີ ແລະ ເປັນທຳ ລະຫວ່າງຄູ່ສັນຍາ, ຖ້າບໍ່ສຳເລັດ ຫຼື ບໍ່ສາມາດຕົກລົງກັນໄດ້ ໃຫ້ສະເໜີຫາ ຄະນະກຳມະການປົກຄອງນະຄອນ/ເມືອງ.......... ພິຈາລະນາ ຕົກລົງ ແກ້ໄຂ ທາງດ້ານບໍລິຫານ; ໃນກໍລະນີ ຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈ ຕໍ່ການຕົກລົງແກ້ໄຂ ທາງດ້ານບໍລິຫານ ແມ່ນສະເໜີໃຫ້ ຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ/ແຂວງ......... ເປັນຜູ້ຄົ້ນຄວ້າ, ກວດກາ ແລະ ແກ້ໄຂ ບັນຫາດັ່ງກ່າວຕາມກົດໝາຍ. ຖ້າ ຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈ ຕໍ່ການຕົກລົງແກ້ໄຂນັ້ນ ຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ/ແຂວງ.......... ຕ້ອງແຈ້ງໃຫ້ຄູ່ຮ່ວມສັນຍາເປັນລາຍລັກອັກສອນ ນຳບັນຫາດັ່ງກ່າວ ໄປຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາ ຕັດສິນຕາມກົດໝາຍ.

## ມາດຕາ 7 ການຕິດຕາມ, ການລາຍງານ ແລະ ການປະເມີນຜົນ

1. ຄູ່ສັນຍາ ຮ່ວມກັນຕິດຕາມ ກວດກາ ແລະ ປະເມີນຜົນຂອງການຈັດຕັ້ງປະຕິບັດສັນຍາປະຈຳປີ ໂດຍ ອີງໃສ່ ຕົວຊີ້ວັດ ແລະ ມາດຖານຂອງການຕິດຕາມ ແລະ ການປະເມີນຜົນ ທີ່ໄດ້ກຳນົດໃນແຜນກິດຈະກຳປະຈຳປີ;

2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ.......... ລາຍງານປະຈຳປີກ່ຽວກັບການຈັດຕັ້ງປະຕິບັດສັນຍາ ຫາ ຄະນະກຳມະການປົກຄອງນະຄອນ/ເມືອງ.......... ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ/ແຂວງ..........;

3. ສັນຍາສະບັບນີ້ ຕ້ອງໄດ້ຮັບການປະເມີນທຸກໆ ສາມປີ ຮ່ວມກັນທັງສອງຝ່າຍ ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ການພິຈາລະນາການດັດແກ້, ການໂຈະຊົ່ວຄາວ ແລະ ການຍົກເລີກສັນຍາ ທີ່ໄດ້ກຳນົດໄວ້ ໃນມາດຕາ 8 ຂອງສັນຍາສະບັບນີ້.

**ມາດຕາ 8 ການດັດແກ້, ການໂຈະຊົ່ວຄາວ ແລະ ການຍົກເລີກສັນຍາ**

**8.1. ການດັດແກ້ສັນຍາ**

1. ສັນຍາສະບັບນີ້ ຈະຖືກດັດແກ້ ຫຼື ປ່ຽນແປງ ເນື້ອໃນຂອງສັນຍາໄດ້ ກໍຕໍ່ເມື່ອມີການຕົກລົງເຫັນດີເປັນລາຍລັກອັກສອນ ຈາກຄູ່ຮ່ວມສັນຍາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

2. ໃນກໍລະນີການດັດແກ້ສັນຍາຮ່ວມກັບການຈັດຕັ້ງຊຸມຊົນບ້ານ ຕ້ອງຜ່ານການຕົກລົງເຫັນດີຈາກປະຊາຊົນເປັນລາຍລັກອັກສອນ ຢ່າງໜ້ອຍ ສອງສ່ວນສາມຂອງປະຊາຊົນ.

**8.2. ການໂຈະສັນຍາຊົ່ວຄາວ**

1. ການລະເມີດ ກົດໝາຍ, ສັນຍາ, ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ລະບຽບຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ບໍ່ມີຜົນເສຍຫາຍຮ້າຍແຮງ ໂດຍໃຫ້ກຳນົດເວລາທີ່ແນ່ນອນຕໍ່ການແກ້ໄຂການລະເມີດດັ່ງກ່າວ;

2. ບໍ່ປະຕິບັດສິດ, ພັນທະ ແລະ ຂໍ້ຫ້າມທີ່ລະບຸໄວ້ໃນສັນຍາສະບັບນີ້;

3. ມີຫຼັກຖານ ການຈັບຈອງ ແລະ ບຸກລຸກຂະຫຍາຍທີ່ດິນເພີ່ມເຕີມ ແລະ ທຳລາຍປ່າໄມ້ແບບເຈຕະນາ ຫຼື ການເຮັດໃຫ້ປ່າໄມ້ຊຸດໂຊມ;

4. ປົດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດສັນຍາ ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບຄວາມເປັນຈິງ;

5. ບໍ່ປະຕິບັດການແກ້ໄຂບັນຫາຕ່າງໆ ຕາມຜົນຂອງການຕິດຕາມ, ກວດກາໃນແຕ່ລະປີ ພາຍຫຼັງທີ່ໄດ້ຮັບໜັງສືແຈ້ງເຕືອນຈາກ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ;

6. ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ສົ່ງຜົນກະທົບຫຼາຍຕໍ່ ປ່າໄມ້, ທີ່ດິນປ່າໄມ້, ສິ່ງແວດລ້ອມ, ສຸຂະພາບຂອງຄົນ, ສັດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ;

7. ການໂຈະສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ຊົ່ວຄາວ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ............ ອອກແຈ້ງການໃຫ້ ການຈັດຕັ້ງບ້ານ/ອົງການຈັດຕັ້ງ ຮັບຊາບ ກ່ຽວກັບ ການໂຈະສັນຍາດັ່ງກ່າວ ພ້ອມທັງໃຫ້ເຫດຜົນ, ກຳນົດເວລາທີ່ແນ່ນອນໃນການປັບປຸງ ແລະ ແກ້ໄຂ. ໃນໄລຍະເວລາແຈ້ງໂຈະສັນຍາຊົ່ວຄາວ ບໍ່ໃຫ້ "ຝ່າຍ ຂ" ດຳເນີນກິດຈະກຳໃດໆ ຢູ່ໃນທີ່ດິນຕອນດັ່ງກ່າວ; ພາຍຫຼັງ "ຝ່າຍ ຂ" ໄດ້ມີການປັບປຸງ ແລະ ແກ້ໄຂບັນຫາ ໃນໄລຍະເວລາຂອງການໂຈະສັນຍາຊົ່ວຄາວ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ.......... ຕ້ອງສະເໜີຫາ ປະທານຄະນະກຳມະການປົກຄອງນະຄອນ/ເມືອງ.......... ເພື່ອພິຈາລະນາແຈ້ງການຍົກເລີກກ່ຽວກັບການໂຈະສັນຍາຊົ່ວຄາວ ພາຍໃນກຳນົດເວລາ 5 ວັນ ລັດຖະການ ນັບແຕ່ມື້ໄດ້ຮັບການປັບປຸງ ແລະ ແກ້ໄຂສຳເລັດ; ໃນກໍລະນີ ຫາກ "ຝ່າຍ ຂ" ບໍ່ປັບປຸງ ແລະ ແກ້ໄຂບັນຫາ ຕາມກຳນົດເວລາ ທີ່ໄດ້ລະບຸໄວ້ໃນແຈ້ງການໂຈະສັນຍາຊົ່ວຄາວ ຈະເປັນສາເຫດໃຫ້ພິຈາລະນາຍົກເລີກສັນຍາ ຕາມກົດໝາຍ ແລະ ລະບຽບການ.

**8.3. ການຍົກເລີກສັນຍາ**

1. ຄູ່ຮ່ວມສັນຍາ ຕົກລົງເຫັນດີເປັນເອກະພາບກັນ ໃນການຍົກເລີກສັນຍາດ້ວຍຄວາມສະໝັກໃຈ;

2. ບໍ່ປັບປຸງ ແລະ ແກ້ໄຂ ຕາມແຈ້ງການໂຈະສັນຍາຊົ່ວຄາວ ທີ່ໄດ້ກຳນົດໄວ້ໃນຂໍ້ 8.2 ຂ້າງເທິງ;

3. ບໍ່ດຳເນີນກິດຈະກຳໃດໆ ທີ່ລະບຸໄວ້ໃນສັນຍາສະບັບນີ້ ພາຍໃນກຳນົດເວລາ 03 ປີ ນັບແຕ່ວັນໄດ້ເຊັນສັນຍາສະບັບນີ້;

4. ການລະເມີດກົດໝາຍ, ສັນຍາ, ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ລະບຽບຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ສົ່ງຜົນເສຍຫາຍຢ່າງຮ້າຍແຮງຕໍ່ ປ່າໄມ້, ທີ່ດິນປ່າໄມ້, ສິ່ງແວດລ້ອມ, ສຸຂະພາບຂອງຄົນ,

ສັດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ ເຊິ່ງຜົນກະທົບດັ່ງກ່າວບໍ່ສາມາດປັບປຸງ ແລະ ແກ້ໄຂໄດ້;

5. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ.......... ເຮັດໜັງສືສະເໜີ ຫາ ປະທານຄະນະກຳມະການປົກຄອງນະຄອນ/ເມືອງ.......... ພິຈາລະນາຍົກເລີກສັນຍາວ່າດ້ວຍການ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ພ້ອມທັງ ອອກແຈ້ງການໃຫ້ "ຝ່າຍ ຂ" ຢຸດຕິການດຳເນີນກິດຈະກຳຢູ່ໃນທີ່ດິນຕອນດັ່ງກ່າວຕາມກົດໝາຍ.

**ມາດຕາ 9 ບົດບັນຍັດສຸດທ້າຍ**

ສັນຍາສະບັບນີ້ ສ້າງຂຶ້ນບົນພື້ນຖານຄວາມສະໝັກໃຈ ໂດຍການຕົກລົງເຫັນດີເປັນເອກະພາບ ໃນເງື່ອນໄຂທັງໝົດຂອງສັນຍາ ຮ່ວມກັນທັງສອງຝ່າຍ.

ຄູ່ສັນຍາ ໄດ້ຕົກລົງເຫັນດີຮ່ວມກັນ ຕາມ ເນື້ອໃນ ຄວາມໝາຍ ແລະ ຖືກຕ້ອງຕາມຈຸດປະສົງທັງໝົດໃນສັນຍາສະບັບນີ້ ຈຶ່ງພ້ອມກັນລົງລາຍເຊັນ ແລະ ປະທັບຕາໄວ້ ເພື່ອເປັນຫຼັກຖານ;

ສັນຍາສະບັບນີ້ ໄດ້ສ້າງຂຶ້ນ ເປັນ 3 ສະບັບ, ແຕ່ລະສະບັບລ້ວນແຕ່ມີເນື້ອໃນ ແລະ ຄຸນຄ່າເທົ່າທຽມກັນຕໍ່ໜ້າກົດໝາຍ ແລະ ໄດ້ມອບໃຫ້ ຄູ່ສັນຍາ ຝ່າຍລະ ໜຶ່ງ ສະບັບ ແລະ ອີກ ໜຶ່ງ ສະບັບ ມອບໃຫ້ເຈົ້າໜ້າທີ່ທະບຽນສານ ເພື່ອເກັບຮັກສາໄວ້ເປັນຫຼັກຖານ;

ສັນຍາສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

| | |
|---|---|
| **ລາຍເຊັນ "ຝ່າຍ ກ"**<br>**(ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.....)** | **ລາຍເຊັນ "ຝ່າຍ ຂ"**<br>**(ການຈັດຕັ້ງບ້ານ/ອົງການຈັດຕັ້ງ....)** |
| ຊື່ແຈ້ງ:...................................... | ຊື່ແຈ້ງ:...................................... |
| **ຄະນະກຳມະການປົກຄອງຕາແສງ** | **ກອງຄຸ້ມຄອງປ່າ..........** |
| ຊື່ແຈ້ງ:...................................... | ຊື່ແຈ້ງ:...................................... |
| **ອົງການ ທະບຽນສານ** | **ຢັ້ງຢືນ**<br>**ປະທານຄະນະກຳມະການປົກຄອງນະຄອນ/ເມືອງ....** |

**ພະຍານ:**

1............................

2............................

3...........................

**ເອກະສານຊ້ອນທ້າຍ**

- A. ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ
- B. ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ

ສ-ປມ2

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ສັນຍາ

## ວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້

**ລະຫວ່າງ**

**ທ້າວ/ນາງ........... ...................... ..................................**

**ແລະ**

**ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.........................................**

**ເດືອນ.........................., ປີ 20..........................**

ສ-ປມ2

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ/ແຂວງ..........

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ເມືອງ............ ເລກທີ........../..........

...................., ວັນທີ.......................

# ສັນຍາ

## ວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງ ເລກທີ 64 /ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70 /ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍ ປ່າປ້ອງກັນ ຫຼື ປ່າສະຫງວນ ຫຼື ປ່າຜະລິດ ສະບັບເລກທີ..................;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 20/ນຍ, ລົງວັນທີ 05 ພະຈິກ 2024;
- ອີງຕາມ ຄຳແນະນຳຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1821/ກປ, ລົງວັນທີ 26 ພຶດສະພາ 2025;
- ອີງຕາມ ແຜນຈັດສັນ ຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ສະບັບເລກທີ.................................

**ສັນຍາວ່າດ້ວຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ສະບັບນີ້ ໄດ້ສ້າງຂຶ້ນໂດຍ ການຕົກລົງເຫັນດີທັງສອງຝ່າຍ (ເອີ້ນວ່າ ຄູ່ສັນຍາ)**

**ລະຫວ່າງ**

**ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ...................................................**

**ຊຶ່ງຕາງໜ້າໂດຍ ທ່ານ.................................. ຫົວໜ້າ/ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ............................. ຕໍ່ໄປນີ້ເອີ້ນວ່າ "ຝ່າຍ ກ"**

**ແລະ**

**ທ້າວ/ນາງ.................................................................................. ຕໍ່ໄປນີ້ ເອີ້ນວ່າ "ຝ່າຍ ຂ"**

### ມາດຕາ 1 ຈຸດປະສົງ

ສັນຍາສະບັບນີ້ ກຳນົດກ່ຽວກັບ ຫຼັກການ, ເງື່ອນໄຂ, ສິດ, ພັນທະ, ຂໍ້ຫ້າມ ແລະ ມາດຕະການ ໃນການຈັດຕັ້ງປະຕິບັດສັນຍາ ລະຫວ່າງ ທ້າວ/ນາງ..................................... ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ................. ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ແບບຍືນຍົງ ແນໃສ່ຮັບປະກັນຜົນປະໂຫຍດ ຂອງຄູ່ສັນຍາ ບົນພື້ນຖານ ການປະຕິບັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ລວມທັງ ການຕິດຕາມ ກວດກາ, ການປະຕິບັດສິດ ແລະ ພັນທະໃຫ້ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກຳນົດເວລາຂອງສັນຍາ**

ກຳນົດເວລາໃນການຈັດຕັ້ງປະຕິບັດສັນຍາສະບັບນີ້ ມີອາຍຸ............ປີ (ບໍ່ເກີນ ຫ້າສິບ ປີ) ຊຶ່ງເລີ່ມແຕ່ ວັນທີ, ເດືອນ, ປີ.......... ຫາ ວັນທີ, ເດືອນ, ປີ, ....... ແລະ ສາມາດຕໍ່ໄດ້ ຕາມການຕົກລົງເຫັນດີຂອງຄູ່ສັນຍາ.

ໃນການຕໍ່ກຳນົດເວລາຂອງສັນຍາແຕ່ລະຄັ້ງ ຄູ່ສັນຍາ "ຝ່າຍ ຂ" ຕ້ອງສະເໜີເຈດຈຳນົງຢ່າງເປັນລາຍ ລັກອັກສອນ ເຖິງ "ຝ່າຍ ກ" ຢ່າງໜ້ອຍ ສາມ ເດືອນ ກ່ອນກຳນົດເວລາຂອງສັນຍາຈະສິ້ນສຸດ.

**ມາດຕາ 3 ເປົ້າໝາຍຂອງການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ເປົ້າໝາຍການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕ້ອງສອດຄ່ອງກັບ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ບ້ານ /ອົງການຈັດຕັ້ງ................ ຊຶ່ງມີເປົ້າໝາຍນຳໃຊ້ເພື່ອ..............................................

.....................................................................................................................................

.....................................................................................................................................

.....................................................................................................................................

**ມາດຕາ 4 ຂອບເຂດເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນສັນຍາ**

ຂອບເຂດເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ແມ່ນ ນອນຢູ່ໃນທີ່ດິນ........... (ສາມປະເພດປ່າ) ຕາມ ແຜນຈັດສັນຄຸ້ມຄອງປ່າ........ ຕາມໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ ແລະ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ບ້ານ ມີລາຍລະອຽດ ດັ່ງນີ້:

**ຕາຕະລາງ 1: ຂອບເຂດນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນສັນຍາ**

| ລຳດັບ | ນອນໃນເຂດທີ່ດິນປ່າໄມ້ຂອງບ້ານ | ຈຸດພິກັດ | | ເນື້ອທີ່ (ຕາແມັດ) | ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ | |
|---|---|---|---|---|---|---|
| | | N | E | | ເລກທີ | ລົງວັນທີ |
| 1 | ປ່າສະຫງວນ | | | | | |
| 2 | ປ່າປ້ອງກັນ | | | | | |
| 3 | ປ່າຊົມໃຊ້ | | | | | |
| | | | | | | |
| ລວມ | | | | | | |

**ແຜນທີ່ ຂອງຕອນດິນ ພ້ອມທັງຕິດຄັດກັບແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ**

**ມາດຕາ 5 ສິດ, ພັນທະ ແລະ ຂໍ້ຫ້າມຂອງແຕ່ລະຝ່າຍ**

**5.1. ສິດ, ພັນທະ ແລະ ຂໍ້ຫ້າມຂອງ "ຝ່າຍ ກ"**

**ກ. ສິດຂອງ "ຝ່າຍ ກ"**

1. ຊີ້ນໍາ, ຊຸກຍູ້, ຕິດຕາມ, ກວດກາ ການປະຕິບັດ ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

2. ເກັບກໍາຂໍ້ມູນ ການນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ນໍາຝ່າຍ ກ, ການຈັດຕັ້ງຊຸມຊົນບ້ານ ແລະ ປະຊາຊົນພາຍໃນບ້ານ;

3. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີຂອງ "ຝ່າຍ ຂ", ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການປະຕິບັດ ສັນຍາວ່າດ້ວຍຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ;

4. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ໃຫ້ພະແນກກະສິກໍາ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ/ແຂວງ....... ແລະ ຄະນະກໍາມະການປົກຄອງນະຄອນ/ເມືອງ....... ຢ່າງເປັນປົກກະຕິ;

5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຂ. ພັນທະຂອງ "ຝ່າຍ ກ"**

1. ແຕ່ງຕັ້ງພະນັກງານ, ນໍາພາ, ຊຸກຍູ້, ຕິດຕາມກວດກາ ແລະ ລາຍງານ ການຈັດຕັ້ງປະຕິບັດສັນຍາ ສະບັບນີ້;

2. ປົກປ້ອງ ແລະ ຮັບປະກັນສິດການນໍາໃຊ້, ການເຂົ້າເຖິງ ແລະ ການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງ "ຝ່າຍ ກ" ພາຍໃຕ້ສັນຍານີ້ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ;

3. ສະໜອງການບໍລິການດ້ານເຕັກນິກວິຊາການ, ການຈັດຕັ້ງ, ຝຶກອົບຮົມທຸລະກິດ ແລະ ສະໜັບສະໜູນ ລວມທັງ ກົນໄກການແກ້ໄຂຂໍ້ຂັດແຍ່ງ ແລະ ການຈັດຕັ້ງປະຕິບັດ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

4. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກິດຈະກໍາ ຕາມສັນຍາສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ລາຍງານປະຈໍາປີ ຫາ ຄະນະກໍາມະການປົກຄອງນະຄອນ/ເມືອງ....... ແລະ ພະແນກກະສິກໍາ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ/ແຂວງ........... ກ່ຽວກັບການຈັດຕັ້ງປະຕິບັດສັນຍາ;

6. ສັງລວມຂໍ້ມູນກ່ຽວກັບໃບຢັ້ງຢືນການສໍາຫຼວດວັດແທກ, ສັນຍາ ແລະ ເອກະສານທີ່ກ່ຽວຂ້ອງ ເຂົ້າລະບົບຖານ ຂໍ້ມູນທະບຽນທີ່ດິນ (Lao Land Reg) ພ້ອມທັງເກັບຮັກສາ ສັນຍາທີ່ໄດ້ອະນຸມັດ ແລະ ເອກະສານຊ້ອນທ້າຍ ທັງຕົ້ນສະບັບ ແລະ ສະບັບສໍາເນົາ ໄວ້ໃຫ້ຢູ່ໃນສະພາບດີ;

7. ຕິດຕາມ, ແຈ້ງ ແລະ ປຶກສາຫາລື ກັບ "ຝ່າຍ ຂ" ເພື່ອຄວາມເປັນເອກະພາບ ກ່ຽວກັບການຫັນປ່ຽນປະເພດທີ່ດິນປ່າໄມ້ເປັນທີ່ດິນປະເພດອື່ນ ແລະ ການປ່ຽນແປງ ການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ມີຜົນກະທົບຕໍ່ສິດຕ່າງໆ ຂອງ "ຝ່າຍ ຂ" ທີ່ລະບຸໄວ້ໃນສັນຍາສະບັບນີ້;

8. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ຄ. ຂໍ້ຫ້າມຂອງ "ຝ່າຍ ກ"**

1. ສວຍໃຊ້ໜ້າທີ່ ຕໍາແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;

2. ໃຊ້ສິດໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນ;

3. ປ່ຽນແປງເຂດແດນ, ຍົກຍ້າຍປ້າຍ ຫຼື ຫຼັກໝາຍເຂດແດນ ທີ່ໄດ້ກໍານົດໄວ້ໃນສັນຍາສະບັບນີ້ ແລະ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

4. ອະນຸມັດກິດຈະກໍາ ຫຼື ການແບ່ງປັນຜົນປະໂຫຍດທີ່ຂັດກັບ ສັນຍາສະບັບນີ້ ແລະ ແຜນຄຸ້ມຄອງ ທີ່ດິນ ແລະ ປ່າໄມ້ບ້ານ;

5. ໂອນສິດ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລະບຸໃນສັນຍາສະບັບນີ້ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ໄປໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍບໍ່ມີການຕົກລົງເຫັນດີຂອງຄູ່ຮ່ວມສັນຍາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**5.2. ສິດ, ພັນທະ ແລະ ຂໍ້ຫ້າມຂອງ "ຝ່າຍ ຂ"**

**ກ. ສິດຂອງ "ຝ່າຍ ຂ"**

1. ຊົມໃຊ້, ປົກປັກຮັກສາ, ຮັບໝາກຜົນຈາກທີ່ດິນ ໃນບາງກໍລະນີ ເຊັ່ນ ຜົນຜະລິດ (ເກັບກູ້ ໝາກຜົນ ຫຼື ລາຍໄດ້ຈາກການນຳໃຊ້ທີ່ດິນ) ແລະ ສືບທອດສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ລະບຸໃນສັນຍາສະບັບນີ້;

2. ຮັບຜົນປະໂຫຍດ ຈາກການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອດຳລົງຊີວິດ, ທຳມາຫາກິນ ຫຼື ສ້າງເສດຖະກິດຄອບຄົວ, ໄດ້ຮັບສ່ວນແບ່ງຈາກສິນເຊື່ອກາກບອນ ແລະ ການບໍລິການລະບົບນິເວດຕ່າງໆ ຕາມສັນຍາສະບັບນີ້ ໂດຍສອດຄ່ອງກັບແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ກົດໝາຍ ແລະ ລະບຽບການ;

3. ດຳເນີນກິດຈະການປູກໄມ້, ປູກເຄື່ອງປ່າຂອງດົງ, ປູກພືດກະສິກຳ, ກະສິກຳ-ປ່າໄມ້ ແບບປະສົມປະສານ ເພື່ອສ້າງລາຍຮັບ ແລະ ເສດຖະກິດ ໂດຍປະຕິບັດຕາມລະບຽບກົດໝາຍ;

4. ເຂົ້າຮ່ວມປຶກສາຫາລື ແລະ ຍິນຍອມເປັນລາຍລັກອັກສອນ ກ່ຽວກັບການຫັນປ່ຽນປະເພດທີ່ດິນປ່າໄມ້ເປັນທີ່ດິນປະເພດອື່ນ ຢູ່ໃນພື້ນທີ່ດິນທີ່ກ່ຽວຂ້ອງກັບສັນຍາສະບັບນີ້ ທີ່ສົ່ງຜົນກະທົບຕໍ່ສິດຂອງ "ຝ່າຍ ຂ" ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ໄດ້ຮັບຜົນປະໂຫຍດຈາກປ່າໄມ້ ແລະ ທີ່ດິນປ່າໄມ້;

5. ສົ່ງຄືນຂອບເຂດເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ໃນສັນຍາສະບັບນີ້ ໃຫ້ແກ່ການຈັດຕັ້ງບ້ານ ຫຼື ລັດ ແບບສະໝັກໃຈ ຫາກ "ຝ່າຍ ຂ" ບໍ່ມີຄວາມຕ້ອງການໃນການນຳໃຊ້ທີ່ດິນດັ່ງກ່າວ;

6. ໄດ້ຮັບການທົດແທນຄ່າເສຍຫາຍ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກໍ່ຄວາມເສຍຫາຍ ຈາກ ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

ນອກຈາກສິດທີ່ໄດ້ກຳນົດໄວ້ຂ້າງເທິງນີ້ແລ້ວ ໃນເວລາເຮັດສັນຍາຕົວຈິງ ສາມາດນຳເອົາເນື້ອໃນມາດຕາ 62, 63, 64, 65, 78 ແລະ 80 ຂອງກົດໝາຍວ່າດ້ວຍປ່າໄມ້ ມາພິຈາລະນາເຂົ້າໃນສັນຍາ ຕາມເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນຕື່ມ.

**ຂ. ພັນທະຂອງ "ຝ່າຍ ຂ"**

1. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີຄວາມຍືນຍົງ ໃນຂອບເຂດເນື້ອທີ່ຂອງປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທີ່ໄດ້ລະບຸໃນມາດຕາ 4 ຂອງສັນຍາສະບັບນີ້ ແລະ ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

2. ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ດິນ ເຊາະເຈື່ອນ, ຍຸບລົງ, ເຊື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;

3. ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຕ້ອງໄດ້ປູກໄມ້ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ຊາວສ່ວນຮ້ອຍ (20%) ຂຶ້ນໄປ ໃສ່ທີ່ດິນຕອນນີ້;

4. ສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມື ໃນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ ຈຸງານກະສິກຳ ແລະ ປ່າໄມ້ບ້ານ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ;

5. ປ້ອງກັນ, ຕ້ານ ແລະ ສະກັດກັ້ນ ການບຸກລຸກ ທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້, ການເຮັດໃຫ້ປ່າໄມ້ ແລະ ທີ່ດິນປ່າໄມ້ເຊື່ອມໂຊມ, ການລ່າສັດ, ແລະ ກິດຈະກຳອື່ນໆ ທີ່ເປັນການທຳລາຍປ່າໄມ້ ແລະທີ່ດິນປ່າໄມ້ (ໄຟໄໝ້ລາມປ່າ, ການຫັນປ່ຽນປະເພດທີ່ດິນຜິດກົດໝາຍ ແລະ ອື່ນໆ) ໂດຍປະຊາຊົນ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຈາກພາຍໃນ ແລະ ພາຍນອກບ້ານ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

6. ເສຍອາກອນ, ອາກອນທີ່ດິນປະຈຳປີ, ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບທີ່ດິນ ແລະ ປ່າໄມ້ ຕາມກົດໝາຍ ແລະ ລະບຽບການ;

7. ເກັບຮັກສາ ສັນຍາ, ເອກະສານຊ້ອນທ້າຍ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ທັງຕົ້ນສະບັບ ແລະ ສະບັບສຳເນົາ (soft copy) ໄວ້ໃຫ້ຢູ່ໃນສະພາບດີ;

8. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;

9. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

**ຄ. ຂໍ້ຫ້າມຂອງ"ຝ່າຍ ຂ"**

1. ອົາສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກໃຫ້ຜູ້ອື່ນທີ່ບໍ່ແມ່ນສາຍຍາດ ຫຼື ແລກປ່ຽນ ສິດນຳໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ;

2. ເອົາສິດນຳໃຊ້ທີ່ດິນປ່າໄມ້ ຈາກສິດໄດ້ຮັບໝາກຜົນຈາກທີ່ດິນ ໄປໃຫ້ບຸກຄົນອື່ນ ເຊົ່າ ແລະ ຄ້ຳປະກັນ;

3. ນຳໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງທີ່ມີສິດຕົກລົງ ຕາມກົດໝາຍ;

4. ປ່ຽນແປງເຂດແດນ, ຍ້າຍປ້າຍ ຫຼື ຫຼັກໝາຍເຂດແດນຂອງຕອນດິນ ທີ່ລະບຸໃນສັນຍານີ້ ພ້ອມທັງຂອບເຂດປ່າໄມ້ບ້ານ ທີ່ໄດ້ກຳນົດ ແລະ ຮັບຮອງໃນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;

5. ດຳເນີນກິດຈະກຳທີ່ຂັດກັບ ສັນຍາສະບັບນີ້, ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ແລະ ສັນຍາວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ກັບການຈັດຕັ້ງຊຸມຊົນບ້ານ ລວມທັງແຜນຄຸ້ມຄອງຈັດສັນຂອງສາມປະເພດປ່າ;

6. ລະເມີດເງື່ອນໄຂຂອງການເຮັດສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ມາດຕາ 6 ການແກ້ໄຂ ຂໍ້ຂັດແຍ່ງ

ບັນຫາ ຫຼື ຂໍ້ຂັດແຍ່ງໃດໆທີ່ເກີດຂຶ້ນ ຊຶ່ງກ່ຽວຂ້ອງກັບສັນຍາສະບັບນີ້ ຈະຕ້ອງໄດ້ຮັບການແກ້ໄຂ ແລະ ປຶກສາຫາລືຢ່າງສັນຕິວິທີ ແລະ ເປັນທຳ ລະຫວ່າງ ຄູ່ສັນຍາ, ຖ້າບໍ່ສຳເລັດ ຫຼື ບໍ່ສາມາດຕົກລົງກັນໄດ້ ໃຫ້ສະເໜີຫາ ຄະນະກຳມະການປົກຄອງຂັ້ນເມືອງ ພິຈາລະນາ ຕົກລົງ ແກ້ໄຂ ທາງດ້ານບໍລິຫານ; ໃນກໍລະນີ ຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈຕໍ່ການຕົກລົງແກ້ໄຂ ທາງດ້ານບໍລິຫານ ແມ່ນສະເໜີໃຫ້ ຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ/ແຂວງ.... ເປັນຜູ້ຄົ້ນຄວ້າ, ກວດກາ ແລະ ແກ້ໄຂ ບັນຫາດັ່ງກ່າວຕາມກົດໝາຍ. ຖ້າຝ່າຍໃດຝ່າຍໜຶ່ງ ຫາກບໍ່ພໍໃຈ ຕໍ່ການຕົກລົງແກ້ໄຂນັ້ນ ຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ/ແຂວງ.......... ຕ້ອງແຈ້ງໃຫ້ຄູ່ຮ່ວມສັນຍາເປັນລາຍລັກອັກສອນ ນຳບັນຫາດັ່ງກ່າວ ໄປຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາ ຕັດສິນຕາມກົດໝາຍ.

## ມາດຕາ 7 ການຕິດຕາມ, ການລາຍງານ ແລະ ການປະເມີນ

1. ຄູ່ຮ່ວມສັນຍາ ຮ່ວມກັນຕິດຕາມ ກວດກາ ແລະ ປະເມີນຜົນຂອງການຈັດຕັ້ງປະຕິບັດສັນຍາປະຈຳປີໂດຍ ອີງໃສ່ ຕົວຊີ້ວັດ ແລະ ມາດຖານຂອງການຕິດຕາມ ແລະ ການປະເມີນຜົນ ທີ່ໄດ້ກຳນົດໃນແຜນກິດຈະກຳປະຈຳປີ;

2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ/ເມືອງ.......... ລາຍງານປະຈຳປີກ່ຽວກັບການຈັດຕັ້ງປະຕິບັດສັນຍາ ຫາ ຄະນະກຳມະການປົກຄອງນະຄອນ/ເມືອງ.......... ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ/ແຂວງ..........;

3. ສັນຍາສະບັບນີ້ ຕ້ອງໄດ້ຮັບການປະເມີນທຸກໆ ສາມປີ ຮ່ວມກັນທັງສອງຝ່າຍ ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ການພິຈາລະນາການດັດແກ້, ການໂຈະຊົ່ວຄາວ ແລະ ການຍົກເລີກສັນຍາ ທີ່ໄດ້ກຳນົດໄວ້ ໃນມາດຕາ 8 ຂອງສັນຍາສະບັບນີ້.

**ມາດຕາ 8 ການດັດແກ້, ການໂຈະຊົ່ວຄາວ ແລະ ການຍົກເລີກສັນຍາ**

**8.1. ການດັດແກ້ສັນຍາ**

1. ສັນຍາສະບັບນີ້ ຈະຖືກດັດແກ້ ຫຼື ປ່ຽນແປງ ເນື້ອໃນຂອງສັນຍາໄດ້ ກໍຕໍ່ເມື່ອມີການຕົກລົງເຫັນດີເປັນລາຍລັກອັກສອນ ຈາກຄູ່ຮ່ວມສັນຍາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

2. ໃນກໍລະນີການດັດແກ້ສັນຍາຮ່ວມກັບການຈັດຕັ້ງຊຸມຊົນບ້ານ ຕ້ອງຜ່ານການຕົກລົງເຫັນດີຈາກປະຊາຊົນເປັນລາຍລັກອັກສອນ ຢ່າງໜ້ອຍ ສອງສ່ວນສາມຂອງປະຊາຊົນ.

**8.2. ການໂຈະສັນຍາຊົ່ວຄາວ**

1. ການລະເມີດ ກົດໝາຍ, ສັນຍາ, ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ລະບຽບຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ບໍ່ມີຜົນເສຍຫາຍຮ້າຍແຮງ ໂດຍໃຫ້ກໍານົດເວລາທີ່ແນ່ນອນຕໍ່ການແກ້ໄຂການລະເມີດດັ່ງກ່າວ;

2. ບໍ່ປະຕິບັດສິດ, ພັນທະ ແລະ ຂໍ້ຫ້າມທີ່ລະບຸໄວ້ໃນສັນຍາສະບັບນີ້;

3. ມີຫຼັກຖານ ການຈັບຈອງ ແລະ ບຸກລຸກຂະຫຍາຍທີ່ດິນເພີ່ມເຕີມ ແລະ ທໍາລາຍປ່າໄມ້ແບບເຈຕະນາ ຫຼື ການເຮັດໃຫ້ປ່າໄມ້ຊຸດໂຊມ;

4. ປິດບັງ, ເຊື່ອງອໍາ ແລະ ໃຫ້ຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດສັນຍາ ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບຄວາມເປັນຈິງ;

5. ບໍ່ປະຕິບັດການແກ້ໄຂບັນຫາຕ່າງໆ ຕາມຜົນຂອງການຕິດຕາມ, ກວດກາໃນແຕ່ລະປີ ພາຍຫຼັງທີ່ໄດ້ຮັບໜັງສືແຈ້ງເຕືອນຈາກ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຂັ້ນເມືອງ;

6. ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ສິ່ງຜົນກະທົບຫຼາຍຕໍ່ ປ່າໄມ້, ທີ່ດິນປ່າໄມ້, ສິ່ງແວດລ້ອມ, ສຸຂະພາບຂອງຄົນ, ສັດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ;

7. ການໂຈະສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ຊົ່ວຄາວ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມນະຄອນ/ເມືອງ............ ອອກແຈ້ງການໃຫ້ ການຈັດຕັ້ງບ້ານ/ອົງການຈັດຕັ້ງ ຮັບຊາບ ກ່ຽວກັບ ການໂຈະສັນຍາດັ່ງກ່າວ ພ້ອມທັງໃຫ້ເຫດຜົນ, ກໍານົດເວລາທີ່ແນ່ນອນໃນການປັບປຸງ ແລະ ແກ້ໄຂ. ໃນໄລຍະເວລາແຈ້ງໂຈະສັນຍາຊົ່ວຄາວ ບໍ່ໃຫ້ "ຝ່າຍ ຂ" ດໍາເນີນກິດຈະກໍາໃດໆ ຢູ່ໃນທີ່ດິນຕອນດັ່ງກ່າວ; ພາຍຫຼັງ "ຝ່າຍ ຂ" ໄດ້ມີການປັບປຸງ ແລະ ແກ້ໄຂບັນຫາ ໃນໄລຍະເວລາຂອງການໂຈະສັນຍາຊົ່ວຄາວ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມນະຄອນ/ເມືອງ.......... ຕ້ອງສະເໜີຫາ ປະທານຄະນະກໍາມະການປົກຄອງນະຄອນ/ເມືອງ.......... ເພື່ອພິຈາລະນາແຈ້ງການຍົກເລີກກ່ຽວກັບການໂຈະສັນຍາຊົ່ວຄາວ ພາຍໃນກໍານົດເວລາ 5 ວັນ ລັດຖະການ ນັບແຕ່ມື້ໄດ້ຮັບການປັບປຸງ ແລະ ແກ້ໄຂສໍາເລັດ; ໃນກໍລະນີ ຫາກ "ຝ່າຍ ຂ" ບໍ່ປັບປຸງ ແລະ ແກ້ໄຂບັນຫາ ຕາມກໍານົດເວລາ ທີ່ໄດ້ລະບຸໄວ້ໃນແຈ້ງການໂຈະສັນຍາຊົ່ວຄາວ ຈະເປັນສາເຫດໃຫ້ພິຈາລະນາຍົກເລີກສັນຍາ ຕາມກົດໝາຍ ແລະ ລະບຽບການ.

**8.3. ການຍົກເລີກສັນຍາ**

1. ຄູ່ຮ່ວມສັນຍາ ຕົກລົງເຫັນດີເປັນເອກະພາບກັນ ໃນການຍົກເລີກສັນຍາດ້ວຍຄວາມສະໝັກໃຈ;

2. ບໍ່ປັບປຸງ ແລະ ແກ້ໄຂ ຕາມແຈ້ງການໂຈະສັນຍາຊົ່ວຄາວ ທີ່ໄດ້ກໍານົດໄວ້ໃນຂໍ້ 8.2 ຂ້າງເທິງ;

3. ບໍ່ດໍາເນີນກິດຈະກໍາໃດໆ ທີ່ລະບຸໄວ້ໃນສັນຍາສະບັບນີ້ ພາຍໃນກໍານົດເວລາ 03 ປີ ນັບແຕ່ວັນໄດ້ເຊັນສັນຍາສະບັບນີ້;

4. ການລະເມີດກົດໝາຍ, ສັນຍາ, ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ, ລະບຽບຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ ທີ່ສົ່ງຜົນເສຍຫາຍຢ່າງຮ້າຍແຮງຕໍ່ ປ່າໄມ້, ທີ່ດິນປ່າໄມ້, ສິ່ງແວດລ້ອມ, ສຸຂະພາບຂອງຄົນ, ສັດ, ສິ່ງທີ່ມີຊີວິດອື່ນ ແລະ ລະບົບນິເວດ ເຊິ່ງຜົນກະທົບດັ່ງກ່າວບໍ່ສາມາດປັບປຸງ ແລະ ແກ້ໄຂໄດ້;

5. ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມນະຄອນ/ເມືອງ.......... ເຮັດໜັງສືສະເໜີ ຫາ ປະທານຄະນະກໍາມະການປົກຄອງນະຄອນ/ເມືອງ.......... ພິຈາລະນາຍົກເລີກສັນຍາວ່າດ້ວຍການ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ພ້ອມທັງ ອອກແຈ້ງການໃຫ້ "ຝ່າຍ ຂ" ຢຸດຕິການດໍາເນີນກິດຈະກໍາຢູ່ໃນທີ່ດິນຕອນດັ່ງກ່າວຕາມກົດໝາຍ.

**ມາດຕາ 9 ບົດບັນຍັດສຸດທ້າຍ**

ສັນຍາສະບັບນີ້ ສ້າງຂຶ້ນບົນພື້ນຖານຄວາມສະໝັກໃຈ ໂດຍການຕົກລົງເຫັນດີເປັນເອກະພາບ ໃນເງື່ອນໄຂທັງໝົດຂອງສັນຍາ ຮ່ວມກັນທັງສອງຝ່າຍ.

ຄູ່ສັນຍາ ໄດ້ຕົກລົງເຫັນດີຮ່ວມກັນ ຕາມ ເນື້ອໃນ ຄວາມໝາຍ ແລະ ຖືກຕ້ອງຕາມຈຸດປະສົງທັງໝົດໃນສັນຍາສະບັບນີ້ ຈຶ່ງພ້ອມກັນລົງລາຍເຊັນ ແລະ ປະທັບຕາໄວ້ ເພື່ອເປັນຫຼັກຖານ;

ສັນຍາສະບັບນີ້ ໄດ້ສ້າງຂຶ້ນ ເປັນ 3 ສະບັບ, ແຕ່ລະສະບັບລ້ວນແຕ່ມີເນື້ອໃນ ແລະ ຄຸນຄ່າເທົ່າທຽມກັນຕໍ່ໜ້າກົດໝາຍ ແລະ ໄດ້ມອບໃຫ້ ຄູ່ສັນຍາ ຝ່າຍລະ ໜຶ່ງ ສະບັບ ແລະ ອີກ ໜຶ່ງ ສະບັບ ມອບໃຫ້ເຈົ້າໜ້າທີ່ທະບຽນສານ ເພື່ອເກັບຮັກສາໄວ້ເປັນຫຼັກຖານ;

ສັນຍາສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລາຍເຊັນ "ຝ່າຍ ກ"**
**(ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.....)**

**ລາຍເຊັນ "ຝ່າຍ ຂ"**
**(ບຸກຄົນ/ ຄອບຄົວ/ ນິຕິບຸກຄົນ....)**

ຊື່ແຈ້ງ:........................................

ຊື່ແຈ້ງ:........................................

**ຄະນະກຳມະການປົກຄອງຕາແສງ**

**ກອງຄຸ້ມຄອງປ່າ..........**

ຊື່ແຈ້ງ:........................................

ຊື່ແຈ້ງ:........................................

**ອົງການ ທະບຽນສານ**

**ຢັ້ງຢືນ**
**ປະທານຄະນະກຳມະການປົກຄອງນະຄອນ/ເມືອງ....**

**ພະຍານ:**

1............................

2............................

3...........................

**ເອກະສານຊ້ອນທ້າຍ**

- A. ແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ
- B. ໃບຢັ້ງຢືນການສຳຫຼວດວັດແທກທີ່ດິນ

ສ-ປມ 3

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກກະສິກຳ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ/ ແຂວງ....
ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ ເມືອງ....
ເລກທີ:.....................
ອອກຄັ້ງທີ..................

ທີ່ຕັ້ງຕອນດິນ:.............
ແຂວງ:............................
ເມືອງ:............................
ຕາແສງ:...........................
ບ້ານ:..............................
ໜ່ວຍ:.............................

# ສັນຍາ

## ວ່າດ້ວຍ ການນຳໃຊ້ທີ່ດິນປ່າໄມ້
## ( ທີ່ດິນປຸກສ້າງ ແລະ ທີ່ດິນນາ )

**ລະຫວ່າງ**

**ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.................................................**
**ຊຶ່ງຕາງໜ້າໂດຍ ທ່ານ.................................... ຫົວໜ້າ/ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ.............................. ຕໍ່ໄປນີ້ເອີ້ນວ່າ "ຝ່າຍ ກ"**

**ແລະ**

**ທ້າວ/ນາງ........................................................ ຕໍ່ໄປນີ້ເອີ້ນວ່າ "ຝ່າຍ ຂ"**

**1. ກໍລະນີຄູ່ສັນຍາ:**

- **ການຈັດຕັ້ງບ້ານ/ອົງການຈັດຕັ້ງ**:
  ຕາງໜ້າໂດຍທ່ານ............................................ ປະທານບ້ານ........./ຫົວໜ້າ....................................
- **ບຸກຄົນ ຫຼື ຄອບຄົວ**:
  ທ້າວ/ນາງ .............................. ວັນ, ເດືອນ, ປີເກີດ:......................... ສັນຊາດ:........... ອາຊີບ:................
  ທີ່ຢູ່ປັດຈຸບັນ ບ້ານ:.......................................... ໜ່ວຍ:..................... ຕາແສງ: .................................. ..................
  ນະຄອນ/ເມືອງ:................................................ ນະຄອນຫຼວງວຽງຈັນ/ແຂວງ:........................................

**2. ຂໍ້ມູນການນຳໃຊ້ທີ່ດິນປ່າໄມ້:**

ການໄດ້ມາຂອງສິດນຳໃຊ້ທີ່ດິນປ່າໄມ້................................................................................................
ຖານະຄວາມເປັນເຈົ້າຂອງສິດນຳໃຊ້ທີ່ດິນປ່າໄມ້.................................... ປະເພດທີ່ດິນປ່າໄມ້:.........................
ເຂດ:............................ ເປົ້າໝາຍການນຳໃຊ້ທີ່ດິນປ່າໄມ້:........................ ກຳນົດເວລາ......... ປີ................ ປື້ມທະບຽນສັນຍາການນຳໃຊ້ທີ່ດິນເຫຼັ້ມທີ.................... ໃບທີ......................., ແຜນທີ່ຕາດິນເລກທີ:................ ຕອນດິນເລກທີ:.............................. ເນື້ອທີ່ດິນ:.......................... ຕາແມັດ, ມາດຕາສ່ວນ...................

**<u>ແຜນທີ່ຕອນດິນ</u>**




**3. ສິດ, ພັນທະ, ຂໍ້ຫ້າມ ແລະ ການເສຍສິດ ຂອງຜູ້ທີ່ໄດ້ຮັບສັນຍາການນຳໃຊ້ທີ່ດິນປ່າໄມ້:**

**3.1 ສິດ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້**

1) ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້;

2) ໄດ້ຮັບໝາກຜົນຈາກທີ່ດິນປ່າໄມ້ ໃນບາງກໍລະນີ ເຊັ່ນ ຜົນຜະລິດ (ເກັບກູ້ ໝາກຜົນ ຫຼື ລາຍໄດ້ຈາກການນຳໃຊ້ທີ່ດິນ), ສິນເຊື່ອກາກບອນປ່າໄມ້;
3) ສືບທອດສິດນຳໃຊ້ທີ່ດິນປ່າໄມ້ (ຕ້ອງໄດ້ດັດແກ້ສັນຍາ).

**3.2 ພັນທະ ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນປ່າໄມ້**

1) ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ຖືກຕ້ອງຕາມແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ;
2) ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ເຊາະເຈື່ອນ, ຍຸບລົງ, ເຊື່ອມໂຊມ, ຮັກສາຄຸນນະພາບ ໃຫ້ເໝາະສົມ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;
3) ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນສັນຍາສະບັບນີ້ ຢ່າງເຂັ້ມງວດ;
4) ເສຍອາກອນທີ່ດິນປະຈຳປີ, ເສຍຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບທີ່ດິນຕາມລະບຽບການ;
5) ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
6) ປະຕິບັດຕາມກົດໝາຍອື່ນທີ່ກ່ຽວຂ້ອງ.

**3.3 ຂໍ້ຫ້າມ ສຳລັບການໄດ້ຮັບສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

1) ຫ້າມ ເອົາສິດນຳໃຊ້ທີ່ດິນປ່າໄມ້ໃຫ້ຜູ້ອື່ນ ດ້ວຍການຂາຍ, ມອບ, ຍົກໃຫ້ຜູ້ອື່ນທີ່ບໍ່ແມ່ນສາຍຍາດ ຫຼື ແລກປ່ຽນ ສິດນຳໃຊ້ທີ່ດິນ, ການເອົາເຂົ້າເປັນຮຸ້ນ;
2) ຫ້າມ ເອົາສິດນຳໃຊ້ທີ່ດິນປ່າໄມ້ ຈາກສິດໄດ້ຮັບໝາກຜົນຈາກທີ່ດິນ ໄປໃຫ້ບຸກຄົນອື່ນ ເຊົ່າ ແລະ ຄ້ຳປະກັນ;
3) ຫ້າມນຳໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງທີ່ມີສິດຕົກລົງຕາມກົດໝາຍ;
4) ຫ້າມລະເມີດເງື່ອນໄຂຂອງສັນຍາການນຳໃຊ້ທີ່ດິນປ່າໄມ້.

**3.4 ການເສຍສິດ ແລະ ການຍົກເລີກສັນຍາ ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

1) ນຳໃຊ້ທີ່ດິນປ່າໄມ້ ທີ່ລັດມອບໃຫ້ນັ້ນ ບໍ່ຖືກຕາມເປົ້າໝາຍ;
2) ບໍ່ພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້ ຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ລັດມອບໃຫ້ ພາຍໃນກຳນົດເວລາ ສາມ ປີ. ໃນກໍລະນີ ເຊັ່ນ: ບໍ່ນຳໃຊ້ທີ່ດິນປ່າໄມ້ ທີ່ເຮັດກະສິກຳ ແບບໝູນວຽນ, ກະສິກຳປ່າໄມ້ແບບປະສົມປະສານ, ປູກໄມ້ ແລະ ອື່ນໆ ຕາມເວລາ ທີ່ໄດ້ກຳນົດໄວ້ໃນແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ບ້ານ (ແຜນພັດທະນາທີ່ດິນສະເພາະ ເຂດທີ່ອະນຸມັດໃຫ້ ນຳໃຊ້ຕາມສັນຍາ;
3) ບໍ່ເສຍອາກອນທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
4) ຖືກສານຕັດສິນໃຫ້ເສຍສິດນຳໃຊ້ທີ່ດິນປ່າໄມ້;
5) ລະເມີດຂໍ້ຫ້າມທີ່ໄດ້ລະບຸໄວ້ຂໍ້ 3 ຂ້າງເທິງ.

ອອກໃຫ້ທີ່ :........................ ວັນທີ, ເດືອນ, ປີ :.....................

**ການຈັດຕັ້ງບ້ານ/ ຫົວໜ້າອົງການຈັດຕັ້ງ/ບຸກຄົນ/ຄອບຄົວ** **ຫ້ອງການກະສິກຳ ແລະສິ່ງແວດລ້ອມ..............**

**ຄະນະກຳມະການປົກຄອງຕາແສງ** ............. **ກອງຄຸ້ມຄອງປ່າ...................**

**ອົງການ ທະບຽນສານ** **ຢັ້ງຢືນ**
**ປະທານຄະນະກຳມະການປົກຄອງເມືອງ**

**ພະຍານ:**

1............................
2............................
3............................